# ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ
# **(ຜຄສສ)**

## ສໍາລັບ ແຜນງານ
## **“**ການຜັນຂະຫຍາຍແຜນງານຫຼຸດຜ່ອນທາດອາຍເຮືອນແກ້ວ ໂດຍ ການປັບປຸງການຄຸ້ມຄອງບໍລິຫານ ແລະ ຄຸ້ມຄອງພູມີທັດປ່າໄມ້ ແບບ ຍືນຍົງ **(ໂຄງການໄລຍະ2)**

ກະກຽມໂດຍ

ອົງການ ຈີໄອແຊັດ (GIZ)

ເພື່ອສະເໜີຕໍ່

ກອງທຶນດິນຟ້າອາກາດສີຂຽວ (**GCF**)

***ສະບັບທີ 3 (ກັນຍາ 2022)***

ຄຳສັບຫຍໍ້

| | |
|---|---|
| ADB | ທະນາຄານພັດທະນາອາຊີ |
| AE | ອົງການທີ່ໄດ້ຮັບອະນຸຍາດ |
| BMZ | *Bundesministerium für wirtschaftliche Zusammenarbeit und Entwicklung* (ກະຊວງຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ ຂອງລັດຖະບານ ສະຫະພັນ ເຢຍລະມັນ) |
| CSO | ອົງການຈັດຕັ້ງທາງສັງຄົມ |
| DOA | ກົມປູກຝັງ |
| DOF | ກົມປ່າໄມ້ |
| DAFO | ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ |
| DONRE | ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ |
| DPMU | ໜ່ວຍງານຄຸ້ມຄອງໂຄງການຂັ້ນເມືອງ |
| EPF | ກອງທຶນປົກປັກຮັກສາສິ່ງແວດລ້ອມ |
| ER-P | ແຜນງານຫຼຸດຜ່ອນອາຍເຮືອນແກ້ວ |
| ERPD | ເອກະສານໂຄງການຫຼຸດຜ່ອນອາຍເຮືອນແກ້ວ |
| ESIA | ການປະເມີນທາງດ້ານສິ່ງແວດລ້ອມ ແລະ ສັງຄົມ |
| ESMF | ກອບຄຸ້ມຄອງ ສິ່ງແວດລ້ອມ ແລະ ສັງຄົມ |
| ESM Team | ທີມງານຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ |
| ESMP | ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ |
| E&S Policies | ນະໂຍບາຍທາງດ້ານສິ່ງແວດລ້ອມ ແລະ ສັງຄົມ |
| ES risks | ຄວາມສ່ຽງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ |
| FAO | ອົງການອາຫານ ແລະ ກະສິກຳ ຂອງ ອົງການສະຫະປະຊາຊາດ |
| FCPF | ແຜນງານຄູ່ຮ່ວມກາກບອນປ່າໄມ້ |
| FFS | ໂຮງຮຽນຊາວກະສິກອນ |
| FPF | ກອງທຶນປົກປັກຮັກສາປ່າໄມ້ |
| FPIC | ຂະບວນການປຶກສາຫາລື ເພື່ອຄວາມເຫັນດີເຫັນພ້ອມ ດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ |
| GAP | ແຜນບົດບາດ ຍິງ-ຊາຍ |
| GCF | ກອງທຶນດິນຟ້າອາກາດສີຂຽວ |
| GDP | ລວມຍອດຜະລິດຕະພັນພາຍໃນ |
| GIZ | *Deutsche Gesellschaft für Internationale Zusammenarbeit (GIZ) GmbH* (ອົງການ ຈີໄອແຊດ) |
| GoL | ລັດຖະບານ ແຫ່ງ ສປປ ລາວ |

| | |
|---|---|
| HCV | ມີມູນຄ່າທາງດ້ານການອະນຸລັກສູງ |
| HQ | ຫ້ອງການໃຫຍ່ |
| IFAD | ກອງທຶນສາກົນ ເພື່ອການພັດທະນາກະສິກຳ |
| IFC | ການຮ່ວມມືທາງດ້ານການເງິນສາກົນ |
| I-GFLL | ໂຄງການ ຈັດຕັ້ງປະຕິບັດ ການຄຸ້ມຄອງປ່າໄມ້ແບບພູມມີທັດ ແລະ ສິ່ງເສີມຊີວິດການເປັນຢູ່ |
| IP | ຊົນເຜົ່າພື້ນເມືອງ |
| IPP | ນະໂຍບາຍຕໍ່ຊົນເຜົ່າພື້ນເມືອງ |
| JICA | ອົງການຮ່ວມມືສາກົນ ຂອງຍີ່ປຸ່ນ |
| KfW | *Kreditanstalt für Wiederaufbau*<br>(ທະນາຄານພັດທະນາ ຂອງເຢຍລະມັນ) |
| Lao PDR | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| LFND | ແນວລາວສ້າງຊາດ |
| LULUCF | ການນຳໃຊ້ທີ່ດິນ, ການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້ |
| LWU | ສະຫະພັນແມ່ຍິງລາວ |
| LUP | ການວາງແຜນນຳໃຊ້ທີ່ດິນ |
| M&E | ການຕິດຕາມກວດກາ ແລະ ປະເມີນຜົນ |
| MAF | ກະຊວງກະສິກຳ ແລະ ປ່າໄມ້ |
| MONRE | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| NPMU | ໜ່ວຍງານຄຸ້ມຄອງໂຄງການຂັ້ນສູນກາງ |
| NRTF | ຄະນະຊີ້ນຳ ການຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເສື່ອມໂຊມ (REDD+) ຂັ້ນສູນກາງ |
| NTFP | ເຄື່ອງປ່າຂອງດົງ |
| PAFO | ພະແນກກະສິກຳ ແລະ ປ່າໄມ້ ແຂວງ |
| PLUP | ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ |
| PMU | ໜ່ວຍງານຄຸ້ມຄອງໂຄງການ |
| PONRE | ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ |
| PPIO | ພະແນກແຜນການ ແລະ ການລົງທຶນ ແຂວງ |
| PPMU | ໜ່ວຍງານຄຸ້ມຄອງໂຄງການ ຂັ້ນແຂວງ |
| PRO | ຫ້ອງການ REDD+ ຂັ້ນແຂວງ |
| ProCEED | ໂຄງການສະໜັບສະໜູນການສຶກສາສິ່ງແວດລ້ອມ (ເປັນໂຄງການໜຶ່ງ ຂອງ GIZ) |
| PRTF | ຄະນະຊີ້ນຳ ການຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເສື່ອມໂຊມ ຂັ້ນແຂວງ |
| PS | ມາດຕະຖານການປະຕິບັດງານ ການປົກປ້ອງ ຂອງການຮ່ວມມືທາງດ້ານການເງິນສາກົນ (IFC) |

| | |
|---|---|
| PSAP | ການສົ່ງເສີມການຜະລິດກະສິກຳແບບຍືນຍົງ |
| REDD+ | ການຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເສື່ອມໂຊມ, ການອະນຸລັກ, ການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ການຟື້ນຟູປ່າ ໃນປະເທດກຳລັງພັດທະນາ |
| SEDP | ແຜນພັດທະນາເສດຖະກິດ-ສັງຄົມ |
| SFM | ການຄຸ້ມຄອງປ່າໄມ້ແບບຍືນຍົງ |
| tCO2eq | ໂຕນ ຂອງອາຍກາກໂບນິກທຽບເທົ່າ |
| TF | ຄະນະຊີ້ນຳ |
| TOT | ຝຶກອົບຮົມຄູຝຶກ |
| TWG | ກຸ່ມວິຊາການສະເພາະດ້ານ |
| UNI | ຜົນກະທົບທາງລົບ |
| UXO | ລະເບີດທີ່ບໍ່ທັນແຕກ |
| VEC | ອົງປະກອບທີ່ມີຄ່າ ຂອງລະບົບນິເວດ |
| VFMA | ສັນຍາ ວ່າດ້ວຍ ການຈັດສັນຄຸ້ມຄອງປ່າໄມ້ບ້ານ |
| WB | ທະນາຄານໂລກ |

**ສາລະບານ**


1. ພາກສະເໜີ ກ່ຽວກັບ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ....8

2. ໂຄງຮ່າງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ....9

3. ມາດຕະຖານ ແລະ ການປົກປ້ອງ ຂອງໂຄງການ .... 10

4. ຜົນກະທົບທາງລົບທີ່ບໍ່ຕັ້ງໃຈທີ່ເປັນໄປໄດ້ ແລະຄວາມສ່ຽງພາຍນອກ .... 14

5. ບ້ານ ແລະ ຈຸດສຸມຊຸມຊົນ .... 16

6.1. ຄູ່ຮ່ວມງານພາກລັດ .... 17

6.2 ອົງການ ຈີໄອແຊດ (**GIZ**) .... 19

**6.3. ອົງການຈັດຕັ້ງບໍ່ສັງກັດລັດ ແລະ ອົງການຈັດຕັ້ງທາງສັງຄົມ** .... 20

7. ການຈັດຕັ້ງປະຕິບັດແຜນຄຸມຄອງສັງຄົມ ແລະ ສິ່ງແວດລ້ອມ .... 20

7.1 ທີມງານຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ .... 20

7.2. ກອງປະຊຸມຝຶກອົບຮົມ .... 27

8. ງົບປະມານແຜນການຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ .... 27

8.1. ງົບປະມານພະນັກງານ ແລະ ທີ່ປຶກສາ ສໍາລັບ ໂຄງການ 2 (ເອີໂຣ).... 27

8.2. ງົບປະມານກິດຈະກໍາ ແລະ ອຸປະກອນ (ເອີໂຣ).... 28

9. ກິດຈະກໍາ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ .... 29

9.1. ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ກິດຈະກໍາ 1: ການຈັດຕັ້ງປະຕິບັດ ແລະ ການຕິດຕາມ ແຜນຄຸ້ມຄອງ ສັງຄົມ ແລະ ສິ່ງແວດລ້ອມ .... 30

9.2. ກິດຈະກໍາ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ : ການສ້າງຄວາມອາດສາມາດທີ່ກ່ຽວຂ້ອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ.... 37

9.3. ແຜນການຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ກິດຈະກໍາ 3: ຂະບວນການສ້າງຄວາມເຫັນດີເຫັນພ້ອມດ້ວຍຄວາມ ຕື່ມຕົວສະໝັກໃຈ ໂດຍໄດ້ຮັບຂໍ້ມູນລວງໜ້າ (FPIC).... 43

9.4. ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ກິດຈະກໍາ 4: ການມີສ່ວນຮ່ວມຂອງສັງຄົມ .... 47

9.5. ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ກິດຈະກໍາ 5: ບັນຫາການນໍາໃຊ້ທີ່ດິນ, ການຍຶດເອົາທີ່ດິນ ແລະ ການ ຍົກຍ້າຍແບບບໍ່ສະໝັກໃຈ .... 56

9.6. ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ກິດຈະກໍາ 6: ຊີວະນາໆພັນ .... 62

9.7. ການປະຕິບັດ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ 7: ສຸຂະພາບ ແລະ ຄວາມປອດໄພ .... 68

9.8. ການປະຕິບັດ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ **8:** ຄວາມສ່ຽງທີ່ກ່ຽວຂ້ອງກັບການປັບຕົວ ແລະ ການ ຫຼຸດຜ່ອນການປ່ຽນແປງຂອງດິນຟ້າອາກາດ.... 72

9.9. ການປະຕິບັດ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ 9: ກົນໄກການແກ້ໄຂການຮ້ອງທຸກ.......................... 78

ເອກະສານຊ້ອນທ້າຍ:.......................................................................................................................... 1

Anເອກະສານຊ້ອນທ້າຍ 2: ການອະທິບາຍ GRM ເປັນພາສາລາວ ....................................................................8

ເອກະສານຊ້ອນທ້າຍ 3: ກົນໄກແກ້ໄຂການຮ້ອງທຸກ ສໍາລັບໂຄງການ I-GFLLt ............................................... 10

ເອກະສານຊ້ອນທ້າຍ 4: ຂັ້ນຕອນ ທີ່ກ່ຽວຂ້ອງກັບ ສະຖານທີ່ ທີ່ມີລູກລະເບີດບໍ່ທັນແຕກ (UXO) ແລະ ລາຍລະອຽດຫຍໍ້ ກ່ຽວກັບຄວາມປອດໄພ.......................................................................................................................0

ເອກະສານຊ້ອນທ້າຍ 5: ບັນຊີລາຍການກວດກາ ດ້ານສິ່ງແວດລ້ອມ ແລະ ສັງຄົມ ...................................................2

ເອກະສານຊ້ອນທ້າຍ 6: ຂັ້ນຕອນການຊອກຫາໂອກາດ ................................................................................ 11

**ບັນຊີລາຍຊື່ຂອງຕາຕະລາງ**

ຕາຕະລາງ **1:** ນະໂຍບາຍການປົກປ້ອງທີ່ກະຕຸ້ນ ແລະກິດຈະກຳການຫຼຸດຜ່ອນ

ຕາຕະລາງ **2:** ຜົນກະທົບທາງລົບທີ່ບໍ່ໄດ້ຕັ້ງໃຈ ແລະຄວາມສ່ຽງພາຍນອກ

ຕາຕະລາງ **3:** ຄວາມຮັບຜິດຊອບຂອງພະນັກງານ

ຕາຕະລາງ **4:** ຄ່າໃຊ້ຈ່າຍຂອງພະນັກງານ ແລະ ການໃຫ້ຄຳປຶກສາສຳລັບໂຄງການ **2**

ຕາຕະລາງ **5:** ກິດຈະກຳ ແລະຄ່າໃຊ້ຈ່າຍທາງດ້ານວັດຖຸ

ຕາຕະລາງ **6:** ພາບລວມຂອງການປະຕິບັດແຜນການຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ

ຕາຕະລາງ **7:** ປົກປ້ອງເຄື່ອງມືຕິດຕາມກວດກາ

ຕາຕະລາງ **8:** ການຝຶກອົບຮົມ

ຕາຕະລາງ **9:** ຂະບວນການແກ້ໄຂຄຳຮ້ອງທຸກ

ບັນຊີລາຍຊື່ຂອງເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍ **1:** ຕາຕະລາງມາດຕະການຕໍ່ກຸ່ມຊົນເຜົ່າ ເພື່ອຫຼີກລ້ຽງ, ຫຼຸດຜ່ອນ ແລະ ຫຼຸດຜ່ອນຜົນກະທົບທາງລົບ ແລະ ເສີມຂະຫຍາຍຜົນກະທົບທາງບວກ ແລະ ໂອກາດ.

ເອກະສານຊ້ອນທ້າຍ **2:** ຄຳອະທິບາຍ ກົນໄກແກ້ໄຂຄຳຮ້ອງທຸກໃນພາສາລາວ

ເອກະສານຊ້ອນທ້າຍ **3:** ກົນໄກແກ້ໄຂຄຳຮ້ອງທຸກ ສຳລັບໂຄງການ **I-GFLL**

ເອກະສານຊ້ອນທ້າຍ 4: ຂັ້ນຕອນ ທີ່ກ່ຽວຂ້ອງກັບ ສະຖານທີ່ ທີ່ມີລູກລະເບີດບໍ່ທັນແຕກ (UXO) ແລະ ລາຍລະອຽດຫຍໍ້ ກ່ຽວກັບຄວາມປອດໄພ

ເອກະສານຊ້ອນທ້າຍ 5: ບັນຊີລາຍການກວດກາ ດ້ານສິ່ງແວດລ້ອມ ແລະ ສັງຄົມ

ເອກະສານຊ້ອນທ້າຍ 6: ຂັ້ນຕອນການຊອກຫາໂອກາດ

## 1. ພາກສະເໜີ ກ່ຽວກັບ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP)

ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ນີ້ ແມ່ນ ສໍາລັບ ແຜນງານຫຼຸດຜ່ອນອາຍເຮືອນແກ້ວ ໂດຍຜ່ານ ປັບປຸງ ການຄຸ້ມຄອງບໍລິຫານ ແລະ ການຄຸ້ມຄອງພູມີທັດປ່າໄມ້ ແບບຍືນຍົງ (ໂຄງການ 2)". ຈຸດປະສົງຫຼັກ ຂອງແຜນງານ, ທີ່ເປັນ ຈຸດປະສົງທີ່ຕ້ອງການຫັນໄປສູ່ການປ່ຽນແປງຢ່າງເປັນຮູບປະທໍາໃນຂະແໜງການທີ່ກ່ຽວຂ້ອງ, ມີດັ່ງລຸ່ມນີ້: *ເພື່ອສະໜັບສະໜູນ ລັດຖະບານ ແລະ ປະຊາຊົນລາວ ຫັນໄປສູ່ການຄຸ້ມຄອງປ່າໄມ້ ແລະ ພູມສັນຖານແບບຍືນຍົງ ແລະ ທົນທານຕໍ່ດິນຟ້າອາກາດ. ສິ່ງນີ້ຈະຊ່ວຍຫຼຸດຜ່ອນການປ່ອຍອາຍເຮືອນແກ້ວໄດ້ປະມານ* 11.7 *ລ້ານໂຕນ tCO2eq* ແລະ ເພີ່ມຄວາມຢືດຢຸ່ນໂດຍກົງຂອງ ຊາວບ້ານຫຼາຍກວ່າ 273.700 ຄົນ ແລະ 2,112,000 ເຮັກຕາຂອງລະບົບນິເວດໃນໄລຍະໄລຍະເວລາຂອງໂຄງການ 7 ປີຂອງ ການຈັດຕັ້ງປະຕິບັດໂຄງການ 1 ແລະ 2"[1] ເປົ້າໝາຍຂອງໂຄງການແມ່ນສະໜັບສະໜູນການປ່ຽນແປງຢ່າງເປັນລະບົບໃນ ການນໍາໃຊ້ທີ່ດິນ, ການປ່ຽນແປງການນໍາໃຊ້ທີ່ດິນ ແລະ ປ່າໄມ້ (LULUCF) ແລະ ສ້າງຕົວແບບການຄຸ້ມຄອງໃໝ່ ແລະ ແທດເໝາະ ສໍາລັບ ປ່າໄມ້ ແລະ ພູມີທັດ ຂອງປະເທດ.

ເປົ້າໝາຍຂອງ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ແມ່ນເພື່ອເປັນແຜນທີ່ສາມາດປະຕິບັດໄດ້ ໃນການຄຸ້ມ ຄອງຜົນກະທົບດ້ານລົບ ທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ພົວພັນກັບກິດຈະກໍາຕ່າງໆ ຂອງໂຄງການ, ພ້ອມທັງຮັບປະກັນ ໃຫ້ມີການປຶກສາຫາລື ກັບພາກສ່ວນທີ່ກ່ຽວຂ້ອງ ແລະ ໃຫ້ພາກສ່ວນທີ່ກ່ຽວຂ້ອງດັ່ງກ່າວມີສ່ວນຮ່ວມຕະຫຼອດໄລຍະຂອງ ໂຄງການ. ອັນນີ້ຕ້ອງໄດ້ເອົາໃຈໃສ່ບັນຫາຄວາມສ່ຽງຕ່າງໆ, ບຸກຄົນທຸກຍາກ ແລະ ເຜົ່າຕ່າງໆ ທີ່ຈະໄດ້ຮັບຜົນກະທົບຈາກ ການຈັດຕັ້ງປະຕິບັດກິດຈະກໍາຕ່າງໆ ຂອງແຜນງານ. ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMP) ຍັງມີເປົ້າໝາຍ ຊ່ວຍເຫຼືອ ລັດຖະບານ ລາວ ໃນການຮ່ວມມືກັບ ໜ່ວຍງານຄຸ້ມຄອງໂຄງການ ແລະ ທີມງານ ຂອງ ອົງການ ຈີໄອແຊດ (GIZ) ເພື່ອຮັກສາ ແລະ/ຫຼື ປັບປຸງລະບົບການຄຸ້ມືຄອງສິ່ງແວດລ້ອມ ແລະ ສັງຄົມ ຕະຫຼອດໄລຍະການກະກຽມ ແລະ ຈັດຕັ້ງປະຕິບັດ ແຜນງານ.

ຕະຫຼອດໄລຍະການຈັດຕັ້ງປະຕິບັດໂຄງການ, ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ຮັບປະກັນ ໃຫ້ທີມງານ ຂອງແຜນງານ ມີການປ້ອງກັນ ບັນດາກິດຈະກໍາຕ່າງໆ ຂອງແຜນງານ ແລະ ພ້ອມທັງມີການຕິດຕາມກວດກາຜົນກະທົບທາງ ດ້ານສິ່ງແວດລ້ອມ ແລະ ສັງຄົມ ຢ່າງເໝາະສົມ ແລະ ພຽງພໍຕາມທີ່ໄດ້ກໍານົດໄວ. ຫາກພົບເຫັນບ່ອນໃດມີຜົນກະທົບ ແລະ ມີ ຄວາມສ່ຽງທີ່ຈະໄດ້ຮັບຜົນກະທົບ ແລະ ຖ້າວ່າສາມາດຫຼີກລ່ຽງໄດ້ ກໍຕ້ອງການວາງມາດຕະການຢ່າງເໝາະສົມ ພ້ອມທັງຊົດ ເຊີຍຕາມຜົນກະທົບຕົວຈິງ ແລະ ມີການຟື້ນຟູຄືນໃໝ່. ຄໍາຕິຊົມຈາກພາກສ່ວນກ່ຽວຂ້ອງໄດ້ຖືກເກັບກໍາໂດຍກົງໂດຍຜ່ານການ ປຶກສາຫາລືຢູ່ພາກສະໜາມເພື່ອດໍາເນີນການໃນການປັບປຸງ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ນີ້. ອົງການ ຈີໄອແຊດ (GIZ) ແລະ ຄູ່ຮ່ວມງານໂຄງການຈະເປີດເຜີຍ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ນີ້ຜ່ານ ອອນ ໄລນ໌ເພື່ອໃຫ້ປະຊາຊົນສາມາດເຂົ້າເຖິງໄດ້ງ່າຍ. ກົນໄກການແກ້ໄຂຂໍ້ຮ້ອງທຸກ (GRM) ໄດ້ຖືກລວມເຂົ້າຢູ່ໃນບັນດາກິດຈະກໍາ ຂອງ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ນີ້ເພື່ອເກັບກໍາຄໍາຮ້ອງທຸກທີ່ສະແດງອອກກ່ຽວກັບການຈັດຕັ້ງ ປະຕິບັດໂຄງການຖ້າຫາກມີບັນຫາເກີດຂຶ້ນ.

ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ໄດ້ຖືກຮ່າງໃນເບື້ອງຕົ້ນໃນສະພາບການຂອງການສຶກສາຄວາມເປັນໄປ ໄດ້ໂຄງການ 1 ແລະ ນໍາໃຊ້ໂດຍທີມງານປຶກປ້ອງເພື່ອຈັດຕັ້ງປະຕິບັດ. ໃນລະຫວ່າງຂະບວນການພັດທະນາໂຄງການ 2, ສະບັບ

---

[1] Funding Proposal for the *Programme Scaling up the implementation of the Lao PDR Emission Reductions Programme through improved governance and sustainable forest land management (Project 2)* – 16/04/2022

ປັບປຸງນີ້ໄດ້ຖືກຮ່າງຂຶ້ນເພື່ອສະທ້ອນຄຳຄິດເຫັນຂອງພາກສ່ວນກ່ຽວຂ້ອງ, ບົດຮຽນຈາກໂຄງການ 1, ແລະ ເພື່ອປັບຕົວໃນການອອກແບບໂຄງການພາຍໃຕ້ໂຄງການ 2. ມັນຈະມີຜົນບັງຄັບໃຊ້ສຳລັບໂຄງການ 2, ເມື່ອໄດ້ຮັບອະນຸມັດຈາກ ກອງທຶນດິນຟ້າອາກາດສີຂຽວ (GCF). ເພື່ອປັບປຸງຄວາມສາມາດໃນການອ່ານເອກະສານນີ້, ຄຳວ່າ "ໂຄງການ" ຈະໝາຍເຖິງ "ໂຄງການ 2".

## 2. ໂຄງຮ່າງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ

ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ນີ້ແມ່ນຕິດພັນຢ່າງໃກ້ສິດກັບເອກະສານການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESIA), ເອກະສານຊ້ອນທ້າຍ 6a ຂອງບົດສະເໜີໂຄງການ), ແຜນການພັດທະນາຄົນຊົນເຜົ່າ (ເອກະສານຊ້ອນທ້າຍ 6d ຂອງບົດສະເໜີໂຄງການ), ເອກະສານການສຶກສາຄວາມເປັນໄປໄດ້ (ເອກະສານຊ້ອນທ້າຍ 2a ຂອງບົດສະເໜີໂຄງການ) ແລະ ງົບປະມານສຳລັບໂຄງການ 2 (ເອກະສານຊ້ອນທ້າຍ 4 ຂອງບົດສະເໜີໂຄງການ).
ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ກ່ອນອື່ນໝົດ ໄດ້ຈະກຳນົດ ບັນດາມາດຕະຖານ ແລະ ການປົກປ້ອງ ທີ່ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມຈະໄດ້ແກ້ໄຂ ແລະ ຫຼັງຈາກນັ້ນ ແມ່ນຈຳແນກຄວາມແຕກຕ່າງ ລະຫ່ວາງ ຜົນກະທົບທາງລົບ ແລະ ຄວາມສ່ຽງຈາກພາຍນອກ ທີ່ພົວພັນກັບໂຄງການ ຊຶ່ງຈະຕ້ອງໄດ້ປະຕິບັດຕາມບັນດາກິດຈະກຳ ຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ. ທີມງານຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ, ອົງການ ຈີໄອແຊດ (GIZ), ລັດຖະບານ ແຫ່ງ ສປປ ລາວ ແລະ ຊຸ່ມຊົນ ມີ ພາລະບົດບາດ ແລະ ຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດ, ລວມທັງເງື່ອນໄຂທາງດ້ານຄວາມອາດສາມາດ ຂອງອົງກອນ ເພື່ອສະໜັບສະໜູນ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ໂດຍໄດ້ລະບຸໄວ້ ແລະ ພ້ອມທັງໄດ້ຈັດສານງົບປະມານ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP).

ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ສະບັບປັບປຸງນີ້ໄດ້ກຳນົດມີ **9** ກິດຈະກຳ**,** ແບ່ງອອກເປັນ “ກິດຈະກຳກ່ຽວກັບລະບົບ” **(1** ແລະ **2),** ການຕິດຕາມ “ກິດຈະກຳທາງດ້ານວິຊາການ” **(3-8)** ແລະ ຈັດຕັ້ງປະຕິບັດໂດຍ ກົນໄກແກ້ໄຂຄຳຮ້ອງທຸກ (**GRM) (9):**
ໜ້າທີ່ລວມຂອງກິດຈະກຳທີ່ **1 “**ການຈັດຕັ້ງປະຕິບັດ ແລະ ການຕິດຕາມ” ແມ່ນເພື່ອໃຫ້ແນ່ໃຈວ່າທຸກເຄື່ອງມືທີ່ມີຢູ່**,** ເຊິ່ງຮັບປະກັນວ່າບັນດາພາກສ່ວນກ່ຽວຂ້ອງທີ່ໄດ້ຮັບການຝຶກອົບຮົມຢູ່ໃນກິດຈະກຳ **2 “**ການສ້າງຄວາມອາດສາມາດ” ສາມາດປະຕິບັດ “ກິດຈະກຳທາງດ້ານວິຊາການ” **3 - 8** ແລະ ກິດຈະກຳ **9 (GRM).** ດ້ວຍເຫດນີ້ ກິດຈະກຳ **1** ປະກອບມີລາຍລະອຽດຂອງລະບົບການປົກປ້ອງ ແລະ ບົດບາດຍິງຊາຍ (ການຕິດຕາມ).

ການປ່ຽນແປງຂອງກິດຈະກຳພາຍໃນແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ສະບັບນີ້ (ເມື່ອປຽບທຽບກັບ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ຕົ້ນສະບັບ) ເປັນຜົນມາຈາກບົດຮຽນໃນການປະຕິບັດແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ໂດຍທີມງານປົກປ້ອງ, ນອກຈາກນັ້ນ ເພື່ອປັບປຸງໃນການອອກແບບ ແລະ ເນື້ອໃນຂອງໂຄງການ 2. ບົດຮຽນທີ່ຖອດຖອນໄດ້ຈາກ ໂຄງການ 1 ລວມມີຄວາມຕ້ອງການທີ່ຈະຈຳແນກໄດ້ດີກວ່າ "ກິດຈະກຳກ່ຽວກັບລະບົບ" ຈາກ "ກິດຈະກຳທາງວິຊາການ" ແລະ ຈາກສິ່ງທີ່ກ່ຽວຂ້ອງກັບກົນໄກແກ້ໄຂຂໍ້ຮ້ອງທຸກ (GRM), ເນື່ອງຈາກວ່າເຫດຜົນພາຍໃນຂອງພວກເຂົາແມ່ນແຕກຕ່າງກັນໂດຍພື້ນຖານ. ເນື້ອໃນຂອງ “ກິດຈະກຳກ່ຽວກັບລະບົບ” ໃນເມື່ອກ່ອນໄດ້ຖືກເຜີຍແຜ່ໄປໃນຫຼາຍກິດຈະກຳທີ່ແຕກຕ່າງກັນ. ເນື້ອໃນຂອງ “ກິດຈະກຳກ່ຽວກັບລະບົບ” ໃນເມື່ອກ່ອນໄດ້ຖືກເຜີຍແຜ່ໄປໃນຫຼາຍກິດຈະກຳທີ່ແຕກຕ່າງກັນ. ໃນ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ນີ້ໄດ້ຖືກລວມເຂົ້າກັນເປັນກິດຈະກຳ 1 ແລະ 2 ຢ່າງເປັນລະບົບ. ຍິ່ງໄປກວ່ານັ້ນ, ກົນໄກແກ້ໄຂຂໍ້ຮ້ອງທຸກ (GRM) ກ່ອນຫນ້ານີ້ບໍ່ໄດ້ເປັນກິດຈະກຳແຍກຕ່າງຫາກ ແລະ ໃນ

ປັດຈຸບັນແມ່ນໄດ້ແຍກ. ເຊັ່ນດຽວກັນ, ຂະບວນການປຶກສາຫາລື ເພື່ອຄວາມເຫັນດີເຫັນພ້ອມ ດ້ວຍຄວາມຕື່ນຕົວສະໝັກໃຈ ໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ (FPIC) ໃນປັດຈຸບັນແມ່ນເປັນກິດຈະກໍາແບບໂດດດ່ຽວ, ເນັ້ນໜັກເຖິງຄວາມສໍາຄັນຂອງມັນໃນຮອບວຽນໂຄງການ. ນອກຈາກນີ້ "ບັນຫາການນໍາໃຊ້ທີ່ດິນ, ການຍຶດເອົາທີ່ດິນ ແລະ ການຍົກຍ້າຍແບບບໍ່ສະໝັກໃຈ" ແມ່ນກິດຈະກໍາທີ່ແຍກຕ່າງຫາກ, ຍ້ອນໄດ້ໃຫ້ຄວາມສໍາຄັນໃນໂຄງການນີ້. ການປະຕິບັດການກວດສອບຄູ່ຮ່ວມງານທາງທຸລະກິດໃນອະດີດໄດ້ຖືກເຊື່ອມໂຍງເຂົ້າໃນກິດຈະກໍາ 1,4,5,6 ແລະ 7 (ເບິ່ງຕາຕະລາງ 1), ເນື່ອງຈາກວ່າມັນປະກອບເປັນຮ່າງທີ່ຖືກນໍາໃຊ້ເພື່ອຈຸດປະສົງທີ່ແຕກຕ່າງກັນ, ດັ່ງນັ້ນ, ຈຶ່ງໄດ້ຕັດສິນໃຈວ່າມັນບໍ່ມີປະສິດຕິຜົນທີ່ຈະມີກິດຈະກໍາແບບໂດດດ່ຽວ. "ການເສີມສ້າງຄວາມສາມາດໃນການປົກປ້ອງຂອງ ກປສ" ບໍ່ໄດ້ຖືກກ່າວເຖິງວ່າເປັນຂອບເຂດສະເພາະຂອງການສະໜັບສະໜູນໃນໂຄງການ 2 (ເບິ່ງກິດຈະກໍາ 1.1.1 ໃນບົດສະເໜີໂຄງການ) ແລະ ດັ່ງນັ້ນ ຄວາມສາມາດໃນການປົກປ້ອງຂອງ ກປສ ບໍ່ໄດ້ເປັນສ່ວນໜຶ່ງຂອງ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ຂອງໂຄງການ 2.

ພາຍໃນກິດຈະກໍາ, ໂຄງສ້າງ (ຫຼື 'ຮູບແບບ') ຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ສະບັບປັບປຸງນີ້ໄດ້ຖືກປ່ຽນແປງ. ຮູບແບບໃໝ່ໄດ້ຖືກອະທິບາຍຢ່າງລະອຽດໃນກິດຈະກໍາ 1.

<u>ທີມງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ແລະ ການຈັດຕັ້ງປະຕິບັດແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP)</u>

ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ຮຽກຮ້ອງໃຫ້ມີທີມງານຊ່ຽວຊານທີ່ມາຈາກຫຼາຍສາຂາວິຊາ ໃນການສະໜັບສະໜູນການພັດທະນາ, ການສ້າງຄວາມອາດສາມາດ, ຝຶກອົບຮົມ, ຈັດຕັ້ງປະຕິບັດ, ຕິດຕາມກວດກາ ແລະ ປະເມີນ ເພື່ອຈັດຕັ້ງປະຕິບັດບັນດາກິດຈະກໍາໃນແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ນີ້.

ລະບົບການປົກປ້ອງຖືກນໍາໄປສູ່ການດໍາເນີນງານຂອງໂຄງການ ແລະ ດັ່ງນັ້ນຈຶ່ງດໍາເນີນຢ່າງຕໍ່ເນື່ອງ. ການເຊື່ອມໂຍງກິດຈະກໍາຂອງໂຄງການກັບ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) (ເຊັ່ນວ່າ ການນໍາ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ເຂົ້າໄປເຜີຍແຜ່ໃນກອງປະຊຸມ, ການຝຶກອົບຮົມ ແລະ ກິດຈະກໍາຢູ່ໃນສະຖານທີ່) ຈະເປັນສິ່ງຈໍາເປັນ.

## 3. ມາດຕະຖານ ແລະ ການປົກປ້ອງ ຂອງໂຄງການ

ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ນີ້ ໄດ້ຖືກຮ່າງມາ ພາຍໃຕ້ຄໍາຊີ້ນໍາທີ່ໄດ້ມາຈາກການສຶກສາ ແລະ ແປຄວາມໝາຍ ຂອງການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ຊຶ່ງໄດ້ຮັບແຈ້ງມາຈາກ ນະໂຍບາຍທາງດ້ານສັງຄົມ ແລະ ສິ່ງແວດລ້ອມໂດຍໂຄງການ 1 ໄດ້ຮັບການຮັບຮອງໃນ ເດືອນ ມີນາ ປີ 2018 ແລະ ໂຄງການ 2 ໄດ້ຮັບການກະກຽມໃນຕົ້ນປີ 2022, ນະໂຍບາຍຕໍ່ຊົນເຜົ່າພື້ນເມືອງ ຂອງກອງທຶນດິນຟ້າອາກາດສີຂຽວ (GCF) ແລະ ສອດຄ່ອງກັບນະໂຍບາຍ ແລະ ການປົກປ້ອງ ຂອງ ອົງການ ຈີໄອແຊດ (GIZ). ນອກຈາກນັ້ນ ຍັງຄໍານຶງເຖິງຜົນຂອງການສຶກສາກິດຈະກໍາກະກຽມຄວາມພ້ອມ ຂອງແຜນງານຄູ່ຮ່ວມງານກາກບອນປ່າໄມ້ (FCPF), ເພາະສະນັ້ນ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ໄດ້ພິຈາລະນາຢ່າງກວ້າງຂວາງ ທາງດ້ານມາດຕະຖານການດໍາເນີນງານ (PS) ກ່ຽວກັບ ຄວາມຍືນຍົງທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ຂອງອົງການການເງິນສາກົນ (IFC), ນະໂຍບາຍແບບຍືນຍົງ ແລະ ການປົກປ້ອງ ບວກກັບ ລະບົບການຄຸ້ມຄອງບົດບາດຍິງ-ຊາຍ ຂອງ ອົງການ ຈີໄອແຊດ (GIZ), ນະໂຍບາຍການປົກປ້ອງ ຂອງ ທະນາຄານໂລກ ແລະ ນະໂຍບາຍການປົກ

ປ້ອງ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງ ຂອງ ສປປ ລາວ.

ບັນດານະໂຍບາຍເຫຼົ່ານີ້ສະທ້ອນໃຫ້ເຫັນຄວາມເປັນເອກະພາບຢ່າງກວ້າງຂວາງ ກ່ຽວກັບ ຄໍາໝັ້ນສັນຍາ ຂອງ ກອງທຶນດິນຟ້າອາກາດສີຂຽນວ (GCF) ເພື່ອບັນລຸ ຜົນປະໂຫຍດທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ພ້ອມຫຼີກລ້ຽງຜົນກະທົບທາງລົບ ໃນການຈັດຕັ້ງປະຕິບັດກິດຈະກໍາ ໂດຍກົງ ແລະ ລວມທັງ ກິດຈະກໍາທີ່ທາງໂຄງການໃຫ້ການສະໜັບສະໜູນ ພ້ອມທັງເນັ້ນຄວາມສໍາຄັນໃນການເຜີຍແຜ່ຂໍ້ມູນ ຂອງໂຄງການໃຫ້ກັບຄູ່ຮ່ວມງານ ແລະ ປະຊາຊົນ ໄດ້ຮັບຮູ້ ແລະ ເປັນເອກະພາບກັນ. ນະໂຍບາຍການປົກປ້ອງ ຂອງ ກອງທຶນດິນຟ້າອາກາດສີຂຽວ (**GCF**) ໄດ້ລະບຸແຈ້ງ ກ່ຽວກັບ ການເຊື່ອມໂຍງຂໍ້ພິຈາລະນາຕ່າງໆເຂົ້າໃນຂະບວນການຕັດສິນໃຈ ແລະ ການຈັດຕັ້ງປະຕິບັດ ເພື່ອໃຫ້ມີການຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບທາງລົບ ທາງດ້ານສັງຄົມ ແລະ ສິ່ງແວດລ້ອມຢ່າງມີປະສິດທິພາບ ພ້ອມທັງປັບປຸງຜົນໄດ້ຮັບ.

ມາດຕະຖານການປະຕິບັດຂອງໂຄງການ, ຊຶ່ງຈະໄດ້ນໍາໃຊ້ໂດຍກົງກັບໂຄງການ, ແມ່ນ ມາດຕະຖານການປະຕິບັດ (PS)1-2 ແລະ ມາດຕະຖານການປະຕິບັດ (PS)4-8 (ລາຍລະອຽດ ກ່ຽວກັບ ພາບລວມແມ່ນຢູ່ໜ້າຕໍ່ໄປ):

- PS1: ການປະເມີນ ແລະ ການຄຸ້ມຄອງ ຄວາມສ່ຽງ ແລະ ຜົນກະທົບທາງລົບຕໍ່ສິ່ງແວດລ້ອມ
- PS2: ແຮງງານ ແລະ ສະພາບການເຮັດວຽກ
- PS4: ສຸຂະພາບ, ຄວາມປອດໄພ ແລະ ຄວາມໝັ້ນຄົງ ຂອງບ້ານ
- PS5: ການຍຶດທີ່ດິນ ແລະ ການຍົກຍ້າຍຖິ່ນຖານແບບບໍ່ສະໝັກໃຈ
- PS6: ການອະນຸລັກຊີວະນາໆພັນ ແລະ ການຄຸ້ມຄອງຊັບພະຍາກອນທໍາມະຊາດແບບຍືນຍົງ
- PS7: ຊົນເຜົ່າພື້ນເມືອງ
- PS8: ມໍລະດົກທາງດ້ານວັດທະນາທໍາ

ເພາະສະນັ້ນ, ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ໄດ້ສະແດງຄໍາໝັ້ນສັນຍາ ຂອງໂຄງການ ໃນການປະຕິບັດຕາມຫຼັກການ ແລະ ມາດຕະຖານນະໂຍບາຍຕ່າງໆ ຊຶ່ງທາງ ກອງທຶນດິນຟ້າອາກາດສີຂຽວ (GCF) ແລະ ອົງການທີ່ໄດ້ຮັບການຮັບຮອງເຂົ້າເປັນສະມາຊິກ ຂອງກອງທຶນດິນຟ້າອາກາດສີຂຽວ (GCF) ຕ້ອງໄດ້ຮັບຜິດຊອບ. ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ນີ້ ມີຄໍາໝັ້ນສັນຍາ ດັ່ງຕໍ່ໄປນີ້:

- ຫຼີກລ້ຽງ ແລະ ບ່ອນທີ່ບໍ່ສາມາດຫຼີກລ້ຽງໄດ້ ກໍຕ້ອງມີການຫຼຸດຜ່ອນຜົນທະທົບທາງລົບ ໃຫ້ປະຊາຊົນ ແລະ ສິ່ງແວດລ້ອມ;
- ປັບປຸງການເຂົ້າເຖິງຜົນປະໂຫຍດ ຂອງການພັດທະນາຢ່າງເທົ່າທຽມກັນ; ແລະ
- ມີການພິຈາລະນາໃຫ້ພົນລະເມືອງ, ກຸ່ມ ແລະ ບຸກຄົນ ທີ່ມີຄວາມສ່ຽງ (ລວມທັງຜູ້ຍິງ, ເດັກນ້ອຍ, ຄົນພິການ ແລະ ຄົນທຸກຍາກ ດ້ອຍໂອກາດ ຍ້ອນສາເຫດທາງດ້ານເພດ), ບ້ານ, ຊົນເຜົ່າຕ່າງໆ ແລະ ກຸ່ມຄົນ ແລະ ບຸກຄົນທຸກຍາກອື່ນໆ ທີ່ໄດ້ຮັບຜົນກະທົບຈາກການຈັດຕັ້ງປະຕິບັດກິດຈະກໍາຕ່າງໆ ຂອງໂຄງການ.

ຕາຕະລາງ 1: ກິດຈະກຳການຫຼຸດຜ່ອນ ແລະ ການກະຕຸ້ນນະໂຍບາຍປົກປ້ອງ

| ນະໂຍບາຍ ຂອງ ອົງການ ຈີໄອແຊດ (GIZ) / ການປົກປ້ອງ: | ຄວາມສ່ຽງຕາມລາຍການກວດສອບສັງຄົມ ແລະ ສິ່ງແວດລ້ອມ ຂອງ ອົງການ ຈີໄອແຊດ (GIZ) | ພົວພັນກັບມາດຕະຖານການປະຕິບັດ ຂອງ ອົງການການເງິນສາກົນ(IFC): | ມາດຕະການສະເພາະໃນການຫຼຸດຜ່ອນ ຈາກແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) |
|---|---|---|---|
| ນະໂຍບາຍດ້ານຄວາມຍືນຍົງ ຂອງ ອົງການ ຈີໄອແຊດ (GIZ) | ລະດັບກາງ | PS1: ການປະເມີນ ແລະ ການຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບທາງລົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ | ESMP 1: ການຈັດຕັ້ງປະຕິບັດ ແລະ ການຕິດຕາມ<br>ESMP 2: ການສ້າງຄວາມອາດສາມາດຂອງພາກສ່ວນກ່ຽວຂ້ອງ<br>ESMP 3: ຂະບວນການປຶກສາຫາລື ເພື່ອຄວາມເຫັນດີເຫັນພ້ອມ ດ້ວຍຄວາມຕື່ມຕົວສະໝັກໃຈ ໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ (FPIC)<br>ESMP 4: ສັງຄົມມີສ່ວນຮ່ວມ |
| ການປົກປ້ອງ ຂອງ ອົງການ ຈີໄອແຊດ (GIZ): ສິ່ງແວດລ້ອມ | ກາງ | PS3: ປະສິດທິພາບຂອງຊັບພະຍາກອນ ແລະ ການປ້ອງກັນມົນລະພິດ (ບໍ່ໄດ້ໃຊ້)<br>PS 4: ສຸຂະພາບ, ຄວາມປອດໄພ ແລະ ຄວາມໝັ້ນຄົງ ຂອງບ້ານ<br>PS6: ການອະນຸລັກຊີວະນາໆພັນ & ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ (ຄວາມສ່ຽງ: ຕ່ຳ) | ESMP 3: ຂະບວນການປຶກສາຫາລື ເພື່ອຄວາມເຫັນດີເຫັນພ້ອມດ້ວຍຄວາມຕື່ມຕົວສະໝັກໃຈ ໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ (FPIC)<br>ESMP 6: ຊີວະນາໆພັນ<br>ESMP 7: ສຸຂະພາບ ແລະ ຄວາມປອດໄພ<br><br>ການປະເມີນຄູ່ຮ່ວມງານ (ລວມເຂົ້າໃນກິດຈະກຳ 1, 4, 5, 6 ແລະ 7) |
| ການປົກປ້ອງ ຂອງ ອົງການ ຈີໄອແຊດ (GIZ): ການປ່ຽນແປງດິນຟ້າອາກາດ | ຕ່ຳ | PS 4: ສຸຂະພາບ, ຄວາມປອດໄພ ແລະ ຄວາມໝັ້ນຄົງ ຂອງບ້ານ (ຕ່ຳ) n/a | ESMP 8: ຄວາມສ່ຽງທີ່ພົວພັນກັບຜົນກະທົບ ຈາກການປ່ຽນແປງດິນຟ້າອາກາດ |
| ການປົກປ້ອງ | ບໍ່ມີ | | |

| | | | |
|---|---|---|---|
| ຂອງ ອົງການ ຈີໄອແຊດ (GIZ): ຄວາມຂັດແຍ່ງ ແລະ ຄວາມອ່ອນໄຫວຂອງສະພາບການ | | | |
| ການປົກປ້ອງ ຂອງ ອົງການ ຈີໄອແຊດ (GIZ): ສິດທິມະນຸດ | ລະດັບກາງ | ນະໂຍບາຍຕໍ່ຊົນເຜົ່າພື້ນເມືອງ ຂອງ ກອງທຶນດິນຟ້າອາກາດສີຂຽວ (**GCF**)<br>(ຄວາມສ່ຽງ: ລະດັບກາງ)<br>PS2: ແຮງງານ ແລະ ສະພາບການເຮັດວຽກ (ຄວາມສ່ຽງ: ຕໍ່າ)<br>PS4: ສຸຂະພາບ, ຄວາມປອດໄພ ແລະ ຄວາມໝັ້ນຄົງ ຂອງບ້ານ (ຄວາມສ່ຽງ: ລະດັບຕໍ່າ)<br>PS5: ການຊື້ຂາຍດິນ ແລະ ການຕັ້ງຖິ່ນຖານແບບບໍ່ສະໝັກໃຈ (ຄວາມສ່ຽງ: ລະດັບກາງ)<br>PS6: ການອະນຸລັກຊີວະນາໆພັນ & ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ (ຄວາມສ່ຽງ: ຕໍ່າ)<br>PS7: ນະໂຍບາຍຕໍ່ຊົນເຜົ່າພື້ນເມືອງ (ຄວາມສ່ຽງ: ລະດັບກາງ)<br>PS8: ມໍລະດົກວັດທະນະທຳ (ຄວາມສ່ຽງ: ລະດັບກາງ) | ESMP 3: FPIC<br>ESMP 4: ການມີສ່ວນຮ່ວມຂອງສັງຄົມ<br>ESMP 6: ຊີວະນາໆພັນ<br>ESMP 7: ສຸຂະພາບ ແລະ ຄວາມປອດໄພ |
| ການປົກປ້ອງ ຂອງ ອົງການ ຈີໄອແຊດ (GIZ): ບົດບາດຍິງ-ຊາຍ | ບໍ່ມີ | ນະໂຍບາຍບົດບາດຍິງ-ຊາຍ ຂອງກອງທຶນດິນຟ້າອາກາດສີຂຽວ (**GCF**)<br>(ຄວາມສ່ຽງ: ບໍ່ມີ) | ESMP 3: ຂະບວນການປຶກສາຫາລື ເພື່ອຄວາມເຫັນດີເຫັນພ້ອມດ້ວຍຄວາມຕື່ມຕົວສະໝັກໃຈໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ (FPIC)<br>ESMP 4: ການມີສ່ວນຮ່ວມຂອງສັງຄົມ |

## 4. ຜົນກະທົບທາງລົບທີ່ບໍ່ຕັ້ງໃຈທີ່ເປັນໄປໄດ້ ແລະຄວາມສ່ຽງພາຍນອກ

ການປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ (ESIA) (ອີງຕາມພາກທີ່ 5) ແລະ ການສຶກສາຄວາມເປັນໄປໄດ້ ໄດ້ກໍານົດບັນດາຄວາມສ່ຽງທີ່ເປັນໄປໄດ້ຈໍານວນໜຶ່ງ, ຊຶ່ງໄດ້ຈັດແບ່ງອອກເປັນ ຜົນກະທົບທາງລົບແບບບໍ່ຕັ້ງໃຈ (ກະທົບທາງລົບແບບບໍ່ຕັ້ງໃຈ ຫຼື ຄວາມສ່ຽງທາງດ້ານສັງຄົມ ແລະ ສິ່ງແວດລ້ອມ) ທີ່ເປັນຜົນກະທົບໂດຍກົງຈາກການຈັດຕັ້ງປະຕິບັດກິດຈະກໍາ ຂອງໂຄງການ ແລະ ຄວາມສ່ຽງຈາກພາຍນອກ ທີ່ເກີດມາຈາກປັດໄຈອື່ນທີ່ຢູ່ນອກໂຄງການ. ຈຸດສຸມ ຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ຕາມນະໂຍບາຍ ຂອງ ກອງທຶນດິນຟ້າອາກາດສີຂຽວ (GCF) ແລະ ອົງການ ຈີໄອແຊດ (GIZ) ແມ່ນຄຸ້ມຄອງ ຜົນກະທົບທາງລົບແບບບໍ່ຕັ້ງໃຈ(UNIs). ສ່ວນຜົນກະທົບຈາກພາຍນອກ ປົກກະຕິແລ້ວແມ່ນຈະໄດ້ແກ້ຕາມ ກອບວຽກຄຸ້ມຄອງຄວາມສ່ຽງ ຂອງໂຄງການ ແລະ ຈະບໍ່ໄດ້ໃຫ້ລາຍລະອຽດໃນທີ່ນີ້. ແນວໃດກໍຕາມ, ຄວາມສ່ຽງພາຍນອກຈໍານວນໜຶ່ງອາດຈະມີການພົວພັນກັບ ຜົນກະທົບທາງລົບແບບບໍ່ຕັ້ງໃຈ ຂອງໂຄງການຈໍານວນໜຶ່ງ ແລະ ເພາະສະນັ້ນ, ພາຍໃຕ້ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ຈຶ່ງມີຄວາມຈໍາເປັນໃນການຕິດຕາມກວດກາ. ຄວາມສ່ຽງພາຍນອກເຫຼົ່ານີ້ໄດ້ຖືກຄັດເລືອກ ແລະ ຈັດເຂົ້າໃນຕາຕະລາງດັ່ງລຸ່ມນີ້. ນອກຈາກນີ້, ລະບົບການປົກປ້ອງ ຂອງ ອົງການ ຈີໄອແຊດ (GIZ) ໂດຍປົກກະຕິແລ້ວກໍມີການປະເມີນຜົນກະທົບຈາກພາຍນອກທີ່ພົວພັນກັບການປ່ຽນແປງດິນຟ້າອາກາດ.

ຄວາມສ່ຽງເຫຼົ່ານີ້ໄດ້ຖືກສັງລວມໄວ້ໃນຕາຕະລາງດັ່ງລຸ່ມນີ້.

ຕາຕະລາງ 2: ຜົນກະທົບທາງລົບທີ່ບໍ່ໄດ້ຕັ້ງໃຈ ແລະ ຄວາມສ່ຽງພາຍນອກ

| ຜົນກະທົບທາງລົບທີ່ບໍ່ໄດ້ຕັ້ງໃຈ (UNI) ຫຼື ຄວາມສ່ຽງທາງດ້ານສັງຄົມ ແລະ ສິ່ງແວດລ້ອມ | ຄວາມສ່ຽງພາຍນອກ |
|---|---|
| ການນໍາໃຊ້ສານເຄມີ: ການສົ່ງເສີມກະສິກໍາອາດຈະເຮັດໃຫ້ປະຊາຊົນໄດ້ຮັບຜົນກະທົບຈາກການນໍາໃຊ້ ຢາປາບສັດຕູພືດ ແລະ ຢາຂ້າຫຍ້າ | ມີພໍ່ຄ້າທີ່ຊື້ຂາຍສານເຄມີທີ່ເປັນອັນຕະລາຍ (ເຄີຍເກີດຂຶ້ນກັບການປູກກ້ວຍ) ໃຫ້ປະຊາຊົນໃນຊຸມປີຜ່ານມາ ແລະ ໃນປັດຈຸບັນການນໍາໃຊ້ສານເຄມີແມ່ນກາຍເປັນເລື່ອງປົກກະຕິ. |
| ລູກລະເບີດທີ່ຍັງບໍ່ທັນແຕກ (UXO): ແຜນງານຈະເຮັດໃຫ້ມີຄົນເຂົ້າໄປປ່າຫຼາຍຂຶ້ນ ເພື່ອລາດຕະເວນ, ເກັບເຄື່ອງປ່າຂອງດົງ ລວມທັງການຫາຫໍ່ໄມ້ ແລະ ເຮັດການຜະລິດກະສິກໍາ (ໃນພື້ນທີ່ດິນກະສິກໍາ), ຈະເຮັດໃຫ້ພວກເຂົາໄດ້ຮັບອັນຕະລາຍຈາກລູກລະເບີດທີ່ຍັງບໍ່ທັນແຕກ. | ການເປັນພິດຈາກ ລູກລະເບີດທີ່ຍັງບໍ່ທັນແຕກ ອາດຈະສົ່ງຜົນກະທົບຕໍ່ພື້ນດິນ ເມື່ອມີຝົນຕົກໜັກ ຫຼື ນໍ້າຖ້ວມ |
| ການວາງແຜນນໍາໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ອາດນໍາໄປສູ່ການຈັດສັນທີ່ດິນທີ່ເໝາະສົມບໍ່ພຽງພໍ ຖ້າຫາກ ບໍ່ພິຈາລະນາເບິ່ງສະພາບຄວາມເປັນຈິງໃນທ້ອງຖິ່ນ ຫຼື ມີການວາງມາດຕະການຫ້າມທີ່ບໍ່ແທດເໝາະ | ການສໍາປະທານເພື່ອຂຸດຄົ້ນບໍ່ແຮ່, ໄຟຟ້ານໍ້າຕົກ, ການສ້າງທາງລົດ, ທາງລົດໄຟ ອາດຈະນໍາໄປສູ່ການເຄື່ອນຍ້າຍ ຫຼື ຍົກຍ້າຍຖິ່ນຖານ |
| ການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ການປະຕິບັດກົດໝາຍປ່າໄມ້ອາດສົ່ງຜົນຕໍ່ການນໍາໃຊ້ທີ່ດິນຕາມປະເພນີ, ຖ້າຫາກ ບໍ່ພິຈາລະນາເບິ່ງສະພາບຄວາມເປັນຈິງໃນທ້ອງຖິ່ນ ຫຼື ມີການວາງມາດຕະການຫ້າມທີ່ບໍ່ແທດເໝາະ | ການສໍາປະທານເພື່ອຂຸດຄົ້ນບໍ່ແຮ່, ໄຟຟ້ານໍ້າຕົກ, ການສ້າງທາງລົດ, ທາງລົດໄຟ ອາດຈະກະທົບລະບົບນິເວດປ່າໄມ້ ຢ່າງຮ້າຍແຮງ |

| | |
|---|---|
| ການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ການປະຕິບັດກົດໝາຍປ່າໄມ້ອາດສົ່ງຜົນຕໍ່ການເຂົ້າເຖິງມໍລະດົກວັດທະນະທຳ / ສະຖານທີ່ສຳຄັນທາງດ້ານສາສະໜາ, ຖ້າຫາກ ບໍ່ພິຈາລະນາເບິ່ງສະພາບຄວາມເປັນຈິງໃນທ້ອງຖິ່ນ ຫຼື ມີການວາງມາດຕະການຫ້າມທີ່ບໍ່ແທດເໝາະ | ຄວາມບໍ່ສອດຄ່ອງທາງດ້ານນະໂຍບາຍ |
| ແຜນງານນີ້ອາດບໍ່ໄດ້ພິຈາລະນາຢ່າງຄົບຖ້ວນ ຄວາມຕ້ອງການຂອງປະຊາຊົນເຜົ່າຕ່າງໆ (ຕົວຢ່າງ ອຸປະສັກທາງດ້ານພາສາ) ຫຼື ສົ່ງຜົນກະທົບຕໍ່ການນຳໃຊ້ທີ່ດິນຕາມປະເພນີ ຢ່າງຮ້າຍແຮງ | ພະນັກງານລັດບໍ່ພຽງພໍ ຫຼື ຄວາມອາດສາມາດບໍ່ພຽງພໍ |
| ມໍລະດົກທາງດ້ານວັດທະນາທຳ, ລວມທັງທຳມະຊາດທີ່ບໍ່ມີຕົນຕົວ, ອາດຈະປະເຊີນກັບຄວາມສ່ຽງ ຖ້າຫາກມີການປ່ຽນແປງການນຳໃຊ້ທີ່ດິນ ຫຼື ຖ້າວ່າ ມີການຫ້າມສິດໃນການເຂົ້າເຖິງ ຂອງພວກເຂົາ | ຂາດການປຸກຈິດສຳນຶກ ກ່ຽວກັບ ຊົນເຜົ່າ, ບົດບາດຍິງ-ຊາຍ ແລະ ອື່ນໆ ໃນສັງຄົມລາວໂດຍລວມ ພ້ອມທັງຄູ່ຮ່ວມງານ ແລະ ຜູ້ມີສ່ວນຮ່ວມອື່ນໆ |
| ການສົ່ງເສີມການປູກໄມ້ອຸດສາຫະກຳ ແລະ ການຂະຫຍາຍກະສິກຳແບບຖາວອນ ອາດຈະເຮັດໃຫ້ຊີວະນາໆພັນຫຼຸດລົງ, ຖ້າຫາກວ່າ ບໍ່ມີແຜນຄຸ້ມຄອງທີ່ເໝາະສົມ ຫຼື ບໍ່ມີແຜນຄຸ້ມຄອງ. | ການມີສ່ວນຮ່ວມຂອງແມ່ຍິງ, ເດັກນ້ອຍ ແລະ ກຸ່ມຊົນເຜົ່າ ຍັງມີຈຳກັດຫຼາຍ ຍ້ອນການຈັດປະຊຸມຕາມປະເພນີ ທີ່ມີຜູ້ຊາຍຫຼາຍກວ່າ.<br>ການລົງທຶນຈາກພາຍນອກອາດຈະສົ່ງເສີມການປູກ. |
| ໂຄງການນີ້ຈະຮັບປະກັນໃຫ້ມີການປຶກສາຫາລື, FPIC ແລະ ອື່ນໆອີກ. ຫຼື ບຸກຄົນອາດຈະຖືກຂົ່ມຂູ່. ກົນໄກແກ້ໄຂຄາຮ້ອງທຸກ, ຕາມຄຳນິຍາມ, ບໍ່ສາມາດເປີດເຜີຍຊື່ໄດ້, ແຕ່ຂໍ້ມູນກ່ຽວກັບບຸກຄົນນັ້ນຈະຖືກເກັບຮັກສາໄວ້ເປັນຄວາມລັບຢ່າງສົມບູນ. | ຂາດຂໍ້ມູນເສດຖະກິດ-ສັງຄົມ |
| ການປະສານງານ: ໂຄງການນີ້ ຕ້ອງເຮັດໃຫ້ສຳເລັດບາງກິດຈະກຳກ່ອນຈະເລີ່ມກິດຈະກຳອື່ນ. ກິດຈະກຳທີ່ຕ້ອງໄດ້ເຮັດກ່ອນເຊັ່ນ PLUP ແລະ ບາງກິດຈະກຳ ຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ເຊັ່ນ FPIC, ກວດກາລະເບີດທີ່ຍັງບໍ່ທັນແຕກ, ການປຸກຈິດສຳນຶກ ກ່ຽວກັບ ສານເຄມີທີ່ເປັນອັນຕະລາຍ ແລະ ການສ້າງເສັ້ນທຮຸບຖານທາງດ້ານເສດຖະກິດ-ສັງຄົມ ກ່ອນມີການຄຸ້ມຄອງປ່າໄມ້ແບບຍືນຍົງ, ການປະຕິບັດກົດໝາຍປ່າໄມ້ ແລະ ການຈັດຕັ້ງປະຕິບັດກິດຈະກຳດ້ານກະສິກຳ | ການປ່ຽນແປງດິນຟ້າອາກາດອາດຈະສ້າງຜົນກະທົບທາງລົບຕໍ່ຜະລິດຕະພາບກະສິກຳ ແລະ ເພີ່ມການຄ້ຳສະບຽງອາຫານ |
| ແຮງງານ ແລະ ສະພາບການເຮັດວຽກ ສຳລັບພະນັກງານ ທີ່ທາງໂຄງການ ຈ້າງ ຫຼື ພະນັກງານ ຂອງຄູ່ຮ່ວມງານທີ່ເຮັດວຽກນຳໂຄງການນີ້ (ຕົວຢ່າງ ເຮັດວຽກໃນປ່າ) | |

ຄວາມສ່ຽງທີ່ໄດ້ກຳນົດໃນການປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ , ຊຶ່ງອາດຈະພົວພັນກັບ ຜົນກະທົບທາງລົບແບບບໍ່ຕັ້ງໃຈ ແລະ ຈຳເປັນຕ້ອງໄດ້ມີການຕິດຕາມກວດກາ, ລວມທັງ ຂາດຄວາມຮູ້ຂອງການຈັດຕັ້ງ, ຊ່ອງຫວ່າງທາງດ້ານຂໍ້ມູນທຮຸບຖານ ແລະ ບາງພາກສ່ວນ ຂອງລັດຍັງມີຄວາມສາມາດໃນລະດັບຈຳກັດ. ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ໃຫ້ການສະໜັບສະໜູນຍຸດທະສາດການຫຼຸດຜ່ອນ ໂດຍໃຫ້ການສະໜອງກອບວຽກໜຶ່ງພາຍໃນ ຊຶ່ງຂະບວນການ

ຂອງ FPIC ແລະ ນະໂຍບາຍຕໍ່ຊົນເຜົ່າພື້ນເມືອງ (IPP), ທີມງານທີ່ເຊື່ອມໂຍງກັນຕາມສາຍຕັ້ງ ຊຶ່ງປະກອບດ້ວຍພະນັກງານໂຄງການ ແລະ ພາກລັດ ຈະເປັນຜູ້ຄຸ້ມຄອງການເຊື່ອມໂຍງບົດບາດຍິງ-ຊາຍ ແລະ ການສ້າງຄວາມອາດສາມາດ; ຂະບວນການໜຶ່ງໃນການຄຸ້ມຄອງແບບມີການປັບຕົວ ຊຶ່ງມີການເອົາຄວາມເປັນຈິງ ແລະ ຄວາມເຂົ້າໃຈ ຂອງທ້ອງຖິ່ນເຂົ້າໃນແຜນຂອງໂຄງການ ແລະ ການຈັດຕັ້ງປະຕິບັດ. ມາດຕະການຫຼຸດຜ່ອນອື່ນແມ່ນລວມທັງການປັບປຸງຂໍ້ມູນການວາງແຜນນຳໃຊ້ທີ່ດິນ, ການວາງແຜນການສຳປະທານ ແລະ ກໍ່ສ້າງພື້ນຖານໂຄງລ່າງ ແລະ ການຂັດແຍ່ງ ກ່ຽວກັບການນຳໃຊ້ທີ່ດິນ, ພ້ອມທັງ ຖານຂໍ້ມູນ ກ່ຽວກັບ FPIC ແລະ ການມີສ່ວນຮ່ວມຂອງສັງຄົມ ເພື່ອຮັບປະກັນໃຫ້ຊາວບ້ານມີສ່ວນຮ່ວມ.

ຄວາມສ່ຽງທັງໝົດທີ່ໄດ້ຮັບການກຳນົດອອກມາຈະໄດ້ຮັບການແກ້ໄຂຢູ່ໃນແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ນີ້ ແລະ ບາງຄວາມສ່ຽງທີ່ມາຈາກພາຍນອກ, ທາງໂຄງການຈະໄດ້ຕິດຕາມຢ່າງໃກ້ສິດ ເພື່ອຮັບປະກັນວ່າມັນຈະບໍ່ສົ່ງຜົນກະທົບຕໍ່ກິດຈະກຳ ຂອງໂຄງການ ແລະ ຖ້າຫາກວ່າສົ່ງຜົນກະທົບໃດໜຶ່ງກໍຕ້ອງໄດ້ວາງມາດຕະການແກ້ໄຂໄວ. ຕົວຢ່າງຄວາມສ່ຽງຈາກພາຍນອກທີ່ເປັນໄປໄດ້ສູງ ທີ່ພົວພັນກັບຜົນກະທົບແບບບໍ່ຕັ້ງໃຈ ທີ່ສາມາດເຫັນໄດ້ ເຊັ່ນ ການນຳໃຊ້ສານເຄມີໃນການຜະລິດກະສິກຳ. ເຖິງແມ່ນວ່າ ທາງໂຄງການຈະດຳເນີນການກວດສອບທຸລະກິດ, ຊຶ່ງໃຊ້ວິທີລຸ່ມຂຶ້ນເທິງຕໍ່ການພັດທະນາດ້ານກະສິກຳ ໂດຍຜ່ານ ການສົ່ງເສີມການຜະລິດກະສິກຳແບບຍືນຍົງ (PSAP) ແລະ ສະໜັບສະໜູນຮູບແບບການຜະລິດກະສິກຳທີ່ດີ, ການປະຕິບັດການຜະລິດກະສິກຳ 'ແບບພື້ນເມືອງ" ຂອງຊາວບ້ານໃນຊຸມປີຜ່ານມາແມ່ນມີການນຳໃຊ້ຢາຂ້າແມງໄມ້ ແລະ ປຸ໋ຍຫຼາຍຂຶ້ນ. ສິ່ງນີ້ອາດຈະສືບຕໍ່ເຖິງແມ່ນວ່າຈະມີກິດຈະກຳຂອງໂຄງການ ແລະນຳໄປສູ່ຜົນກະທົບຕໍ່ສິ່ງແວດລ້ອມ ຫຼືສຸຂະພາບຂອງມະນຸດຕໍ່ຕາມ.

## 5. ບ້ານ ແລະ ຈຸດສຸມຊຸມຊົນ

ທຸກໆຂົງເຂດວຽກງານຕົ້ນຕໍຂອງໂຄງການແມ່ນໄດ້ຖືກຈັດຕັ້ງປະຕິບັດແບບມີສ່ວນຮ່ວມ ແລະ ການຕັດສິນໃຈແມ່ນເຮັດຢູ່ໃນຂັ້ນບ້ານ (FPIC/PLUP/VFMP/PSAP) ດັ່ງນັ້ນ "ພູມສັນຖານສະເພາະ" ແລະ ການເຊື່ອມໂຍງ "ຄວາມຮູ້ ແລະ ຄວາມເຂົ້າໃຈຂອງທ້ອງຖິ່ນ" ແມ່ນ ປະກົດຂຶ້ນຢູ່ໃນທຸກກິດຈະກຳຂອງໂຄງການ. ລະດັບທ້ອງຖິ່ນ ແລະ ການເກັບກຳຂໍ້ມູນລະອຽດທີ່ກ່າວມາໃນພາກນີ້ ແມ່ນສິ່ງທີ່ໄດ້ເກັບກຳ ແລະ ປຶກສາຫາລືຕົວຈິງກັບຜູ້ໄດ້ຮັບຜົນປະໂຫຍດ ເມື່ອໄດ້ມີການວາງແຜນກິດຈະກຳ ແລະ/ຫຼື ຈັດຕັ້ງປະຕິບັດຢູ່ໃນບ້ານ.

## 6. ການກະກຽມການຈັດຕັ້ງໃນການຈັດຕັ້ງປະຕິບັດ - ພາລະບົດບາດ ແລະ ຄວາມຮັບຜິດຊອບ

ພາກນີ້ຈະໄດ້ເນັ້ນໃສ່ພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງທີມງານໂຄງການທີ່ປະກອບດ້ວຍ ພະນັກງານຈາກ ກົມປ່າໄມ້ ແລະ ຫ້ອງການທີ່ກ່ຽວຂ້ອງ ຂອງກະຊວງກະສິກຳ ແລະ ປ່າໄມ້, ຊ່ຽວຊານ ຂອງ ອົງການ ຈີໄອແຊດ (GIZ), ທີມງານຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ , ຊຶ່ງຈະມີໜ້າທີ່ລວມໃນການຈັດຕັ້ງປະຕິບັດແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ແລະ ຄູ່ຮ່ວມງານອື່ນ ລວມທັງ ອົງຈັດຕັ້ງທີ່ບໍ່ສັງກັດລັດ ແລະ ອົງການຈັດຕັ້ງທັງສັງຄົມ. ຈະມີຊ່ຽວຊານໄລຍະສັ້ນເພີ່ມເຕີມ ເພື່ອສະໜັບສະໜູນບາງກິດຈະກຳສະເພາະ.

ການປະສານງານລະຫວ່າງຄູ່ຮ່ວມງານ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈະເປັນກົນແຈຫຼັກທີ່ນຳໄປສູ່ຜົນສຳເລັດໃນການຈັດຕັ້ງປະຕິບັດແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP). ພາຍໃຕ້ການຊີ້ນຳ ຂອງ ອົງການ ຈີໄອແຊດ (GIZ), ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ຈະມີບົດບາດທີ່ສຳຄັນໃນສະໜອງທຶນຂອງໂຄງການ (ເງິນຊ່ວຍເຫຼືອຫຼ້າ) ໃນນາມຕ່າງໜ້າໃຫ້ ກອງທຶນດິນຟ້າອາກາດສີຂຽວ (**GCF**) ແລະ ກະຊວງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ ຂອງ ສະຫະພັນ ເຢຍລະມັນ (BMZ) ໄປຫາກິດຈະກຳຕ່າງໆໃນທ້ອງຖິ່ນ. ກປສ ຈະຮັບຜິດຊອບບາງວຽກທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ຕາມຄວາມສາມາດ ຂອງຕົນເອງ. ອົງການ ຈີໄອແຊດ (GIZ) ໄດ້ເຮັດບົດລາຍງານການປະເມີນຊ່ອງຫວ່າງ ແລະ ຄວາມອາດສາມາດ ຂອງ ກປສ, ຊຶ່ງໄດ້ຮັບຜົນ ທີ່ໄດ້ລະບຸໄວ້ໃນ ກິດຈະກຳ ຂອງ ຂໍ້ 2 ຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ກ່ຽວກັບ ການສ້າງຄວາມອາດສາມາດ.

### 6.1. ຄູ່ຮ່ວມງານພາກລັດ

ໂຄງການດັ່ງກ່າວຈະໄດ້ຮັບການຊີ້ນຳ/ປະຕິບັດໃນລັກສະນະ ຜ່ານຫຼາຍຂະແໜງການ (ແນວນອນ) ແລະ ຂັ້ນທ້ອງຖິ່ນ (ແນວຕັ້ງ) ໂດຍຜ່ານ ໜ່ວຍງານຄຸ້ມຄອງໂຄງການ/ຄະນະກຳມະການຊີ້ນຳຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ (ເອກະສານສຶກສາຄວາມເປັນໄປໄດ້ ພາກ 4: ການຈັດຕັ້ງປະຕິບັດໂຄງການ; ເຊັ່ນດຽວກັນກັບ ຢູ່ໃນບົດສະເໜີໂຄງການ).

ໜ່ວຍງານຄຸ້ມຄອງໂຄງການຂັ້ນສູນກາງ (NPMU) ແມ່ນຢູ່ພາຍໃຕ້ ກົມປ່າໄມ້ ໃນກະຊວງກະສິກຳ ແລະ ປ່າໄມ້ ຮັບຜິດຊອບໃນການຈັດຕັ້ງປະຕິບັດ ແລະ ລາຍງານ, ລວມທັງການເກັບກຳຂໍ້ມູນໂຄງການຈຳນວນໜຶ່ງ. ໂຄງຮ່າງການຈັດຕັ້ງ ຂອງໜ່ວຍງານຄຸ້ມຄອງໂຄງການຂັ້ນສູນກາງ ຊຶ່ງໄດ້ຮັບການສະໜັບສະໜູນຈາກຄະນະຊີ້ນຳ REDD+ ຂັ້ນສູນກາງ (NRTF) ແລະ 6 ກຸ່ມວິຊາການສະເພາະດ້ານ, ຕາມມາດ້ວຍໜ່ວຍງານຄຸ້ມຄອງໂຄງການຂັ້ນແຂວງ (PPMU) ຢູ່ໃນ 6 ແຂວງ, ຊຶ່ງໄດ້ຮັບການສະໜັບສະໜູນໂດຍກົງຈາກ ຫ້ອງການ REDD+ ຂັ້ນແຂວງ (PRO) ແລະ ຄະນະຊີ້ນຳ REDD+ ຂັ້ນແຂວງ (PRTF), ທັງສອງນີ້ແມ່ນຢູ່ພາຍໃຕ້ ພະແນກກະສິກຳ ແລະ ປ່າໄມ້ແຂວງ (PAFO) ຊຶ່ງເປັນປະທານໃນຄະນະຊີ້ນຳໂຄງການຂັ້ນແຂວງ ເພື່ອຊີ້ນຳ ແລະ ກວດກາ ການຈັດຕັ້ງປະຕິບັດ. ໜ່ວຍງານຄຸ້ມຄອງໂຄງການຂັ້ນແຂວງສະໜັບສະໜູນການສ້າງຄວາມອາດສາມາດດ້ານວິຊາການ, ການຈັດຕັ້ງປະຕິບັດ, ການຄັດເລືອກ, ການກວດກາຕິດຕາມ ແລະ ການລາຍງານ.

ຢູ່ຂັ້ນເມືອງ, ໜ່ວຍງານຄຸ້ມຄອງໂຄງການຂັ້ນເມືອງ (DPMU) ຈະໄດ້ຮັບຄຳຊີ້ນຳໃນການຈັດຕັ້ງປະຕິບັດຈາກ ໜ່ວຍງານຄຸ້ມຄອງໂຄງການ ຂັ້ນແຂວງ ແລະ ຂັ້ນສູນກາງ, ແຕ່ສຸດທ້າຍ ໜ່ວຍງານຄຸ້ມຄອງໂຄງການຂັ້ນເມືອງ ຮັບຜິດຊອບໃນການຈັດຕັ້ງປະຕິບັດກິດຈະກຳ ຂອງໂຄງການຮ່ວມກັບບ້ານ. ດັ່ງນັ້ນ, ໜ່ວຍງານຄຸ້ມຄອງໂຄງການຂັ້ນເມືອງ (DPMU) ແມ່ນຜູ້ປະສານ

ຫຼັກຕໍ່ກັບບ້ານໂຄງການພາຍໃນ 28 ເມືອງເປົ້າໝາຍ. ທີມງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ບໍ່ໄດ້ຕິດຕໍ່ໂດຍກົງກັບ ຜູ້ໄດ້ຮັບຜົນປະໂຫຍດ ຕາມແຜນການ ແລະ ເປັນປະຈຳ. ກົນໄກແກ້ໄຂຄຳຮ້ອງທຸກ (GRM) ອະນຸຍາດໃຫ້ຜູ້ໄດ້ຮັບຜົນປະໂຫຍດຕິດຕໍ່ກັບທີມງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ຕະຫຼອດເວລາ ແລະ ທຸກຄຳຮ້ອງທຸກຈະໄປເຖິງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ໃນທີ່ສຸດ. ຍິ່ງໄປກວ່ານັ້ນ, ທີມງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ໄດ້ນຳເອົາຂໍ້ມູນ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ເຂົ້າໃນຖານຂໍ້ມູນຂອງໂຄງການ. ແຕ່ໜ່ວຍງານຄຸ້ມຄອງໂຄງການຂັ້ນເມືອງ (DPMUs) ແລະ ຜູ້ຈັດຕັ້ງປະຕິບັດແມ່ນຜູ້ມີສ່ວນຮ່ວມດຽວທີ່ຕິດຕໍ່ໂດຍກົງ ແລະ ວາງແຜນການຕິດຕໍ່ກັບບ້ານເປັນປະຈຳ.

ເຖິງແມ່ນວ່າ ໜ່ວຍງານຄຸ້ມຄອງໂຄງການຂັ້ນສູນກາງ (NPMU) ຈະປະສານງານຢ່າງໃກ້ສິດກັບ ອົງການ ຈີໄອແຊດ (GIZ) ເພື່ອຕິດຕາມ ແລະ ຊີ້ນຳການຈັດຕັ້ງປະຕິບັດບັນດາກິດຈະກຳຂອງໂຄງການ, ພ້ອມທັງຊີ້ນຳ ໜ່ວຍງານຄຸ້ມຄອງໂຄງການຂັ້ນແຂວງ (PPMU) ແລະ ໜ່ວຍງານຄຸ້ມຄອງໂຄງການຂັ້ນເມືອງ (DPMU), ແຕ່ວ່າ ໜ່ວຍງານຄຸ້ມຄອງໂຄງການຂັ້ນແຂວງ ແລະ ເມືອງ ຈະຕ້ອງໄດ້ສະໜັບສະໜູນວຽກ ຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ໂດຍ:

- ປະຕິບັດຕາມຄຳແນະນຳ ຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ເມື່ອຈັດຕັ້ງປະຕິບັດກິດຈະກຳ ຂອງໂຄງການໃນພາກສະໜາມ ຕ້ອງມີການປະສານງານຢ່າງໃກ້ສິດກັບ ທີມງານທີ່ປຶກສາ ແລະ/ຫຼື ທີມງານ ຂອງ GIZ/ທີມງານຄຸ້ມຄອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ
- ຈັດຕັ້ງປະຕິບັດກິດຈະກຳ ຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ໂດຍມີການປະສານງານຢ່າງໃກ້ສິດກັບ ທີມງານທີ່ປຶກສາ ແລະ/ຫຼື ທີມງານ ຂອງ ອົງການ ຈີໄອແຊດ (GIZ) /ທີມງານຄຸ້ມຄອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ
- ມີສ່ວນຮ່ວມໃນການເກັບກຳຂໍ້ມູນ ໂດຍມີການປະສານງານຢ່າງໃກ້ສິດກັບ ທີມງານທີ່ປຶກສາ ແລະ/ຫຼື ທີມງານ ຂອງ ອົງການ ຈີໄອແຊດ (GIZ) /ທີມງານຄຸ້ມຄອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ
- ແຕ່ງຕັ້ງຕາງໜ້າເຂົ້າຮ່ວມກອງປະຊຸມ/ຊຸດຝຶກອົບຮົມ.

ນອກຈາກນີ້, ຍັງຕ້ອງມີການປະສານງານຢ່າງໃກ້ສິດ ແລະ ຮ່ວມມືກັບ ບັນດາກະຊວງ, ກົມ, ແຂວງ, ເມືອງ ແລະ ອຳນາດການປົກຄອງບ້ານ, ອົງການຈັດຕັ້ງທາງສັງຄົມ, ຄະນະຊີ້ນຳ, ທີມງານວິຊາການສະເພາະດ້ານ ຕາມຄວາມຈຳເປັນ. ການຈັດຕັ້ງທີ່ມີສ່ວນຮ່ວມມີດັ່ງລຸ່ມນີ້:

- <u>ພາກສ່ວນທີ່ພົວພັນກັບວຽກງານ REDD+</u>: ຄະນະຊີ້ນຳ REDD+ ຂັ້ນສູນກາງ ແລະ ຂັ້ນແຂວງ, ພະແນກ REDD+ ແລະ ຫ້ອງການ REDD+ ແລະ ທີມງານວິຊາການສະເພາະດ້ານ;
- <u>ກະຊວງກະສິກຳ ແລະ ປ່າໄມ້:</u> ລວມທັງສາຍຕັ້ງໄປເຖິງເມືອງ, ລວມທັງສູນບໍລິການ ທີ່ຂຶ້ນກັບເມືອງ; ບັນດາກົມຫຼັກ ແມ່ນກົມປ່າໄມ້, ກົມກວດກາປ່າໄມ້, ພະແນກຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ, ພະແນກປ່າສະຫງວນ, ກົມສົ່ງເສີມກະສິກຳ, ກົມພັດທະນາຊົນນະບົດ ແລະ ສະຫະກອນ ແລະ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ;
- <u>ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ:</u> ລວມທັງສາຍຕັ້ງໄປເຖິງເມືອງ; ລວມທັງກົມທີ່ດິນ;
- <u>ກະຊວງແຜນການ ແລະ ການລົງທຶນ</u>: ລວມທັງສາຍຕັ້ງໄປເຖິງເມືອງ;
- <u>ອຳນາດການປົກຄອງຕ່າງໆ:</u> ຫ້ອງວ່າການແຂວງ ແລະ ເມືອງ, ອຳນາດການປົກຄອງບ້ານ ແລະ ຄະນະຕ່າງໆ;

- <u>ແນວລາວສ້າງຊາດ:</u> ເປັນອົງການຈັດຕັ້ງມະຫາຊົນ ທີ່ມີສາຍຕັ້ງໄປເຖິງຂັ້ນບ້ານ, ໂດຍທົ່ວໄປແລ້ວ ແມ່ນສາມາດຊ່ວຍການປຶກສາຫາລືຢູ່ຂັ້ນທ້ອງຖິ່ນ.
- <u>ສະຫະພັນແມ່ຍິງລາວ</u>: ເປັນອົງການຈັດຕັ້ງມະຫາຊົນ ທີ່ມີສາຍຕັ້ງເຖິງຂັ້ນບ້ານ, ໂດຍທົ່ວໄປແລ້ວ ແມ່ນສາມາດຊ່ວຍການປຶກສາຫາລືຢູ່ຂັ້ນທ້ອງຖິ່ນ.
- <u>ອົງການຈັດຕັ້ງທາງສັງຄົມ:</u> ລວມທັງສາມະຄົມຊາວກະສິກອນ ຫຼື ສະຫະກອນ, ກຸ່ມບ້ານໃດໜຶ່ງທີ່ບໍ່ແມ່ນການຈັດຕັ້ງລັດ. ທີມງານຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ຈະກຳນົດເອົາບັນດາພາກສ່ວນເຫຼົ່ານີ້ ຢູ່ໃນຊ່ວງດຳເນີນຂະບວນການທີ່ສັງຄົມມີສ່ວນຮ່ວມ (ເບິ່ງ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ກິດຈະກຳ 1: ການຈັດຕັ້ງປະຕິບັດ ແລະ ການຕິດຕາມ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ພ້ອມທັງ ກິດຈະກຳ 4: ການມີສ່ວນຮ່ວມທາງສັງຄົມ).

*ນອກຈາກນີ້, ຍັງຈະມີການຈັດຕັ້ງພາກລັດຈຳນວນໜຶ່ງ ທີ່ຈະມີສ່ວນຮ່ວມໃນການຈັດຕັ້ງປະຕິບັດກິດຈະກຳຈຳນວນໜຶ່ງຕາມຄວາມເໝາະສົມ, ຊຶ່ງລາຍລະອຽດແມ່ນມີຢູ່ໃນ ພາກ 9: ຕາຕະລາງກິດຈະກຳດັ່ງລຸ່ມນີ້.*

## 6.2 ອົງການ ຈີໄອແຊດ (GIZ)

ອົງການ ຈີໄອແຊດ (GIZ) ຈະຮັບຜິດຊອບດັ່ງລຸ່ມນີ້

1. ຮັບຜິດຊອບໂຄງການ ແລະ ບັນດາກິດຈະກຳ ໂດຍລວມ ຮ່ວມກັບ ກອງທຶນດິນຟ້າອາກາດສີຂຽວ (**GCF**) (ຕາມສັນຍາ)
2. ເສີມສ້າງຄວາມເຂັ້ມແຂງ ແລະ ປະກອບສ່ວນເປັນສ່ວນໜຶ່ງ ໃນໂຄງຮ່າງການຈັດຕັ້ງ ຂອງໂຄງການ (ໜ່ວຍງານຄຸ້ມຄອງໂຄງການຂັ້ນສູນກາງ, ແຂວງ ແລະ ເມືອງ)
3. ຈ້າງຊ່ຽວຊານ, ທີມງານຄຸ້ມຄອງສິ່ງແວດລ້ອມ ແລະ ພະນັກງານໂຄງການດັ່ງຕໍ່ໄປນີ້
4. ຮັບປະກັນໃຫ້ມີການຕິດຕາມ ແລະ ປັບປຸງ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP)
5. ຄຸ້ມຄອງ ແລະ ຈັດສັນງົບປະມານ ລວມທັງງົບທີ່ຜ່ານ ກປສ ແລະ ຄຸ້ມຄອງໂດຍກົງຢູ່ໃນລະດັບທີ່ຈຳກັດໃດໜຶ່ງ
6. ສື່ສານກິດຈະກຳ ຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ໃຫ້ພາກສ່ວນທີ່ກ່ຽວຂ້ອງ ລວມທັງ ອົງການຈັດຕັ້ງລັດ.
7. ສື່ສານກິດຈະກຳ ຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ໃຫ້ພາຍນອກ ໂດຍອີງຕາມນະໂຍບາຍສັງຄົມ ແລະ ສິ່ງແວດລ້ອມ ຂອງ ກອງທຶນດິນຟ້າອາກາດສີຂຽວ (**GCF**)

ຮັບປະກັນໃຫ້ທີ່ປຶກສາມີທັດສະທາງດ້ານສັງຄົມ ແລະ ສິ່ງແວດລ້ອມໃນລະດັບໃດໜຶ່ງ ແລະ ໃຫ້ພື້ນຖານດີ ກ່ຽວກັບ ການປະຕິບັດທີ່ດີໃນລະດັບສາກົນ ແລະ ຄວາມຮູ້ພື້ນຖານໃນທ້ອງຖິ່ນ. ອົງການ ຈີໄອແຊດ (GIZ) ຈະຕ້ອງຮັບປະກັນໃຫ້ທີມງານຊ່ຽວຊານມີຄວາມຮູ້ ແລະ ປະສົບການ ກ່ຽວກັບ ການພັດທະນາເສດຖະກິດ, ສັງຄົມ/ວັດທະນະທຳ, ຄວາມຊື່ສັດ, ການອະນຸລັກປ່າໄມ້/ຊັບພະຍາກອນທຳມະຊາດ, ເຊັ່ນດຽວກັນກັບ ການສ້າງຄວາມອາດສາມາດ, ການຄຸ້ມຄອງ ແລະ ການຕິດຕາມກວດກາ ແລະ ປະເມີນຜົນ.

## 6.3. ອົງການຈັດຕັ້ງບໍ່ສັງກັດລັດ ແລະ ອົງການຈັດຕັ້ງທາງສັງຄົມ

ຂໍ້ 2.2 ຂອງການປະເມີນຜົນກະທົບທາງສັງຄົມ ແລະ ສິ່ງແວດລ້ອມ ປະກອບດ້ວຍ ຄໍາແນະນໍາສະເພາະ ເພື່ອເຮັດວຽກຮ່ວມກັບອົງການຈັດຕັ້ງບໍ່ສັງກັດລັດ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດໃນຂັ້ນບ້ານ ແລະ ພ້ອມທັງສ້າງຄວາມອາດສາມາດໃຫ້ພວກເຂົາເອງ ເພື່ອໃຫ້ພວກເຂົາສາມາດ:

- ເປັນຕົວແທນໃຫ້ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGO)/ອົງການຈັດຕັ້ງທາງສັງຄົມ (CSO) ຢູ່ໃນຄະນະຊີ້ນໍາໂຄງການ
- ເຂົ້າຮ່ວມໃນຂະບວນການ ຂອງ FPIC ແລະ ການປຶກສາຫາລືຕ່າງໆ
- ປະກອບສ່ວນເຂົ້າໃນການຕິດຕາມກວດກາ ແລະ ປະເມີນຜົນ ແລະ ການຮຽນຮູ້ອື່ນໆໃນໂຄງການ

ທີມງານກະກຽມໂຄງການໄດ້ກໍານົດເອົາບັນດາອົງການຈັດຕັ້ງບໍ່ສັງກັດລັດ ແລະ ອົງການຈັດຕັ້ງທາງສັງຄົມ ໂດຍອີງໃສ່ວິທີການປະຕິບັດທີ່ດີທີ່ສຸດ ຂອງໂຄງການຕ່າງໆ ຂອງ ອົງການ ຈີໄອແຊດ (GIZ) ກ່ຽວກັບ ການປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງບໍລິຫານ ແລະ ການຄ້າໄມ້ (FLEGT) ແລະ ການອະນຸລັກຊີວະນາໆພັນ ໃນ ສປປ ລາວ: ສະຫະພັນແມ່ຍິງລາວ (ລວມທັງຂັ້ນສູນກາງ, ແຂວງ ແລະ ເມືອງ); ອົງການສາກົນເພື່ອພັດທະນາບ້ານ (VFI); ສູນເພື່ອປະຊາຊົນ ແລະ ປ່າໄມ້ (RECOFTC); ເຄືອຂ່າຍອົງການຈັດຕັ້ງທາງສັງຄົມ ກ່ຽວກັບ FLEGT – ລວມທັງ ພັນທະມິດບ້ານສີຂຽວ (GCA), ສາມະຄົມສົ່ງເສີມຄວາມຮູ້ການສຶກສາຄົ້ນຄວ້າ ແລະ ພັດທະນາຊົນນະບົດ (RRDPA), ສາມະຄົມເພື່ອສ້າງຄວາມອາດສາມາດ ແລະ ພັດທະນາບ້ານ (ACTD), ສາມະຄົມຊີວະນາໆພັນລາວ (LBA), ແມ່ຍິງຮ່ວມໃຈພັດທະນາ (MHP), ສາມະຄົມອະນຸລັກສັດປ່າ (WCA) ແລະ ສາມະຄົມພັນທະມິດພັດທະນາສັງຄົມ (SODA); ສະມາຄົມພັດທະນາແມ່ຍິງ ແລະ ການສຶກສາກົດໝາຍ (ADWLE), ສະມາຄົມພັດທະນາບ້ານ ແລະ ສິ່ງແວດລ້ອມ (CDEA), ສະມາຄົມພັດທະນາບ້ານສີຂຽວ (GCDA), ສະມາຄົມພັດທະນາບົດບາດຍິງຊາຍ (GDA), ສະມາຄົມຊີວະນາໆພັນລາວ (LBA), ສະມາຄົມແມ່ຍິງຮ່ວມໃຈພັດທະນາ, ສະມາຄົມພັດທະນາສິ່ງແວດລ້ອມ ແລະ ກະສິກໍາແບບຍືນຍົງ (SEADA). ການສະໜັບສະໜູນສໍາລັບວຽກງານຂອງເຂົາເຈົ້າຈະເປັນສ່ວນຫນຶ່ງຂອງການມີສ່ວນຮ່ວມຂອງບ້ານທີ່ທີມງານ ESM ຈະເຮັດຮ່ວມກັບ DPMU ໃນຕອນເລີ່ມຕົ້ນຂອງໂຄງການ.

# 7. ການຈັດຕັ້ງປະຕິບັດແຜນຄຸມຄອງສັງຄົມ ແລະ ສິ່ງແວດລ້ອມ

## 7.1 ທີມງານຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ

ກອບໜ້າວຽກຂອງທີມງານປົກປ້ອງທີ່ຖືກນໍາໃຊ້ໃນການຈັດຊື້ຂອງໂຄງການ **1** ແລະ ປັບປຸງໃຫ້ເຂົ້າກັບສະພາບການຂອງໂຄງການ **2** ເຊິ່ງໄດ້ລວມຢູ່ຂ້າງລຸ່ມນີ້. ສໍາລັບໂຄງການ **2,** ກອບໜ້າວຽກເຫຼົ່ານີ້ອາດຈະຕ້ອງໄດ້ຮັບການດັດແປງຕື່ມອີກ**,** ຂຶ້ນກັບເງື່ອນໄຂກອບຂອງທີມງານໂຄງການ ແລະ ຕົວແປອື່ນໆ:

**ຂອບເຂດຂອງໜ້າວຽກ ແລະ ວຽກງານ**

ທີ່ປຶກສາຈະຕ້ອງປະຕິບັດວຽກງານທີ່ໄດ້ອະທິບາຍໄວ້ຂ້າງລຸ່ມນີ້, ເຊິ່ງມີໂຄງສ້າງຕາມພື້ນທີ່ເຮັດວຽກຕໍ່ໄປນີ້, ເຊິ່ງມີບາງສ່ວນທີ່ເຊື່ອມໂຍງຢ່າງໃກ້ຊິດ:

- ພັດທະນາ ແລະ ປະຕິບັດແນວຄວາມຄິດການຕິດຕາມຄວາມປອດໄພ
- ຈັດຕັ້ງປະຕິບັດກົນໄກແກ້ໄຂການຮ້ອງທຸກ
- ການສ້າງຕັ້ງ ແລະ ການດຳເນີນງານເວັບໄຊທ໌ I-GFLL (ໂຄງການຈັດຕັ້ງປະຕິບັດການຄຸ້ມຄອງປ່າໄມ້ແບບພູມມີທັດ ແລະ ສິ່ງເສີມຊີວິດການເປັນຢູ່)
- ການຄຸ້ມຄອງຂໍ້ມູນຂ່າວສານ ແລະ ຄວາມຮູ້

**ຂອບເຂດວຽກ 1a: ພັດທະນາແນວຄວາມຄິດການຕິດຕາມກວດກາຄວາມປອດໄພ**

ໂຄງການ 2 ມີບັນດາເອກະສານທີ່ກ່ຽວຂ້ອງເຖິງການປົກປ້ອງ, ລວມທັງ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP), ການປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ (ESIA), ແຜນພັດທະນາກຸ່ມຊົນເຜົ່າ (EGDP), ແຜນປະຕິບັດງານບົດບາດຍິງ-ຊາຍ (GAP). ESMP, EGDP ແລະ GAP ຕ້ອງມີລາຍລະອຽດເພີ່ມເຕີມ ແລະ ນໍາໃຊ້ເຂົ້າໃນຂະບວນການວາງແຜນໂຄງການ. ການເຊື່ອມໂຍງເອກະສານເຫຼົ່ານີ້ເຂົ້າໃນຂະບວນການວາງແຜນໂຄງການ, ແລະ ການສ້າງລະບົບການຕິດຕາມທີ່ມີປະສິດທິພາບສໍາລັບການເຊື່ອມໂຍງນັ້ນ, ຈະຮັບປະກັນວ່າວຽກງານຂອງໂຄງການບໍ່ເປັນອັນຕະລາຍຕໍ່ສະມາຊິກທີ່ມີຄວາມສ່ຽງຂອງບ້ານທີ່ໂຄງການມີການເຄື່ອນໄຫວ. ທີມງານທີ່ປຶກສາດ້ານການປົກປ້ອງຈະພັດທະນາແນວຄວາມຄິດການຕິດຕາມການປົກປ້ອງໂດຍການບັນລຸຈຸດປະສົງດັ່ງຕໍ່ໄປນີ້:

- ກໍານົດແນວຄວາມຄິດການຕິດຕາມການປົກປ້ອງທີ່ມາຈາກເອກະສານໂຄງການທີ່ກ່ຽວຂ້ອງ, ລວມທັງແຜນການຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ , ການປະເມີນຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ , ແຜນພັດທະນາຊົນກຸ່ມເຜົ່າ, ແຜນປະຕິບັດບົດບາດຍິງ-ຊາຍ.
- ອອກແບບລະບົບການຕິດຕາມກວດກາການຄຸ້ມຄອງທີ່ເໝາະສົມສໍາລັບໝາກຜົນທີ່ 2 (ລວມທັງການປະຕິບັດກະສິກໍາທີ່ດີ, ສິນຄ້າບັນຊີຂາວ, ແນວທາງຕ່ອງໂສ້ມູນຄ່າ ແລະ ການກວດກາກະສິກໍາຂະໜາດນ້ອຍ ແລະ ຂະໜາດກາງ (MSME)).
- ກໍານົດ ແລະ ຕີຄວາມຫມາຍຕົວຊີ້ວັດການປົກປ້ອງ
- ໃຫ້ຄໍາແນະນໍາທີ່ຊັດເຈນສໍາລັບເຄື່ອງມືການຕິດຕາມເພື່ອວັດແທກຕົວຊີ້ວັດຄວາມປອດໄພ
- ສະແດງໃຫ້ເຫັນຄວາມເຂົ້າໃຈທີ່ດີກ່ຽວກັບການພົວພັນທີ່ເປັນປະໂຫຍດລະຫວ່າງ ESIA, EGDP, GAP ແລະ ESMP ແລະວິທີການທີ່ເຂົາເຈົ້າຈະໄດ້ຄໍານຶງເຖິງໃນລະບົບການປົກປ້ອງ
- ສະແດງໃຫ້ເຫັນວິທີການທີ່ດີສໍາລັບການປະຕິບັດກັບຄວາມຕ້ອງການການປົກປ້ອງທີ່ຫຼາຍຂຶ້ນ.
- ສະແດງໃຫ້ເຫັນຄວາມເຕັມໃຈ ແລະ ຄວາມສາມາດໃນການແປໂຄງສ້າງ ' ຈຸດເດັ່ນ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ' ເປັນພາສາລາວ, ອໍານວຍຄວາມສະດວກໃຫ້ແກ່ການເຂົ້າເຖິງແນວຄິດການຕິດຕາມກວດກາຄວາມປອດໄພສໍາລັບຄູ່ຮ່ວມງານທີ່ບໍ່ເວົ້າພາສາອັງກິດ, ໂດຍສະເພາະບັນດາພາກສ່ວນກ່ຽວຂ້ອງຂອງລັດຖະບານລາວ.
- ການກໍານົດໜ້າວຽກຮັບຜິດຊອບຫຼັກ ເພື່ອເກັບກໍາ ແລະ ຄຸ້ມຄອງຂໍ້ມູນ.
- ລວມເອົາວິທີການທີ່ຊັດເຈນສໍາລັບການປະສົມກົມກຽວ ແລະການປອງດອງກັນຂອງກອບການປົກປ້ອງ ແລະກອບວຽກງານການຕິດຕາມ ແລະ ປະເມີນຜົນ.

**ຂອບເຂດວຽກ 1b: ປະຕິບັດການຕິດຕາມກວດກາຄວາມປອດໄພ**

ໂດຍອີງໃສ່ການພັດທະນາລະບົບການຕິດຕາມກວດກາຄວາມປອດໄພ, ທີ່ປຶກສາຈະຕ້ອງໄດ້ສະໜັບສະໜູນພະນັກງານໂຄງການ, ແລະທີ່ກ່ຽວຂ້ອງຂອງລັດຖະບານລາວ ແລະ (ກະສິກຳປ່າໄມ້ ແລະ ກະສິກຳ) ຄູ່ຮ່ວມງານຂອງພາກເອກະຊົນ, ເພື່ອປະຕິບັດລະບົບການຕິດຕາມກວດກາຄວາມປອດໄພ.

ວຽກງານຂອງທີ່ປຶກສາແມ່ນເພື່ອສ້າງຄວາມສະດວກໃນການແນະນຳແລະການດຳເນີນງານຂອງລະບົບຕິດຕາມກວດການີ້, ລວມທັງການ

- ການສ້າງຄວາມອາດສາມາດໃນເບື້ອງຕົ້ນ ແລະ ຕໍ່ເນື່ອງໃຫ້ເຈົ້າຂອງໂຄງການ ແລະ ໜ່ວຍງານຄຸ້ມຄອງໂຄງການ (PMUs) ໃນທຸກລະດັບກ່ຽວກັບຄວາມຕ້ອງການປົກປ້ອງ.
- ສະໜັບສະໜູນເຈົ້າຂອງໂຄງການ ແລະ ໜ່ວຍງານຄຸ້ມຄອງໂຄງການ (PMUs) ໃນທຸກລະດັບ, ແລະໃຫ້ເຈົ້າຂອງໂຄງການປະຕິບັດຂໍ້ກຳນົດດ້ານການປົກປ້ອງ
- ຍົກລະດັບ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ປະຈຳປີໃນລະດັບສະຖາບັນ ແລະ ພູມສັນຖານ
- ຮັບປະກັນການເຊື່ອມໂຍງຂອງຄວາມຕ້ອງການປົກປ້ອງເຂົ້າໄປໃນຖານຂໍ້ມູນທີ່ສ້າງຕັ້ງຂຶ້ນໂດຍທີມງານຕິດຕາມ ແລະ ປະເມີນຜົນຂອງໂຄງການ I-GFLL
- ກັ່ນກອງຂໍ້ມູນທີ່ເຂົ້າມາສຳລັບລະດັບຄຸນນະພາບທີ່ຈຳເປັນ, ປະຕິບັດແຜນການທີ່ຈະແຈ້ງເພື່ອປັບປຸງຄຸນນະພາບຂໍ້ມູນ , ຄວາມຖືກຕ້ອງ, ແລະຄວາມກ່ຽວຂ້ອງ ຕາມຄວາມຕ້ອງການ

**ຂອບເຂດວຽກ 2: ກົນໄກການແກ້ໄຂຄຳຮ້ອງທຸກ**

- ລະບົບການຕິດຕາມ ແລະ ປະເມີນຜົນຕ້ອງໄດ້ຮັບການພັດທະນາ, ອີງໃສ່ການສະເໜີໃຫ້ທຶນ, ງົບປະມານຫຼັກ ແລະ ຄູ່ມືການດຳເນີນງານ. ລະບົບ ຕິດຕາມ ແລະ ປະເມີນຜົນ ນີ້ບໍ່ພຽງແຕ່ສະໜັບສະໜູນການລາຍງານເທົ່ານັ້ນ, ແຕ່ຍັງສະໜັບສະໜູນການຊີ້ນຳ ແລະ ການຄຸ້ມຄອງໂຄງການຢ່າງຈິງຈັງ. ລະບົບຈຳເປັນຕ້ອງປະກອບມີທັງສອງຄື: ລະດັບໝາກຜົນ ແລະ ຜົນໄດ້ຮັບຂອງການດຳເນີນງານຂອງໂຄງການ.

ວຽກງານສຳຄັນຂອງທີ່ປຶກສາກ່ຽວກັບກົນໄກແກ້ໄຂຄຳຮ້ອງທຸກແມ່ນ:

- ສະແດງໃຫ້ເຫັນຄວາມເຂົ້າໃຈທີ່ດີຂອງກົນໄກແກ້ໄຂຂໍ້ຮ້ອງທຸກ I-GFLL, ໂດຍອີງໃສ່ກົນໄກແກ້ໄຂຄຳຮ້ອງທຸກ ກປສ
- ຮັບປະກັນໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໄດ້ຮັບການຮຽນຮູ້ວິທີການນຳໃຊ້ກົນໄກແກ້ໄຂການຮ້ອງທຸກ

**ຂອບເຂດວຽກ 3a: ສ້າງຕັ້ງເວັບໄຊທ໌ I-GFLL**

ນອກເໜືອຈາກຄວາມຮັບຜິດຊອບໃນການຕິດຕາມຄວາມປອດໄພຂອງພວກເຂົາ, ທີມງານທີ່ປຶກສາຈະຮັບຜິດຊອບໃນການສ້າງຕັ້ງເວັບໄຊທ໌ I-GFLL, ເຊັ່ນດຽວກັນກັບການປັບປຸງ ແລະ ລວມເວັບໄຊທ໌ທີ່ມີຢູ່ແລ້ວ, ຖ້າມີຄວາມກ່ຽວຂ້ອງ ແລະ ເໝາະສົມ.

ເພື່ອບັນລຸໄດ້ວຽກງານນີ້, ໜ້າວຽກຕ່າງໆລຸ່ມນີ້ຈະຕ້ອງໄດ້ຮັບການດຳເນີນການຄື:

- ສະແດງການເຊື່ອມໂຍງລະຫວ່າງຂໍ້ມູນຈາກ ການປົກປ້ອງ ແລະ ລະບົບການຕິດຕາມ ແລະເວັບໄຊທ໌ I-GFLL
- ຊີ້ແຈງຈຸດປະສົງ ແລະ ທ່າແຮງຂອງຜູ້ໃຊ້ເວັບໄຊທ໌ I-GFLL

- ສ້າງຕັ້ງເວັບໄຊທ໌ທີ່ມີຄຸນນະພາບດີ, ມີການແກ້ໄຂດ້ານວິຊາການລວມສຳລັບການອອກແບບ ແລະ ເປັນເຈົ້າການ

**ຂອບເຂດວຽກ 3b: ດຳເນີນການຢ່າງຕໍ່ເນື່ອງຂອງເວັບໄຊທ໌ I-GFLL**

ຫຼັງຈາກການສ້າງຕັ້ງເວັບໄຊທ໌ I-GFLL, ທີມງານທີ່ປຶກສາຈະຮັບຜິດຊອບຕໍ່ການປະຕິບັດງານ ແລະ ປັບປຸງເວັບໄຊທ໌ I-GFLL ຢ່າງຕໍ່ເນື່ອງດ້ວຍການປົກປ້ອງທີ່ກ່ຽວຂ້ອງ ແລະ ຂໍ້ມູນການຕິດຕາມໂຄງການ, ໃຫ້ແນ່ໃຈວ່າຂໍ້ມູນມີໃຫ້ແກ່ຜູ້ມີສ່ວນຮ່ວມທີ່ຈຳເປັນທັງຫມົດ ແລະ ຜູ້ສົນໃຈຈາກພາຍນອກ.

ເພື່ອດຳເນີນການເວັບໄຊທ໌ I-GFLL ຢ່າງຕໍ່ເນື່ອງ, ທີ່ປຶກສາຈະຕ້ອງ:

- ປັບປຸງຂໍ້ມູນເປັນປະຈຳຢູ່ໃນເວັບໄຊທ໌ I-GFLL
- ພັດທະນາແນວຄິດການຈັດຫາພະນັກງານທີ່ດີເພື່ອປັບປຸງເວັບໄຊທ໌ I-GFLL ແລະແກ້ໄຂບັນຫາທີ່ອາດຈະເກີດຂຶ້ນ

**ພື້ນທີ່ເຮັດວຽກ 4: ການຄຸ້ມຄອງຂໍ້ມູນຂ່າວສານ ແລະ ຄວາມຮູ້**

ເປັນສ່ວນຫນຶ່ງຂອງວຽກງານຂອງເຂົາເຈົ້າຢ່າງເຂັ້ມງວດໃນການຕິດຕາມການປົກປ້ອງໂຄງການຕາມກອບທີ່ຈຳເປັນ ແລະ ຕົກລົງ, ທີມງານທີ່ປຶກສາຈະຕ້ອງ:

- ມີການພັດທະນາທີ່ດີ ແລະ ການປະຕິບັດທີ່ຮອບຄອບ
- ຮັບປະກັນການບັນຈຸພະນັກງານທີ່ດີ ເພື່ອໃຫ້ມີການຈັດເອກະສານທີ່ດີ
- ຝຶກຜູ້ມີສ່ວນຮ່ວມຂອງໂຄງການ (ໜ່ວຍງານຄຸ້ມຄອງໂຄງການ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ອື່ນໆ) ໃນການຄຸ້ມຄອງຖານຂໍ້ມູນທີ່ກ່ຽວຂ້ອງ
- ຝຶກອົບຮົມຜູ້ມີສ່ວນຮ່ວມຂອງໂຄງການໃນ MS Excel ສຳລັບການຄຸ້ມຄອງຂໍ້ມູນຂ່າວສານປະຈຳວັນ

**ພະນັກງານ ແລະ ຄຸນສົມບັດ**

ແນວຄວາມຄິດດ້ານການຈັດພະນັກງານວຽກງານແມ່ນແນໃສ່ຮັບປະກັນທັງສອງ, ການພັດທະນາເຄື່ອງມື ແລະ ວິທີການທີ່ກຳນົດໄວ້ ແຕ່ຍັງເປັນການຈັດຕັ້ງປະຕິບັດໃນລະດັບຊາດ ແລະ 3 ແຂວງເປົ້າໝາຍ ແລະ 15 ເມືອງ. ດັ່ງນັ້ນວຽກຈຳນວນຫນຶ່ງຈະສຸມໃສ່ການພັດທະນາແນວຄວາມຄິດ, ໃນຂະນະດ່ຽວກັນນັ້ນ, ອີກຈຳນວນໜຶ່ງຈະສະໜັບສະໜູນຈັດຕັ້ງປະຕິບັດຂອງການພັດທະນາລະບົບ ແລະຮຽກຮ້ອງໃຫ້ມີການເດີນທາງຢ່າງຫຼວງຫຼາຍ.

ຕາຕະລາງ 3: ຄວາມຮັບຜິດຊອບ, ຄຸນນະວຸດທິ ແລະ ຂັ້ນການລາຍງານ ຂອງ ພະນັກງານ

| ຊື່ຕຳແໜ່ງ | ຈຳນວນຕຳແໜ່ງ | ໜ້າທີ່ຮັບຜິດຊອບຫຼັກ | ຄຸນວຸດທິ | ຂັ້ນການລາຍງານ |
|---|---|---|---|---|
| **ຫົວໜ້າທີມ** | 1 | ▪ ການຊີ້ນຳລວມຂອງທີມງານ<br>▪ ວາງແຜນ ແລະ ຕິດຕາມຄວາມຄືບໜ້າຂອງສະມາຊິກທີມ<br>▪ ຮັບປະກັນວ່າຈຸດປະສົງຂອງໜ້າວຽກສາມາດບັນລຸໄດ້<br>▪ ຮັບປະກັນວ່າຄວາມຕ້ອງການທັງໝົດຂອງໂຄງການ, ອົງການ ຈີໄອແຊດ (GIZ) ແລະ ກອງທຶນດິນຟ້າອາກາດສີຂຽວ (**GCF**) ຕອບສະໜອງໃນລະບົບການປົກປ້ອງ ແລະຖານຂໍ້ມູນ.<br>▪ ແນະນຳທີມງານ | ▪ ມີຄວາມຮູ້ດ້ານພາສາລາວ ແລະ ພາສາອັງກິດ<br>▪ ຈົບປະລິນຍາໂທໃນສາຂາທີ່ກ່ຽວຂ້ອງ<br>▪ ປະສົບການທີ່ພິສູດເພື່ອແນະນຳທີມງານ<br>▪ ມີປະສົບການໃນການພັດທະນາເວັບໄຊທ໌<br>▪ ມີປະສົບການເຮັດວຽກກັບໂຄງການພັດທະນາ | ▪ NPMU ແລະ ຜູ້ຄຸ້ມຄອງໂຄງການ I-GFLL |

| | | | | |
|---|---|---|---|---|
| | | ▪ ພັດທະນາກອບຂອງລະບົບປົກປ້ອງ<br>▪ ພັດທະນາໂຄງຮ່າງຂອງລະບົບຖານຂໍ້ມູນ<br>▪ ການພົວພັນກັບ ອົງການ ຈີໄອແຊດ (GIZ) ແລະ ກປສ | ▪ ມີປະສົບການເຮັດວຽກກັບອົງການ ຂອງລັດ<br>▪ ຄວາມຮູ້ ແລະປະສົບການໃນການຄຸ້ມຄອງການປົກປ້ອງ, ລວມທັງວຽກ FPIC<br>▪ ຄວາມເປັນມາທີ່ເຂັ້ມແຂງໃນການຄຸ້ມຄອງຂໍ້ມູນຂ່າວສານ, ລວມທັງວຽກ FPIC<br>▪ ມີປະສົບການກ່ຽວກັບໂຄງການຮ່ວມມືດ້ານການເງິນ<br>▪ ມີປະສົບການດ້ານປ່າໄມ້<br>▪ ມີປະສົບການດ້ານການກະເສດ / ການພັດທະນາລະບົບຕ່ອງໂສ້ມູນຄ່າ | |
| *ຜູ້ຈັດການຕິດຕາມການປົກປ້ອງ (ສໍາລັບ ໜ່ວຍງານ ຫຼື ຂົງເຂດຫົວຂໍ້ ທີ່ແຕກຕ່າງກັນ)* | 2 ຫາ 3 | ▪ ຊີ້ນໍາ ແລະ ຄຸ້ມຄອງປະຈໍາວັນສໍາລັບທີມງານຕິດຕາມກວດກາຄວາມປອດໄພ<br>▪ ແກ້ໄຂບັນຫາລະບົບການຕິດຕາມການປົກປ້ອງ ໃນລະຫວ່າງການພັດທະນາ ແລະການປະຕິບັດ<br>▪ ແປຂໍ້ກໍານົດຄວາມຕ້ອງການ ຂອງແຜນ ESMP ຢູ່ໃນເອກະສານຂໍ້ມູນ ແລະເຄື່ອງມືຕິດຕາມ<br>▪ ຮັບປະກັນວ່າ ຕົວຊີ້ວັດ ESMP ທັງຫມົດ ຖືກຕິດໄລ່ ຢ່າງຖືກຕ້ອງ<br>▪ ການລາຍງານປະຈໍາປີ ກ່ຽວກັບຫົວຂໍ້ການປົກປ້ອງທັງຫມົດ (ຢູ່ໃນບົດລາຍງານຄວາມຄືບຫນ້າ ປະຈໍາປີ)<br>▪ ສະຫນັບສະຫນູນ ທີ່ປຶກສາໂຄງການ ເພື່ອເຊື່ອມໂຍງ ການຈັດຕັ້ງປະຕິບັດເຄື່ອງມືການປົກປ້ອງທັງຫມົດ ຢ່າງຖືກຕ້ອງ ໃນຊ່ວງໄລຍະກິດຈະກໍາຂອງໂຄງການ<br>▪ ສະຫນັບສະຫນູນ ທີ່ປຶກສາໂຄງການ ໃນການປັບປຸງ ບົດແນະນໍາ ວ່າດ້ວຍການຈັດຕັ້ງປະຕິບັດ ເມື່ອມີຄວາມຈໍາ | ▪ ມີຄວາມຮູ້ດ້ານພາສາອັງກິດ (ພາສາລາວຈະພິຈາລະນາເປັນພິເສດ)<br>▪ ຈັນປະລິນຍາຕີໃນສາຂາທີ່ກ່ຽວຂ້ອງ<br>▪ ປະສົບການທີ່ພິສູດເພື່ອແນະນໍາທີມງານ<br>▪ ມີປະສົບການເຮັດວຽກກັບໂຄງການພັດທະນາ<br>▪ ມີປະສົບການເຮັດວຽກກັບອົງການ ລັດ<br>▪ ຄວາມຮູ້ ແລະປະສົບການໃນການຄຸ້ມຄອງການປົກປ້ອງ, ລວມທັງວຽກ FPIC<br>▪ ມີພື້ນຖານດ້ານການຄຸ້ມຄອງຂໍ້ມູນຂ່າວສານທີ່ເຂັ້ມແຂງ | ▪ ຜູ້ຄຸ້ມຄອງໂຄງການ I-GFLL<br>▪ ຫົວໜ້າທີມງານການປົກປ້ອງ |

| | | | | |
|---|---|---|---|---|
| | | ເປັນ | | |
| *ຜູ້ປະສານງານ* | 1 | ▪ ສະໜັບສະໜູນ ທີມງານຕິດຕາມ ກວດກາ ວຽກງານການປົກປ້ອງ ໃນ ການພົວພັນກັບ ພະນັກງານຂອງ ໂຄງການ ແລະ ພາກສ່ວນກ່ຽວຂ້ອງ ຈາກຝ່າຍລັດຖະບານລາວ ໃນທຸກຂັ້ນ ບໍລິຫານ ລວມທັງ ສະມາຊິກຂອງ ສາທາລະນະຊົນ.<br>▪ ສະໜັບສະໜູນ ແລະ ຄຸ້ມຄອງ ພະນັກງານຕິດຕໍ່ພົວພັນຂອງແຂວງ ແລະ ເມືອງ, ໂດຍສະເພາະດ້ານການ ຕິດຕາມການປົກປ້ອງ<br>▪ ກວດສອບເບິ່ງຂໍ້ມູນການຕິດຕາມການ ປົກກປ້ອງທີ່ເຂົ້າມາລວງໜ້າ ໂດຍ ສົມທົບກັບເຈົ້າໜ້າທີ່ຕິດຕໍ່ພົວພັນຂອງ ແຂວງ ແລະ ເມືອງ ແລະ ໂຄງການ ແລະ ພາກສ່ວນລັດ.<br>▪ ອໍານວຍຄວາມສະດວກ ແລະ ຄຸ້ມຄອງ ການຝຶກອົບຮົມຂັ້ນພາກສະໜາມ ໃຫ້ ແກ່ ພະນັກງານ ຂອງ ໂຄງການ ກ່ຽວ ກັບກອບການຕິດຕາມ ວຽກງານການ ປົກປ້ອງ | ▪ ມີຄວາມຮູ້ດ້ານພາສາ ລາວ ແລະ ພາສາ ອັງກິດ<br>▪ ມີປະສົບການ ບໍລິຫານທີມ<br>▪ ມີປະສົບການເຮັດ ວຽກກັບອົງການລັດ | ▪ DMPU, PPMU, NPMU, ແລະ EPF<br>▪ ຜູ້ຄຸ້ມຄອງ ໂຄງການ I-GFLL<br>▪ ຫົວໜ້າທີມງານ ການປົກປ້ອງr<br>▪ ຫົວໜ້າທີມງານ ຕິດຕາມວຽກ ງານການປົກ ປ້ອງ |
| *ຜູ້ປະສານງານ ຂອງໜ່ວຍງານ ຄຸ້ມຄອງໂຄງການ ຂັ້ນແຂວງ/ເມືອງ* | 3 ຫາ 6 | ▪ ສະໜັບສະໜູນການລວມເອົາຂໍ້ກໍານົດ ການປົກປ້ອງຄຸ້ມຄອງເຂົ້າໃນການວາງ ແຜນເຈົ້າຂອງໂຄງການ<br>▪ ເລີ່ມຝຶກ ແລະ ຝຶກຕໍ່ເນື່ອງໃຫ້ເຈົ້າຂອງ ໂຄງການ ແລະ ໜ່ວຍງານຄຸ້ມຄອງ ໂຄງການ (PMUs) ກ່ຽວກັບຄວາມ ຕ້ອງການດ້ານການປົກປ້ອງຢູ່ຂັ້ນ ແຂວງ- ແລະ ຂັ້ນເມືອງ.<br>▪ ເຮັດວຽກຢ່າງຕໍ່ເນື່ອງກັບພະນັກງານ ຕິດຕາມ ແລະ ປະເມີນຜົນຂອງແຂວງ ແລະ ຂັ້ນເມືອງເພື່ອຮັບປະກັນການຄຸ້ມ ຄອງຂໍ້ມູນ-ກະແສຂໍ້ມູນທີ່ກ່ຽວຂ້ອງ ແລະ ຂໍ້ມູນໃຫ້ຄົບຖ້ວນ ແລະ ຖືກຕ້ອງ.<br>▪ ສະໜັບສະໜູນການລາຍງານຄວາມ ປອດໄພໂດຍເຈົ້າຂອງໂຄງການ | ▪ ມີຄວາມຮູ້ດ້ານພາສາ ລາວ ແລະ ພາສາ ອັງກິດ<br>▪ ຈົບປະລິນຍາຕີ<br>▪ ມີປະສົບການເຮັດ ວຽກກັບໂຄງການ ພັດທະນາ<br>▪ ມີປະສົບການເຮັດ ວຽກກັບອົງການລັດ<br>▪ ມີພື້ນຖານດ້ານການ ຄຸ້ມຄອງຂໍ້ມູນ ຂ່າວສານທີ່ເຂັ້ມແຂງ<br>▪ ມີປະສົບການໃນການ ເສີມສ້າງຄວາມ ສາມາດໃນການສ້າງ ຖານຂໍ້ມູນ ຫຼື MS Excel | ▪ DMPU, PPMU, NPMU, ແລະ EPF<br>▪ ຜູ້ຊີ້ນໍາຜູ້ປະສານ ງານ |

| | | | | |
|---|---|---|---|---|
| *ນາຍແປພາສາ/ ຜູ້ອໍານວຍຄວາມສະດວກໃນບ້ານ* | 3 ຫາ 6 | ▪ ສະໜອງການແປພາສາຊົນເຜົ່າ ສໍາລັບກິດຈະກໍາທີ່ສໍາຄັນ ໂດຍສະເພາະຢູ່ໃນບ້ານທີ່ມີຄວາມສາມາດໃຊ້ພາສາລາວຕໍ່າ<br>▪ ສັງເກດການຈັດຕັ້ງປະຕິບັດຂັ້ນທ້ອງຖິ່ນ ເພື່ອກໍານົດ ບັນຫາການປົກປ້ອງທີ່ອາດຈະເກີດຂຶ້ນ. | ▪ ມີຄວາມສາມາດຄ່ອງແຄ່ວ ພາສາລາວ ແລະ ພາສາຫຼັກຂອງທ້ອງຖິ່ນ<br>▪ ອະນຸປະລິນຍາຂັ້ນສູງ<br>▪ ມີປະສົບການເຮັດວຽກກັບໂຄງການພັດທະນາ<br>▪ ມີປະສົບການເຮັດວຽກກັບ ອົງການຈັດຕັ້ງ ຂອງລັດຖະບານລາວ | ▪ ເຈົ້າຂອງໂຄງການ<br>▪ ພະນັກງານພົວພັນປະສານງານ |

*ໝາຍເຫດ: ນີ້ບໍ່ແມ່ນຕໍາແໜ່ງເຮັດວຽກປະຈໍາທັງໝົດ ສ່ວນ ຈໍານວນມື້ທີ່ລະອຽດ ສໍາລັບແຕ່ລະຕໍາແໜ່ງຈະຕ້ອງກໍານົດໃນພາຍຫຼັງ.*

ຄວນຈະສັງເກດວ່າ - ເນື່ອງຈາກການເຊື່ອມໂຍງວຽກງານປົກປ້ອງ - ແລະ ລະບົບຕິດຕາມ ແລະ ປະເມີນຜົນ (M&E) ເຂົ້າຫຼາຍ - ການສ້າງຕັ້ງຂອງທີມປົກປ້ອງສໍາລັບໂຄງການ 2 ຍັງຈະຂຶ້ນກັບການສ້າງຕັ້ງອົງປະກອບຂອງທີມງານ ຕິດຕາມ ແລະ ປະເມີນຜົນ. ເຊັ່ນວ່າ ໃນກໍລະນີທີ່ວ່າ (ຕົວຢ່າງ: ທັກສະຖານຂໍ້ມູນບໍ່ໄດ້ຖືກຄຸ້ມຄອງໂດຍທີມງານຕິດຕາມ ແລະ ປະເມີນຜົນ (M&E), ທັກສະເຫຼົ່ານີ້ອາດຈະຕ້ອງຖືກລວມເຂົ້າໃນອົງປະກອບຂອງທີມປົກປ້ອງ. ໃນທາງກົງກັນຂ້າມ "ການຄຸ້ມຄອງຄວາມຮູ້" ອາດຈະຖືກລວມເຂົ້າບໍ່ແມ່ນສ່ວນຫນຶ່ງຂອງວຽກງານຂອງທີມປົກປ້ອງ, ແຕ່ເປັນສ່ວນຫນຶ່ງຂອງວຽກງານຂອງທີມງານຕິດຕາມ ແລະ ປະເມີນຜົນ (M&E).

ເພື່ອຄໍານຶງເຖິງຄວາມຫຍຸ້ງຍາກຂອງພະນັກງານລັດຂັ້ນທ້ອງຖິ່ນໃນການປະຕິບັດກິດຈະກໍາເປັນພາສາທ້ອງຖິ່ນ, ມັນອາດຈະພິຈາລະນາຢູ່ໃນໂຄງການ 2 ເພື່ອເພີ່ມ "ຜູ້ອໍານວຍຄວາມສະດວກໃນບ້ານ" ໃຫ້ກັບທີມງານປົກປ້ອງ, ໂດຍມີຄວາມຮັບຜິດຊອບທີ່ຫຼັກດັ່ງນີ້:

- ສະໜອງການແປພາສາຊົນເຜົ່າໃຫ້ແກ່ກິດຈະກໍາທີ່ສໍາຄັນໃນບ້ານທີ່ອ່ອນພາສາລາວ
- ສັງເກດການຈັດຕັ້ງປະຕິບັດຂັ້ນທ້ອງຖິ່ນ ເພື່ອກໍານົດບັນຫາປົກປ້ອງທີ່ອາດເກີດຂຶ້ນ.

ຕ້ອງຮັບຮູ້ວ່າການນໍາໃຊ້ພາສາທ້ອງຖິ່ນຢ່າງເຕັມທີ່ຈະບໍ່ສາມາດເຮັດໄດ້ໃນທຸກບ້ານ, ແຕ່ຂໍ້ມູນການຕິດຕາມກວດກາໂຄງການ 1 ໄດ້ສະແດງໃຫ້ເຫັນວ່າໃນບ້ານສ່ວນຫຼາຍມີຄວາມສາມາດດ້ານພາສາລາວພຽງພໍ. ການເພີ່ມຜູ້ອໍານວຍຄວາມສະດວກໃນບ້ານເຂົ້າໃນທີມປົກປ້ອງ ສາມາດຊ່ວຍສະຫນັບສະຫນູນອຸປະສັກທາງພາສາທີ່ອາດຈະເກີດຂຶ້ນ ໂດຍສະເພາະບ້ານຫ່າງໄກສອກຫຼີກທີ່ມີທັກສະພາສາລາວຕໍ່າ.

## 7.2. ກອງປະຊຸມຝຶກອົບຮົມ

ໂດຍທົ່ວໄປແລ້ວ, ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ເຊື່ອມໂຍງເຂົ້າໃນການຈັດຕັ້ງປະຕິບັດໂຄງການ 1 ເຊິ່ງເປັນຫົວຂໍ້ລວມ. ນີ້ແມ່ນຄວາມຈິງສໍາລັບການເກັບກໍາຂໍ້ມູນ ແລະ ປົກປ້ອງລາຍການຂໍ້ມູນທີ່ຖືກເກັບກໍາເປັນສ່ວນໜຶ່ງຂອງການຕິດຕາມອື່ນໆ. ມັນຍັງເປັນຄວາມຈິງສໍາລັບການຝຶກອົບຮົມ ແລະ ການເຜີຍແຜ່ກັບພາກສ່ວນກ່ຽວຂ້ອງ (ເຊັ່ນ: ເປັນສ່ວນໜຶ່ງຂອງກອງປະຊຸມຄະນະກໍາມະການ, ກອງປະຊຸມວາງແຜນປະຈໍາປີ ແລະ ໄຕມາດ ແລະກິດຈະກໍາອື່ນໆ). ການຝຶກອົບຮົມແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ໄດ້ຖືກລວມເຂົ້າໃນການຝຶກອົບຮົມຕ່າງໆໂດຍອີງປະກອບທີ່ແຕກຕ່າງກັນຂອງໂຄງການ. ເຄື່ອງມືການຝຶກອົບຮົມສະເພາະ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ໄດ້ຖືກພັດທະນາ ແລະ ນໍາໃຊ້. ດ້ວຍເຫດນີ້, ພາກສ່ວນກ່ຽວຂ້ອງສາມາດໄດ້ຮັບຢ່າງກວ້າງຂວາງ. ການເຊື່ອມໂຍງການປົກປ້ອງເຫຼົ່ານີ້ຕ້ອງໄດ້ຖືກນໍາໃຊ້ສໍາລັບໂຄງການ 2.

ໃນທາງກົງກັນຂ້າມ, ຜົນໄດ້ຮັບຈາກລະບົບການຕິດຕາມການປົກປ້ອງ (ແລະ ບົດບາດຍິງຊາຍ) ໄດ້ຖືກແບ່ງປັນຢ່າງເປັນປົກກະຕິໃຫ້ຜູ້ມີສ່ວນຮ່ວມໂດຍຜ່ານບົດລາຍງານການຕິດຕາມກວດກາປະຈໍາປີ ແລະ ໃນລະຫວ່າງກອງປະຊຸມໂຄງການ ແລະກິດຈະກໍາ ແລະກິດຈະກໍາສ່ວນບຸກຄົນທີ່ກ່ຽວຂ້ອງ (ເບິ່ງແຜນການເຊື່ອມໂຍງຜູ້ມີສ່ວນຮ່ວມຂອງໂຄງການໃນ ບົດສະເໜີໂຄງການ ເອກະສານຊ້ອນທ້າຍ 7). ຄວາມຮັບຜິດຊອບຂອງທີມງານປົກປ້ອງແມ່ນເພື່ອປະເມີນການປົກປ້ອງຂໍ້ມູນທີ່ກ່ຽວຂ້ອງຢ່າງຕໍ່ເນື່ອງ, ດັ່ງທີ່ໄດ້ອະທິບາຍໄວ້ໃນກິດຈະກໍາທີ່ 1 ແລະ 3-8, ແລະແບ່ງປັນຂໍ້ມູນທີ່ສໍາຄັນກັບພາກສ່ວນທີ່ກ່ຽວຂ້ອງ. ລາຍລະອຽດເພີ່ມເຕີມແມ່ນໃຫ້ຢູ່ໃນບົດທີ 9 ຂອງ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ພາຍໃຕ້ກິດຈະກໍາທີ່ 1 (ລາຍລະອຽດຂອງລະບົບ) ແລະ ກິດຈະກໍາທີ່ 2 (ການເສີມສ້າງຄວາມສາມາດຂອງຜູ້ມີສ່ວນຮ່ວມ).

# 8. ງົບປະມານແຜນການຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ

ສອງຕາຕະລາງຕໍ່ໄປນີ້ສະແດງເຖິງງົບປະມານ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP). ໝາຍເຫດ: ງົບປະມານແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ບໍ່ລວມເອົາບາງກິດຈະກໍາສະເພາະ, ເຊິ່ງອາດຈະຖືກນໍາໄປໃຊ້ເຂົ້າໃນງົບປະມານໂຄງການພາຍໃຕ້ກິດຈະກໍາສະເພາະ (ເຊັ່ນ: ກ່ຽວຂ້ອງກັບການຄຸ້ມຄອງຄວາມຮູ້, ການສື່ສານ, ການຄຸ້ມຄອງການປົກປ້ອງ, ແລະຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງສັງຄົມ).

## 8.1. ງົບປະມານພະນັກງານ ແລະ ທີ່ປຶກສາ ສໍາລັບ ໂຄງການ 2 (ເອີໂຣ)

*ຕາຕະລາງ 4: ງົບປະມານພະນັກງານ ແລະ ທີ່ປຶກສາ ສໍາລັບ ໂຄງການ 2*

| ຫົວຂໍ້ | ໄລຍະເວລາ | ຈໍານວນເດືອນ | ຄ່າໃຊ້ຈ່າຍຕໍ່ເດືອນ | ລວມທັງໝົດ |
|---|---|---|---|---|
| ທີມງານປົກປ້ອງ (ເບິ່ງລາຍລະອຽດກ່ຽວກັບຕໍາແໜ່ງໃນ ESMP ບົດທີ 7.1) | 4 ປີ | 48 | 18,396 | 883,040 |

## 8.2. ງົບປະມານກິດຈະກຳ ແລະ ອຸປະກອນ (ເອີໂຣ)

*ຕາຕະລາງ 5: ງົບປະມານກິດຈະກຳ ແລະ ອຸປະກອນ*

| ຫົວຂໍ້ | ຄ່າໃຊ້ຈ່າຍຕໍ່ຫົວໜ່ວຍ (€) ຄູ່ມື | ປີ 1 | ປີ 2 | ປີ 3 | ປີ 4 | ຈຳນວນທັງໝົດ | ງົບປະມານທັງໝົດ (ເອີໂຣ) |
|---|---|---|---|---|---|---|---|
| | | ຈຳນວນ | | | | | |
| ຄ່າໃຊ້ຈ່າຍໃນການເດີນທາງສຳລັບການຈັດຕັ້ງປະຕິບັດແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ(ESMP) ແລະ ແຜນການປະຕິບັດບົດບາດຍິງຊາຍລວມທັງການດຳເນີນງານຂອງ FGRM | 5,000 | 1.0 | 1.0 | 1.0 | 1.0 | 4.0 | 20,000 |
| ການປະຕິບັດແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ໃນເຂດທົດລອງ (ການເກັບກຳຂໍ້ມູນ, ການຄວບຄຸມການປະຕິບັດ, ການລາຍງານກ່ຽວກັບການປົກປ້ອງ ແລະອື່ນໆ) | 20,000 | 2.0 | 1.0 | 1.0 | 1.0 | 5.00 | 100,000 |
| ການຈັດຕັ້ງປະຕິບັດແຜນປະຕິບັດບົດບາດຍິງ-ຊາຍ (ການລວມເອົາບົດບາດຍິງ-ຊາຍໃນແຜນດຳເນີນງານ REDD+ ຂັ້ນແຂວງ ( PRAP), ກົດລະບຽບການພິສູດບົດບາດຍິງ-ຊາຍໃນການຄຸ້ມຄອງປ່າໄມ້/ການຄຸ້ມຄອງປ່າໄມ້ແບບຍືນນານ/ການຟື້ນຟູປ່າໄມ້ແບບພູມີທັດ (VFM/SFM/ FLR), ເຂົ້າຮ່ວມກອງປະຊຸມບ້ານ, ອຸປະກອນການຝຶກອົບຮົມ, ອັດຕາກິນ ແລະ ອັດຕານອນ (DSA & NA) ສຳລັບສະຫະພັນແມ່ຍິງລາວ ຫຼື ອົງການທີ່ບໍ່ສັງກັດລັດ | 50,000 | 1.0 | 1.0 | 1.0 | 1.0 | 4.00 | 200,000 |

| ຫົວຂໍ້ | ຄ່າໃຊ້ຈ່າຍຕໍ່ຫົວໜ່ວຍ (€) ຄູ່ມື | ປີ 1 | ປີ 2 | ປີ 3 | ປີ 4 | ຈຳນວນທັງໝົດ | ງົບປະມານທັງໝົດ (ເອີໂຣ) |
|---|---|---|---|---|---|---|---|
| | | ຈຳນວນ | | | | | |
| (NGOs) - ເຊັ່ນ: ສະມາຄົມເພື່ອການພັດທະນາແມ່ຍິງ ແລະ ອື່ນໆ). | | | | | | | |
| ກອງປະຊຸມປຶກສາຫາລື ແລະ ຝຶກອົບຮົມລະດັບເມືອງ, FPIC, ກິດຈະກຳປູກຈິດສຳນຶກສຳລັບ (ສົມມຸດ 12 ເມືອງ, 2 ກອງປະຊຸມປຶກສາຫາລືຕໍ່ເມືອງ) | 1,000 | 12.0 | | | | 12.00 | 20,400 |
| FPIC 1: ການໂຄສະນາສ້າງຄວາມຮັບຮູ້ເບື້ອງຕົ້ນ, ປຶກສາຫາລືໃນ 290 ບ້ານ) | 400 | 290.0 | | | | 290.00 | 72,500 |
| FPIC 2 & 3: ສັນຍາການຄຸ້ມຄອງປ່າຂອງບ້ານ ແລະ ອື່ນໆ. ປຶກສາຫາລືໃນ 290 ບ້ານ | 800 | 90.0 | 200.0 | | | 290.00 | 232,000 |
| ຄ່າໃຊ້ຈ່າຍພະນັກງານທີ່ກ່ຽວຂ້ອງກັບການປົກປ້ອງເພີ່ມເຕີມ, ການເດີນທາງແລະອຸປະກອນ | 249,140 | 0.25 | 0.25 | 0.25 | 0.25 | 1 | 238,140 |

## 9. ກິດຈະກຳ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ

*ຕາຕະລາງ 6: ພາບລວມ ກິດຈະກຳຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ*

| ກິດຈະກຳ | ຫົວຂໍ້ | ***ການຈັດປະເພດ*** |
|---|---|---|
| ກິດຈະກຳ 1 | ການຈັດຕັ້ງປະຕິບັດ ແລະ ການຕິດຕາມ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ | ກິດຈະກຳກ່ຽວກັບລະບົບ |
| ກິດຈະກຳ 2 | ການສ້າງຄວາມອາດສາມາດທີ່ກ່ຽວຂ້ອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ | |
| ກິດຈະກຳ 3 | ຂະບວນການສ້າງຄວາມເຫັນດີເຫັນພ້ອມດ້ວຍຄວາມຕື່ນຕົວສະໝັກໃຈໂດຍໄດ້ຮັບຂໍ້ມູນລວງໜ້າ (FPIC) | ກິດຈະກຳກ່ຽວກັບວິຊາການ |
| ກິດຈະກຳ 4 | ສັງຄົມມີສ່ວນຮ່ວມ | |
| ກິດຈະກຳ 5 | ບັນຫາການນຳໃຊ້ທີ່ດິນ, ການຍຶດທີ່ດິນ ແລະ ການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ | |

| | | |
|---|---|---|
| ກິດຈະກໍາ 6 | ຊີວະນາໆພັນ | |
| ກິດຈະກໍາ 7 | ສຸຂະພາບ ແລະ ຄວາມປອດໄພ | |
| ກິດຈະກໍາ 8 | ການປັບຕົວກັບຄວາມສ່ຽງທີ່ກ່ຽວຂ້ອງກັບຜົນກະທົບການປ່ຽນແປງດິນຟ້າອາກາດ | |
| ກິດຈະກໍາ 9 | ກົນໄກແກ້ໄຂຄໍາຮ້ອງທຸກ (GRM) | "ການຕອບກັບ" |

## 9.1. ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ກິດຈະກໍາ 1: ການຈັດຕັ້ງປະຕິບັດ ແລະ ການຕິດຕາມ

### ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ

**ຈຸດປະສົງ**

| |
|---|
| ຈຸດປະສົງຂອງການປະຕິບັດ **1** ແມ່ນເພື່ອໃຫ້ແນ່ໃຈວ່າລະບົບການປົກປ້ອງ ແລະ ການຕິດຕາມບົດບາດຍິງຊາຍໄດ້ຖືກສ້າງຕັ້ງຂຶ້ນ ແລະ ດໍາເນີນການໄດ້. |

ກິດຈະກໍານີ້ປະກອບມີຈຸດປະສົງລາຍລະອຽດດັ່ງຕໍ່ໄປນີ້:

- ວຽກ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ຖືກລວມເຂົ້າໃນການວາງແຜນ
- ການປະຕິບັດຕາມຂໍ້ກໍານົດຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ແມ່ນການຕິດຕາມ / ເຄື່ອງມືການຕິດຕາມຖືກສ້າງຕັ້ງຂຶ້ນ ແລະ ປະຕິບັດ
- ຂໍ້ມູນທີ່ຕ້ອງການທັງໝົດໄດ້ຖືກເກັບກໍາ ແລະ ສະໜອງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ
- ຄວາມຮັບຜິດຊອບກ່ຽວກັບແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ແມ່ນມີຄວາມກະຈ່າງແຈ້ງ ແລະ ຈັດຕັ້ງປະຕິບັດ
- ການປົກປ້ອງ ແລະ ລັກສະນະບົດບາດຍິງຊາຍສາມາດລາຍງານໄດ້ຕາມຄວາມຕ້ອງການ
- ຄໍາຄິດເຫັນກ່ຽວກັບການປົກປ້ອງທີ່ກວດພົບ ແລະ ບັນຫາບົດບາດຍິງຊາຍໄດ້ສະໜອງໃຫ້ກັບທຸກພາກສ່ວນທີ່ກ່ຽວຂ້ອງ
- ເຄື່ອງມືໄດ້ຖືກສ້າງຕັ້ງຂຶ້ນເພື່ອຮັບປະກັນວ່າມາດຕະການຫຼຸດຜ່ອນໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນລະບົບ
- ຮັບປະກັນວ່າກິດຈະກໍາສະເພາະມີເງື່ອນໄຂທີ່ຖືກຕ້ອງກ່ອນ

**ຄວາມເປັນມາຂອງແນວຄວາມຄິດ**

ໜ້າທີ່ໂດຍລວມຂອງກິດຈະກໍາ 1 ໃນ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ນີ້ແມ່ນເພື່ອໃຫ້ແນ່ໃຈວ່າເຄື່ອງມືທັງຫມົດຢູ່ໃນສະຖານທີ່, ໃຫ້ແນ່ໃຈວ່າຜູ້ທີ່ກ່ຽວຂ້ອງທັງຫມົດທີ່ໄດ້ຮັບການຝຶກອົບຮົມໃນສະພາບການຂອງກິດຈະກໍາ 2 ສາມາດປະຕິບັດກິດຈະກໍາ 3-9. ດ້ວຍເຫດນີ້ ກິດຈະກໍາ 1 ປະກອບມີລາຍລະອຽດຂອງລະບົບການປົກປ້ອງ ແລະບົດບາດຍິງຊາຍ (ການຕິດຕາມ). ການຊີ້ຂໍ້ມູນກິດຈະກໍາຂອງໂຄງການກັບແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) (i.e. ການເຊື່ອມໂຍງ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ຈະເປັນສິ່ງຈໍາເປັນ. ແຜນຄຸ້ມຄອງສັງຄົມ ແລະ

ສິ່ງແວດລ້ອມ (ESMP) ນີ້ອາດຈະຖືກປັບປຸງທຸກຄັ້ງທີ່ມີຄວາມຈຳເປັນ (ເຊັ່ນ: ເນື່ອງຈາກການດັດແກ້ສັນຍາທີ່ສຳຄັນ) ຫຼືຖ້າ ທີມງານປົກປ້ອງເຫັນວ່າມີຄວາມຈຳເປັນ. ຄຳແນະນຳການຈັດຕັ້ງປະຕິບັດທັງໝົດຕໍ່ກັບແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ນີ້ (ເຊັ່ນ: ເອກະສານການຝຶກອົບຮົມ) ຈະຖືກແປເປັນພາສາລາວ.

ເປັນໂຄງການທີ່ຈັດຢູ່ປະເພດ B (ຄວາມສ່ຽງ ທັງສັງຄົມ ແລະ ສິ່ງແວດລ້ອມ (ES) ຢູ່ລະດັບ ປານກາງ), ເພື່ອເຮັດໃຫ້ມີ ການຈັດຕັ້ງປະຕິບັດແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ທີ່ດີນັ້ນ ມີຄວາມຮຽກຮ້ອງຕ້ອງການພະນັກງານທີ່ມີ ຄຸນວຸດທິ ແລະຊັບພະຍາກອນທາງດ້ານການເງິນເພື່ອຈັດຕັ້ງປະຕິບັດແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP). ການ ປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ (ESIA) (ໃນພາກທີ 3.10.3) ໄດ້ສັງເກດເຫັນຊ່ອງຫວ່າງຂອງຂໍ້ມູນ ທີ່ມີຢູ່ທີ່ສາມາດສົ່ງຜົນກະທົບຕໍ່ຄວາມສາມາດໃນການປະຕິບັດໂຄງການ ແລະ ການຕິດຕາມກິດຈະກຳ. ປະຈຸບັນຍັງບໍ່ມີກົນໄກ ຕິດຕາມກວດກາຂອງລັດທີ່ອາດຈະຖືກນຳມາສະໜັບສະໜູນວຽກງານນີ້. ໂດຍກອບການພັດທະນາການຕິດຕາມກວດກາ ແລະ ການລາຍງານ, ຜົນກະທົບທາງລົບທີ່ບໍ່ໄດ້ຕັ້ງໃຈສາມາດຖືກກຳນົດ ແລະ ຫຼີກເວັ້ນ ຫຼື ຫຼຸດຜ່ອນ. ຄວາມສ່ຽງທີ່ອາດເກີດຂຶ້ນຂອງ ການຄຸ້ມຄອງໂຄງການທີ່ເກີນຕໍ່ກັບການຈັດຕັ້ງປະຕິບັດແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ຈະຖືກຫຼຸດຜ່ອນ ໂດຍການເຂົ້າຮ່ວມຂອງທີມງານຜູ້ຊ່ຽວຊານທີ່ອຸທິດຕົນ, ຜູ້ທີ່ຈະເບິ່ງແຍງການປະຕິບັດແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP), ຕິດຕາມປະສິດທິພາບ ແລະ ປະສິດທິຜົນຂອງມັນຢ່າງຕໍ່ເນື່ອງ, ແລະປັບປຸງຕາມຄວາມຈຳເປັນ. ກິດ ຈະກຳຂອງໂຄງການຕ້ອງການການສະໜັບສະໜູນຈາກຝ່າຍລັດ ໃນທຸກລະດັບ ແລະ ຫຼາຍຂະແໜງການ ທີ່ມີຄວາມຮູ້ດ້ານ ວິຊາການ, ຄວາມຮູ້ທ້ອງຖິ່ນ, ພາສາຊົນເຜົ່າ, ແລະປະສົບການໃນການຈັດຕັ້ງປະຕິບັດ.

ຕາມແນວຄວາມຄິດແລ້ວ, ລະບົບຈະຕ້ອງກວມເອົາທັງສອງຄື:

- ຜົນກະທົບທາງລົບທີ່ບໍ່ໄດ້ຕັ້ງໃຈ ແລະ
- ຄວາມສ່ຽງພາຍນອກ

ຂະບວນການຄຸ້ມຄອງການປົກປ້ອງ

ທີມງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ຈະດຳເນີນການ ແລະກວດກາການເຊື່ອມໂຍງກັບແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ແລະການປະຕິບັດໃນໄລຍະວົງຈອນຊີວິດຂອງໂຄງການ. ກອບການຕິດຕາມໂຄງການຕາມແນວຕັ້ງ (ແຕ່ລະດັບຊາດເຖິງລະດັບບ້ານ), ຕ້ອງໄດ້ຮັບການພັດທະນາ, ເຊິ່ງປະຕິບັດຕາມການປົກປ້ອງຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ແລະ ກອງທຶນດິນຟ້າອາກາດສີຂຽວ (GCF) & ອົງການ ຈີໄອແຊດ (GIZ) ໂດຍທົ່ວໄປ. ລະບົບ ການຕິດຕາມນີ້ຄວນຈະມີເຄື່ອງມືຕິດຕາມກວດກາຄວາມປອດໄພດັ່ງລຸ່ມນີ້. ນອກຈາກນັ້ນ, ການເກັບກຳຂໍ້ມູນທົ່ວໄປແມ່ນຈະ ດຳເນີນເປັນສ່ວນໜຶ່ງຂອງການດຳເນີນງານຂອງໂຄງການ, ດັ່ງທີ່ ການປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ (ESIA) ສະແດງໃຫ້ເຫັນວ່າ ຂໍ້ມູນດ້ານເສດຖະກິດ-ສັງຄົມ ແລະ ຂໍ້ມູນປະເພດອື່ນໆແມ່ນບໍ່ພຽງພໍສຳລັບຈຸດປະສົງຂອງການ ຕິດຕາມຄວາມສ່ຽງ ແລະ ການປົກປ້ອງ.

ເຄື່ອງມືທີ່ມີລາຍຊື່ເຫຼົ່ານີ້ຈຳນວນຫຼາຍຈະຖືກລະບຸໄວ້ໃນການປະຕິບັດ 'ດ້ານວິຊາການ' ອື່ນໆທີ່ກ່ຽວຂ້ອງໃນເອກະສານນີ້. ເຄື່ອງມືທັງໝົດຈະຖືກພັດທະນາໂດຍທີມງານປົກປ້ອງ ເພື່ອຮັບປະກັນການຈັດຕັ້ງປະຕິບັດ, ລວມທັງການເກັບກຳຂໍ້ມູນ, ການ ພັດທະນາຫຼັກສູດການຝຶກອົບຮົມ ແລະ ອື່ນໆ.

ຍິ່ງໄປກວ່ານັ້ນ, ໃນນາມເປັນເຄື່ອງມືລວມ ເພື່ອ "ຫຼີກລ້ຽງ ຜົນກະທົບທາງລົບ ຕໍ່ ສັງຄົມ ແລະ ສິ່ງແວດລ້ອມ ທີ່ບໍ່ສາມາດ ຫຼຸດຜ່ອນໄດ້ເທົ່າທີ່ຄວນ ໂດຍ ແຜນງານ ຫຼື ຖືກຫ້າມໂດຍ ນິຕິກຳພາຍໃນປະເທດ". **ການກວດສອບ ESS ຂອງກິດຈະກຳ**

**ຍ່ອຍ** ຈະຖືກປະຕິບັດ ໃຫ້ເປັນສ່ວນໜຶ່ງ ທີ່ສຳຄັນ ຂອງ ຂະບວນການ Risk-Log ທີ່ໄດ້ອະທິບາຍໄວ້ ຢູ່ໃນ ຄູ່ມື ວ່າດ້ວຍການດຳເນີນງານ ຂອງ ໂຄງການ. ຢູ່ໃນຂະບວນການນີ້, ແຕ່ລະເຈົ້າຂອງໂຄງການ **ກວດກາທຸກໆກິດຈະກຳຍ່ອຍ ທີ່ນອນຢູ່ໃນແຜນປະຈຳໄຕມາດ**, ຕໍ່ ກັບຄວາມສ່ຽງທີ່ກ່ຽວຂ້ອງ ທີ່ເລືອກໂດຍທີມງານການປົກປ້ອງ. ທີມງານການປົກປ້ອງ ຈະນຳໃຊ້ "ລາຍການກວດກາສິ່ງແວດລ້ອມ ແລະ ສັງຄົມ" ທີ່ສາມາດເບິ່ງໄດ້ ຢູ່ໃນເອກະສານຊ້ອນທ້າຍ 5 ເພື່ອກະກຽມ "ລາຍການກວດກາ ບັນຊີຄວາມສ່ຽງ ແລະ ESS". ດ້ວຍເຫດນີ້, ມັນຈຶ່ງຮັບປະກັນວ່າ ທີມງານການປົກປ້ອງ ຈັດສັນຄວາມສ່ຽງທີ່ແຕກຕ່າງກັນ ໃຫ້ກັບກິດຈະກຳຍ່ອຍທັງຫມົດ ທີ່ກ່ຽວຂ້ອງກັບເຂົາເຈົ້າ. ໃນອີກດ້ານໜຶ່ງ, ການນຳໃຊ້ຂະບວນການນີ້ ປະກອບສ່ວນເຂົ້າໃນການປູກຈິດສຳນຶກ ກ່ຽວກັບ ຄວາມສ່ຽງ E&S ແກ່ ຜູ້ຈັດຕັ້ງປະຕິບັດ ແລະ ເຈົ້າຂອງໂຄງການ, ແລະ ຜູກມັດໃຫ້ເຂົາເຈົ້າກວດສອບກິດຈະກຳຍ່ອຍ ທຽບກັບ ຄວາມສ່ຽງ. ແຜນການປະຈຳໄຕມາດ ທີ່ມີ Risk logs ຄັດຕິດ ຖືກສົ່ງໄປຫາ ກົມປ່າໄມ້ເພື່ອທົບທວນຄືນ.

*ຕາຕະລາງ 7: ເຄື່ອງມືການຕິດຕາມການປົກປ້ອງ*

| ເຄື່ອງມືການປົກປ້ອງ | ລາຍລະອຽດ ແລະ ຈຸດປະສົງ | ໄລຍະເວລາ | ຜູ້ຮັບຜິດຊອບ |
|---|---|---|---|
| ເຄື່ອງມືເພື່ອຈັດຕັ້ງປະຕິບັດ 1 ຫຼື 2,3 ຄັ້ງ | | | |
| *ການກວດກາລະເບີດທີ່ບໍ່ທັນແຕກ* | ເພື່ອຢືນຢັນ, ຖ້າບັນດາບ້ານມີຄວາມສ່ຽງຈາກລະເບີດບໍ່ທັນແຕກບໍ່ວ່າກໍລະນີໃດກໍ່ຈະບໍ່ຖືກຄັດເລືອກເປັນບ້ານເປົ້າໝາຍ | ໃນໄລຍະການຄັດເລືອກບ້ານເປົ້າໝາຍ | ໜ່ວຍງານຄຸ້ມຄອງໂຄງການຂັ້ນແຂວງ |
| *ແຜນທີ່ຜູ້ໃຫ້ທຶນ* | ສະພາບລວມຂອງໂຄງການຜູ້ໃຫ້ທຶນອື່ນໆທີ່ກ່ຽວຂ້ອງໃນທຸກເມືອງເປົ້າໝາຍ, ເພື່ອບໍ່ໃຫ້ມີການກິດຈະກຳຊໍ້າຊ້ອນ ແລະ ເຮັດໃຫ້ມີການສົມທົບກັນ. | ຢ່າງໜ້ອຍໄລຍະຕົ້ນ, ໄລຍະກາງ | ທີມງານປົກປ້ອງທີ່ມີຂໍ້ມູນຈາກຂອງໜ່ວຍງານຄຸ້ມຄອງໂຄງການຂັ້ນແຂວງ ແລະ ເມືອງ |
| *ການສຳຫຼວດພະນັກງານຂັ້ນເມືອງ* | ປະເມີນຄວາມອາດສາມາດ, ແຮງຈູງໃຈ ແລະ ຄວາມພ້ອມຂອງຄອມພິວເຕີ ແລະ ອິນເຕີເນັດ ເພື່ອຈັດຕັ້ງປະຕິບັດຖານຂໍ້ມູນ (Cloud Database) (ກໍລະນີຖືກຈັດຕັ້ງປະຕິບັດ) ແລະ ປະຕິບັດລະບົບການປົກປ້ອງ. | ຢ່າງໜ້ອຍໄລຍະຕົ້ນ, ໄລຍະກາງ | ທີມງານປົກປ້ອງ |
| *ການສຳຫຼວດການຍົກຍ້າຍ* | ກວດສອບການຍົກຍ້າຍບ້ານເປົ້າໝາຍທີ່ອາດຈະເຮັດໃຫ້ໂຄງການຢຸດການເຮັດວຽກໃນບ້ານເຫຼົ່ານີ້. | ຢ່າງໜ້ອຍໄລຍະຕົ້ນ, ໄລຍະກາງ | ທີມງານປົກປ້ອງທີ່ມີຂໍ້ມູນຈາກ ໜ່ວຍງານຄຸ້ມຄອງໂຄງການຂັ້ນແຂວງ ແລະ ເມືອງ |
| *ການສຳຫຼວດການລົງທຶນ* | ລະອຽດກ່ຽວກັບການລົງທຶນຂະໜາດໃຫຍ່ໃນປະຈຸບັນ ແລະທີ່ຈະມາເຖິງໃນບ້ານເປົ້າໝາຍ, ເຊິ່ງອາດຈະສົ່ງຜົນກະທົບຕໍ່ການນຳໃຊ້ທີ່ດິນ. | ຢ່າງໜ້ອຍໄລຍະຕົ້ນ, ໄລຍະກາງ | ທີມງານປົກປ້ອງທີ່ມີຂໍ້ມູນຈາກ ໜ່ວຍງານຄຸ້ມຄອງໂຄງການຂັ້ນແຂວງ ແລະ ເມືອງ |

| | | | |
|---|---|---|---|
| *ຂໍ້ມູນບ້ານ* | ສ້າງຂໍ້ມູນເສດຖະກິດ-ສັງຄົມທີ່ກ່ຽວຂ້ອງໃຫ້ແຕ່ລະບ້ານເປົ້າໝາຍ ເພື່ອສະໜັບສະໜູນການວາງແຜນກິດຈະກຳຂັ້ນບ້ານ. | 1-ຄັ້ງໃນຂັ້ນຕົ້ນຂອງການຈັດຕັ້ງປະຕິບັດ | ຜູ້ຈັດຕັ້ງປະຕິບັດກິດຈະກຳ |
| *ການປະເມີນຄວາມອາດສາມາດທາງດ້ານພາສາລາວໃນບ້ານເປົ້າໝາຍ* | ໃຫ້ຂໍ້ມູນກ່ຽວກັບຄວາມສາມາດທາງດ້ານພາສາລາວໃນບ້ານເປົ້າໝາຍ ເພື່ອສົ່ງເສີມການນຳໃຊ້ພາສາທ້ອງຖິ່ນຖ້າມີຜົນດີ ແລະ ຈຳເປັນ. | ຄັ້ງໃນໄລຍະຕົ້ນໆຂອງໂຄງການ (ເຊັ່ນ: FPIC 1) | ຜູ້ຈັດຕັ້ງປະຕິບັດກິດຈະກຳ |
| *ຂະບວນການສ້າງຄວາມເຫັນດີເຫັນພ້ອມດ້ວຍຄວາມຕື່ນຕົວສະໝັກໃຈໂດຍໄດ້ຮັບຂໍ້ມູນລ່ວງໜ້າ (FPIC)* | ໃຫ້ແນ່ໃຈວ່າຜູ້ທີ່ໄດ້ຮັບຜົນປະໂຫຍດເຂົ້າໃຈຜົນກະທົບຂອງໂຄງການ ແລະໃຫ້ພວກເຂົາສາມາດສະແດງຄວາມຄິດເຫັນຂອງເຂົາເຈົ້າ, ຖ້າຈະເຂົ້າຮ່ວມ ຫຼື ບໍ່ເຂົ້າຮ່ວມໂຄງການ. | ກ່ອນທີ່ຈະດຳເນີນກິດຈະກຳໂຄງການທີ່ສຳຄັນ | ແນວລາວສ້າງຊາດ ແລະ ສະຫະພັນແມ່ຍິງລາວ |
| ເຄື່ອງມືທີ່ຈະໄດ້ຮັບການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ | | | |
| ***Risk-Log ແລະ ບັນຊີລາຍການກວດກາສອບ ESS*** | ການກວດສອບ ກິດຈະກຳຍ່ອຍທັງໝົດ ໂດຍທຽບກັບ ຄວາມສ່ຽງ E&S ທີ່ກ່ຽວຂ້ອງທີ່ເລືອກ. | ໃນຊ່ວງໄລຍະການທົບທວນຄືນ / ການກວດສອບແຜນການປະຈຳໄຕມາດ ແຕ່ລະຄັ້ງ | ເຈົ້າຂອງໂຄງການທັງໝົດ (ຜູ້ຈັດຕັ້ງປະຕິບັດກິດຈະກຳ) |
| *ລາຍການກວດແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ* | ປູກຈິດສຳນຶກກ່ຽວກັບ ແລະ ເຕືອນຜູ້ປະຕິບັດໃຫ້ພິຈາລະນາບັນຫາທີ່ກ່ຽວຂ້ອງຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ທັງຫມົດໃນລະຫວ່າງການປະຕິບັດກິດຈະກຳ. | ກ່ອນທີ່ແຕ່ລະກິດຈະກຳຈະຖືກຈັດຕັ້ງປະຕິບັດໃນບ້ານ | ຜູ້ຈັດຕັ້ງປະຕິບັດກິດຈະກຳ |
| *ການປະເມີນຄວາມເຂົ້າໃຈຂອງຕົນເອງໂດຍຊາວບ້ານ* | ປະເມີນຄວາມເຂົ້າໃຈຂອງຊາວບ້ານທີ່ໄດ້ໃຫ້ຂໍ້ມູນແກ່ເຂົາເຈົ້າໃນລະຫວ່າງການປະຊຸມບ້ານ. ຫມາຍເຫດ: ການປະເມີນຕົນເອງນີ້ຍັງຈະຍົກເອົາບັນຫາພາສາທີ່ອາດເກີດຂຶ້ນ. | ໃນຕອນທ້າຍຂອງກອງປະຊຸມ | ຜູ້ຈັດຕັ້ງປະຕິບັດກິດຈະກຳ |
| *ກວດສອບຄວາມເຂົ້າໃຈຄວາມສ່ຽງຂອງການນຳໃຊ້ສານເຄມີ ແລະ ການປູກພືດຊະນິດດ່ຽວ* | ປະເມີນໃຫ້ຮູ້ວ່າ ຖ້າໄດ້ໃຫ້ຂໍ້ມູນ ແກ່ຊາວບ້ານ ກ່ຽວກັບ ສານເຄມີ ແລະ ການປູກພືດຊະນິດດ່ຽວແມ່ນຊາວບ້ານໄດ້ຮັບຄວາມເຈົ້າໃຈ | ໃນຕອນທ້າຍຂອງກິດຈະກຳປູກຈິດສຳນຶກ | ຜູ້ຈັດຕັ້ງປະຕິບັດກິດຈະກຳກະສິກຳ (DAFO) |
| *ລາຍຊື່ຜູ້ເຂົ້າຮ່ວມ* | ລາຍຊື່ຜູ້ເຂົ້າຮ່ວມທັງໝົດໃນທຸກກິດຈະກຳ, ລວມທັງມີຂໍ້ມູນກ່ຽວກັບຊົນເຜົ່າ ແລະ ເພດເພື່ອປະເມີນ, ແມ່ຍິງ ແລະ ຜູ້ຊາຍ ຂອງທຸກຊົນເຜົ່າຕ້ອງມີໜ້າເຂົ້າຮ່ວມ. (ສຳລັບຜູ້ເຂົ້າຮ່ວມຝ່າຍລັດຕ້ອງລວມມີທັງຕຳແຫນ່ງຂອງເຂົາເຈົ້າພ້ອມ) | ສຳລັບກິດຈະກຳທັງຫມົດ, ໃນທຸກລະດັບ | ຜູ້ຈັດຕັ້ງປະຕິບັດກິດຈະກຳ |
| *ການປະເມີນຜົນ/ການທົດສອບການຝຶກອົບຮົມ ແຜນຄຸ້ມຄອງ* | ປະເມີນ/ທົດສອບລະດັບຄວາມເຂົ້າໃຈຂອງຜູ້ເຂົ້າຮ່ວມໃນການຝຶກອົບຮົມ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP). | ໃນຕອນທ້າຍຂອງການຝຶກອົບຮົມແຜນຄຸ້ມ | ທີມງານປົກປ້ອງ ແລະທີ່ປຶກສາ ອົງການ ຈີໄອແຊດ (GIZ) |

| | | | |
|---|---|---|---|
| *ສັງຄົມ ແລະ ສິ່ງແວດລ້ອມ (ESMP)* | | ຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) | |
| *ການໃຊ້ພາສາໂດຍຜູ້ປະຕິບັດ* | ໃຫ້ຂໍ້ມູນກ່ຽວກັບພາສາທີ່ໃຊ້ໃນກອງປະຊຸມຂັ້ນບ້ານ ເພື່ອໃຫ້ແນ່ໃຈວ່າຢູ່ໃນບ້ານທີ່ມີລະດັບຄວາມສາມາດດ້ານພາສາລາວຕໍ່າ ຄວນນໍາໃຊ້ພາສາທ້ອງຖິ່ນນໍາ. | ສໍາລັບກອງປະຊຸມບ້ານທັງຫມົດ | ຜູ້ຈັດຕັ້ງປະຕິບັດກິດຈະກໍາ |
| *ກົນໄກແກ້ໄຂຄໍາຮ້ອງທຸກ* | ເປີດໂອກາດໃຫ້ຜູ້ໄດ້ຮັບຜົນປະໂຫຍດ ແລະ ຜູ້ມີສ່ວນກ່ຽວຂ້ອງປະເພດອື່ນໆໄດ້ນໍາໃຊ້ ເພື່ອຍົກເອົາບັນຫາຂໍ້ຂ້ອງໃຈທີ່ເຂົາເຈົ້າອາດມີຕໍ່ກັບໂຄງການ. | ສືບຕໍ່ (ແລະນໍາສະເຫນີໃນໄລຍະຕົ້ນຂອງໂຄງການ) | ທີມງານປົກປ້ອງ, ທີ່ປຶກສາ ອົງການ ຈີໄອແຊດ (GIZ) ແລະຜູ້ຈັດຕັ້ງປະຕິບັດກິດຈະກໍາ |
| *ການປະເມີນ/ການທົດສອບກ່ຽວກັບການແນະນໍາກົນໄກແກ້ໄຂຄໍາຮ້ອງທຸກ* | ປະເມີນ, ຖ້າຊາວບ້ານເຂົ້າໃຈແລ້ວ, ຊ່ອງທາງໃດທີ່ເຂົາເຈົ້ານໍາໃຊ້ເພື່ອຮ້ອງທຸກ. | ໃນຕອນທ້າຍຂອງການແນະນໍາກົນໄກການແກ້ໄຂຂໍ້ຮ້ອງທຸກ (GRM) ໃຫ້ແກ່ຊາວບ້ານ | ຜູ້ຈັດຕັ້ງປະຕິບັດກິດຈະກໍາ |
| *ການຄັດເລືອກຄູ່ຮ່ວມງານເອກະຊົນ* | ການປະເມີນ, ຖ້າຫາກວ່າຄູ່ຮ່ວມງານທີ່ມີທ່າແຮງມີປະຫວັດທາງລົບຕໍ່ບັນຫາສັງຄົມ ແລະສິ່ງແວດລ້ອມ ແລະໄດ້ຮັບການປົກປ້ອງຂໍ້ມູນກ່ຽວກັບຄູ່ຮ່ວມງານທີ່ມີທ່າແຮງ. | ກ່ອນທີ່ຈະຕົກລົງໃດໆກັບຄູ່ຮ່ວມງານເອກະຊົນ | ທີ່ປຶກສາ ຫຼືຊ່ຽວຊານເພື່ອອໍານວຍຄວາມສະດວກກ່ຽວກັບທຶນສົມທົບ (Matching Grants) ແລະ ນໍາໄປສູ່ຄວາມສອດຄ້ອງກັນ |
| ***ການບັນທຶກ ຂັ້ນຕອນຊອກຫາໂອກາດ*** | ປົກປັກຮັກສາ ແລະ ປົກປ້ອງ ຄວາມສົມບູນ ທາງດ້ານວັດທະນະທໍາ, ປະຫວັດສາດ, ໂບຮານຄະດີ ຫຼື ໂຄງສ້າງທີ່ໄດ້ພົບເຫັນ ໃນຊ່ວງໄລຍະ ການເຮັດວຽກ ໃຫ້ແກ່ກິດຈະກໍາຂອງໂຄງການ. | ທຸກຄັ້ງ, ວຽກທາງທາງກາຍະພາບ ຖືກປະຕິບັດ ສໍາລັບກິດຈະກໍາ ຂອງໂຄງການ. | ທີມງານຜູ້ຈັດຕັ້ງປະຕິບັດຮັບຜິດຊອບ ໃນການປະສານງານ ກິດຈະກໍາທີ່ກ່ຽວຂ້ອງ. |
| ***ບົດລາຍງານ ການຈັດຕັ້ງປະຕິບັດ ຂັ້ນຕອນກ່ຽວກັບ UXO*** | ເພື່ອຮັບປະກັນຄວາມປອດໄພ ຂອງ ພາກສ່ວນກ່ຽວຂ້ອງທັງໝົດ ທີ່ຢູ່ໃນສະຖານະການ ທີ່ມີຄວາມສ່ຽງສູງ ຈາກລະເບີດບໍ່ທັນແຕກ. | ທຸກໆຄັ້ງ ທີ່ໄປຢ້ຽມຢາມ ຫຼື ລົງເຮັດວຽກ ໃນເຂດທີ່ມີຄວາມສ່ຽງສູງ ຈາກລະເບີດບໍ່ທັນແຕກ ບໍ່ສາມາດຫຼີກລ່ຽງໄດ້ | ທີມງານຜູ້ຈັດຕັ້ງປະຕິບັດຮັບຜິດຊອບໃນການປະສານງານ ກິດຈະກໍາທີ່ກ່ຽວຂ້ອງ. |

ນອກເຫນືອໄປຈາກເຄື່ອງມືປົກປ້ອງເຫຼົ່ານີ້ແລ້ວ, ຍັງມີຂໍ້ມູນຫຼາຍລາຍການທີ່ຈະເກັບກໍາ (ເຊັ່ນ: ຕົວຊີ້ວັດ ແລະການຕິດຕາມອື່ນໆທີ່ຕ້ອງເຮັດ, ຕາມທີ່ລະບຸໄວ້ໃນເອກະສານນີ້) ຈະຖືກເຊື່ອມໂຍງເຂົ້າໃນເຄື່ອງມືທາງດ້ານຂໍ້ມູນປົກກະຕິຂອງທຸກອົງປະກອບ. ເຄື່ອງມືເຫຼົ່ານີ້ບໍ່ໄດ້ຖືກກ່າວມາໃນທີ່ນີ້, ແຕ່ຈະໄດ້ຮັບການລະບຸໄວ້ເປັນ "ແຫຼ່ງຂໍ້ມູນ" ໃນ "ທາງວິຊາການ".

ການສ້າງຄວາມອາດສາມາດ
ການສ້າງຂີດຄວາມສາມາດທີ່ຈໍາເປັນເພື່ອປະຕິບັດລະບົບປ້ອງກັນແມ່ນໄດ້ອະທິບາຍໄວ້ໃນລາຍລະອຽດຂອງກິດຈະກໍາ 2

***ກອບກິດຈະກຳ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ***

**ໂດຍການນໍາໃຊ້ເຄື່ອງມືທີ່ອະທິບາຍຂ້າງເທິງນີ້ບວກກັບເຄື່ອງມືຂໍ້ມູນອື່ນ, ເຊິ່ງຂໍ້ມູນທີ່ກ່ຽວຂ້ອງຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ຈະຖືກບັນທຶກ, ທຸກໆດ້ານທີ່ກ່ຽວຂ້ອງກັບ ESMP ຈະຖືກຄຸ້ມຄອງ.**

ກິດຈະກໍາ **3-8 (**ຕົວຢ່າງ. 'ກິດຈະກໍາດ້ານວິຊາການ' ຂອງ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ນີ້) ໃຊ້ວິທີການ, ເຊິ່ງຕິດຕາມວົງຈອນການຄຸ້ມຄອງ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ໃນທາງທີ່ເປັນລະບົບ. ຈຸດປະສົງຂອງແຕ່ລະກິດຈະກໍາແມ່ນເພື່ອຫຼີກເວັ້ນບັນຫາການປົກປ້ອງ, ຫຼືຖ້າຫາກວ່າບັນຫາຍັງເກີດຂຶ້ນ, ການກວດສອບບັນຫາເຫຼົ່ານີ້ ແລະ ຫຼຸດຜ່ອນຢ່າງມີປະສິດທິຜົນ.

ສໍາລັບແຕ່ລະກິດຈະກໍາ, ທໍາອິດຈຸດປະສົງຂອງມັນໄດ້ຮັບການກໍານົດ ແລະ ຄໍາອະທິບາຍກ່ຽວກັບຜົນກະທົບທາງລົບທີ່ບໍ່ໄດ້ຕັ້ງໃຈສະເພາະຂອງມັນ ແລະຄວາມສ່ຽງພາຍນອກແມ່ນໄດ້ຮັບການສະໜອງ.

ຫຼັງຈາກນັ້ນ, ກອບການປົກປ້ອງບອກເຖິງລັກສະນະການປົກປ້ອງຫຼັກ. ສໍາລັບແຕ່ລະດ້ານທີ່ມັນຖືກອະທິບາຍຢ່າງລະອຽດ, ວິທີທີ່ສາມາດຫຼີກລ່ຽງໄດ້ລ່ວງຫນ້າ (ເຊັ່ນ: ໂດຍການພິຈາລະນາໃນປຶ້ມແນະນໍາ, ໂດຍການປູກຈິດສໍານຶກກ່ຽວກັບບັນຫາຫຼືໂດຍການເກັບກໍາຂໍ້ມູນສະເພາະ). ເຖິງຢ່າງໃດກໍຕາມ, ໄດ້ຮັບຮູ້ວ່າ, ບັນດາມາດຕະການປ້ອງກັນຄວາມປອດໄພບໍ່ທັນສະເໜີຕົ້ນສະເໜີປາຍຈະສາມາດຫຼີກລ້ຽງບັນຫາການປົກປ້ອງທີ່ຈະເກີດຂຶ້ນ. ດັ່ງນັ້ນ, ແຕ່ລະດ້ານການປ້ອງກັນຕ້ອງໄດ້ຮັບການຕິດຕາມຢ່າງຕໍ່ເນື່ອງ ແລະ (ຖ້າພົບບັນຫາຕາມຂໍ້ມູນການຕິດຕາມ) ຈໍາເປັນຕ້ອງໄດ້ຫຼຸດຜ່ອນລົງ. ສໍາລັບລັກສະນະທີ່ສໍາຄັນໂດຍສະເພາະ, ຕົວຊີ້ວັດທີ່ມີເປົ້າຫມາຍແມ່ນໄດ້ກໍານົດຂຶ້ນ.

ໂດຍການຕິດຕາມກວດກາຢ່າງເປັນລະບົບໃນທຸກດ້ານ, ບັນຫາການປົກປ້ອງຄວນໄດ້ຮັບການຄຸ້ມຄອງ ແລະ ຫຼຸດຜ່ອນຢ່າງມີປະສິດທິຜົນ.

**ການຕິດຕາມການປົກປ້ອງປະກອບມີ:**

- ການຕິດຕາມການປະຕິບັດຕາມ
  - ບ່ອນທີ່ມີຂໍ້ກໍານົດການປົກປ້ອງທັງຫມົດແມ່ນສອດຄ້ອງກັບຕາມຄໍາຖະແຫຼງການດ້ານນະໂຍບາຍການປົກປ້ອງ
  - ພັດທະນາ ແລະປັບປຸງບັນຊີລາຍຊື່ຂອງຂໍ້ມູນຫຼັກ ແລະຂໍ້ມູນທີ່ຈະໄດ້ຮັບ ໃນລະຫວ່າງການປະຕິບັດ
- ຕ້ອງມີການຕິດຕາມຄຸນນະພາບ
  - ປະເມີນຄວາມພຽງພໍ, ຄວາມເໝາະສົມ, ປະສິດທິພາບ ແລະປະສິດທິຜົນຂອງການຈັດຕັ້ງປະຕິບັດ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP)
  - ລວມເອົາຕົວແປການຕິດຕາມ

ຄວາມສ່ຽງຕໍ່ໄປນີ້ຕ້ອງໄດ້ຮັບການແກ້ໄຂ: ຜູ້ປະຕິບັດອາດຈະບໍ່ປະຕິບັດຕາມເຄື່ອງມືການຕິດຕາມ ແລະຄໍາແນະນໍາທີ່ສະຫນອງໃຫ້ ແລະຮຽກຮ້ອງໃຫ້ມີການກວດສອບຄຸນນະພາບຢ່າງຕໍ່ເນື່ອງ, ເຊິ່ງຄວນຈະຖືກສະຫນອງໃຫ້ທັນເວລາໂດຍທີມງານປົກປ້ອງ

ຜ່ານຖານຂໍ້ມູນອອນໄລນ໌. ຖານຂໍ້ມູນຍັງສາມາດບັງຄັບໃຊ້ເຄື່ອງມືມາດຕະຖານໂດຍການສະໜອງຂໍ້ມູນໃຫ້ຜູ້ປະຕິບັດ. ເພື່ອໃຫ້ຜູ້ປະຕິບັດທັງໝົດຮູ້ກ່ຽວກັບຄວາມຕ້ອງການຂອງລະບົບ, ການຝຶກອົບຮົມ ແລະການເປັນຄູຝຶກແມ່ນກົນແຈສຳຄັນ.

**ໄລຍະເວລາ**

ລະບົບການປົກປ້ອງໄດ້ເຊື່ອງສານເຂົ້າໃນການດຳເນີນງານຂອງໂຄງການ ແລະ ໄດ້ດຳເນີນໄປຢ່າງບໍ່ຢຸດຢັ້ງ. ໄລຍະເວລາທີ່ສຳຄັນໂດຍສະເພາະ:

- ລາຍງານປະຈຳປີຕໍ່ ກອງທຶນດິນຟ້າອາກາດສີຂຽວ (GCF)
- ຂໍ້ມູນພື້ນຖານທັງໝົດຄວນຖືກເກັບກຳພາຍໃນ 18 ເດືອນທຳອິດຂອງການເລີ່ມໂຄງການ.

ຂໍ້ມູນນີ້ຈະຖືກລວບລວມໂດຍສົມທົບກັບການຈັດຕັ້ງປະຕິບັດກິດຈະກຳ (ໄລຍະຕົ້ນ) ແລະສາມາດລວບລວມໄດ້ໂດຍການໃຊ້ຂໍ້ມູນບ້ານໃນຖານຂໍ້ມູນ.

**ຄວາມຮັບຜິດຊອບ & ການປ້ອນຂໍ້ມູນຮ່ວມກັນ**

ໂດຍລວມແລ້ວ, ການປະຕິບັດລະບົບການປົກປ້ອງແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງທີມງານປົກປ້ອງທີ່ມີສັນຍາ, ແຕ່ກ່ຽວຂ້ອງກັບຜູ້ມີສ່ວນກ່ຽວຂ້ອງຂອງໂຄງການອື່ນໆ (ເບິ່ງຕາຕະລາງ 7 ກ່ຽວກັບເຄື່ອງມືຕິດຕາມກວດກາດ້ານຄວາມປອດໄພຂ້າງເທິງ).

**ຕົວຊີ້ວັດ**

- ເຄື່ອງມືຕິດຕາມກວດກາຄວາມປອດໄພທັງໝົດແມ່ນໄດ້ສ້າງຕັ້ງຂຶ້ນ ແລະ ຈັດຕັ້ງປະຕິບັດຕາມເວລາທີ່ກຳນົດໄວ້
- ຈຸດສຳຄັນຂອງແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ຕ້ອງໄດ້ຮັບການແປເປັນພາສາລາວ
- ສ້າງລາຍການກວດແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP)
- ສ້າງລະບົບຕິດຕາມຕົວຊີ້ວັດທີ່ເປັນເປົ້າໝາຍ ແລະ ລາຍງານຕາມ
- ສ້າງຂໍ້ມູນບ້ານເຊິ່ງປະກອບດ້ວຍຂໍ້ມູນພື້ນຖານເສດຖະກິດ-ສັງຄົມທີ່ເກັບກຳຈາກວິທີການປະຕິບັດຕ່າງໆ
- ສຳຫຼວດລະດັບຄວາມຮູ້ຂອງພະນັກງານຕິດຕາມ ແລະ ປະເມີນຜົນຂັ້ນເມືອງ, ຄວາມອາດສາມາດ ແລະ ສະພາບແວດລ້ອມໃນການເຮັດວຽກແມ່ນໄດ້ປະຕິບັດສອງຄັ້ງໄລຍະຂອງໂຄງການ
- ການສ້າງແຜນທີ່ຜູ້ໃຫ້ທຶນເຊິ່ງສ້າງລາຍຊື່ໂຄງການກະສິກຳ ແລະ ປ່າໄມ້ໃນພື້ນທີ່ໃດໜຶ່ງ, ແລະໃຫ້ລາຍລະອຽດກ່ຽວກັບຜູ້ໄດ້ຮັບຜົນປະໂຫຍດ, ແລະ ພະນັກງານລັດ ທີ່ເຮັດວຽກໃນໂຄງການເພື່ອຊ່ວຍເຫຼືອການປະສານງານ ແລະ ເພື່ອຫຼີກລ່ຽງການຊໍ້າຊ້ອນແມ່ນໄດ້ດຳເນີນສອງຄັ້ງ.
- ການນຳໃຊ້ບັນຊີລາຍການກວດກາ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) "ກ່ອນການຈັດຕັ້ງປະຕິບັດ" 50% ພາຍຫຼັງການຈັດຕັ້ງປະຕິບັດໂຄງການໃນປີ 1, ເພີ່ມຂຶ້ນເຖິງ 90% ພາຍຫຼັງປີທີ 3 ຂອງການຈັດຕັ້ງປະຕິບັດໂຄງການ.
- ຢ່າງໜ້ອຍ 50% ຂອງເຈົ້າຂອງໂຄງການ ສາມາດນຳໃຊ້ລະບົບໄດ້ໃນທ້າຍປີ 1, ສຳເລັດ 85% ຫຼັງຈາກປີ 2.

### 9.2. ກິດຈະກຳ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ : ການສ້າງຄວາມອາດສາມາດທີ່ກ່ຽວຂ້ອງແຜນຄຸ້ມຄອງ ສັງຄົມ ແລະ ສິ່ງແວດລ້ອມ

**ຈຸດປະສົງ**

| |
|---|
| ຈຸດປະສົງຂອງກິດຈະກຳ **2** ແມ່ນເພື່ອໃຫ້ແນ່ໃຈວ່າທຸກພາກສ່ວນທີ່ກ່ຽວຂ້ອງມີຄວາມຮູ້ທັງໝົດທີ່ຕ້ອງການເພື່ອຈັດຕັ້ງປະຕິບັດ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ຢ່າງມີປະສິດທິຜົນ. |

ກິດຈະກຳນີ້ປະກອບມີ:

- ການຮັບປະກັນຄຸນນະພາບຂອງການວາງແຜນໂດຍລວມ, ການເກັບກຳຂໍ້ມູນ ແລະ ການລາຍງານຂອງຜູ້ມີສ່ວນກ່ຽວຂ້ອງທັງໝົດໃນໂຄງການ. (ເຊັ່ນວ່າ: ສາມາດນຳໃຊ້ລະບົບຖານຂໍ້ມູນອອນໄລນ໌)
- ການເສີມສ້າງຂີດຄວາມສາມາດໃນຫົວຂໍ້ທີ່ກ່ຽວຂ້ອງກັບ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ແລະ ໃນກອບກົດໝາຍທີ່ກ່ຽວຂ້ອງກັບທຸກຂົງເຂດການເຮັດວຽກຫຼັກຂອງໂຄງການ.
- ຄວາມເຂົ້າໃຈກ່ຽວກັບຂໍ້ແນະນຳທີ່ກ່ຽວຂ້ອງ (ເຊັ່ນ: ຂະບວນການສ້າງຄວາມເຫັນດີເຫັນພ້ອມດ້ວຍຄວາມຕື່ນຕົວສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ (FPIC), ການເຊື່ອມໂຍງບົດບາດຍິງຊາຍ ແລະ ສັງຄົມມີສ່ວນຮ່ວມ, ແຜນພັດທະນາກຸ່ມຄົນຊົນເຜົ່າ (EGDP), ກົນໄກແກ້ໄຂຄຳຮ້ອງທຸກ (GRM), …)
- ຄວາມເຂົ້າໃຈກ່ຽວກັບກອບກົດໝາຍແຫ່ງຊາດໃນສະພາບການໂຄງການທ້ອງຖິ່ນ, ເຊິ່ງລວມມີຂັ້ນຕອນການຄວບຄຸມ ແລະ ສືບສວນປ່າໄມ້ (SOPs)

**ຄວາມເປັນມາຂອງແນວຄວາມຄິດ**

**ແນວຄວາມຄິດໂດຍລວມ**

ຮັບປະກັນຄຸນນະພາບຂອງການເກັບກຳຂໍ້ມູນ "ຂໍ້ມູນຂອງບ້ານ" ແລະກິດຈະກຳການເກັບກຳຂໍ້ມູນອື່ນໆໃນຕອນຕົ້ນຂອງໄລຍະຂອງໂຄງການຈະສະໜອງບໍ່ພຽງແຕ່:

- ຂໍ້ມູນພື້ນຖານທີ່ສົມບູນແບບສຳລັບການຕິດຕາມກວດກາ,
- ແຕ່ຍັງຈະສະໜັບສະໜູນການສ້າງຄວາມສາມາດ ແລະ
- ປູກຈິດສຳນຶກດ້ານສິ່ງແວດລ້ອມ ແລະ ກົດໝາຍໃຫ້ແກ່ບຸກຄະລາກອນໂຄງການທັງໝົດ.

ໂຄງການດັ່ງກ່າວຕ້ອງການສ້າງຄວາມອາດສາມາດທີ່ກ່ຽວຂ້ອງກັບ ສັງຄົມ ແລະ ສິ່ງແວດລ້ອມ ຂອງຄູ່ຮ່ວມຈັດຕັ້ງປະຕິບັດທັງພາຍໃນ ແລະ ພາຍໃຕ້ ກະຊວງກະສິກຳ ແລະ ປ່າໄມ້ ຕົ້ນຕໍແມ່ນ ກົມປ່າໄມ້, ກົມສົ່ງເສີມກະສິກຳ ແລະ ໜ່ວຍງານຍ່ອຍໃນລະດັບຊາດລວມທັງ ພະແນກກະສິກຳ ແລະ ປ່າໄມ້, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການກະສິກຳ ແລະ ປ່າໄມ້, ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໂດຍມີການສະໜັບສະໜູນສະເພາະສຳລັບ ໜ່ວຍງານຄຸ້ມຄອງໂຄງການ ຂັ້ນແຂວງ ແລະ ຂັ້ນເມືອງ.

ເພື່ອບັນລຸຈຸດປະສົງນີ້, ທີມງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ຕ້ອງພັດທະນາການຝຶກອົບຮົມດ້ານການປົກປ້ອງທີ່

ປະກອບມີຫຼັກການ, ຂໍ້ກໍານົດ, ແລະການປະຕິບັດການປົກປ້ອງທີ່ກ່ຽວຂ້ອງ. ສິ່ງນີ້ຈະຖືກລວມເຂົ້າຢູ່ໃນຂອບເຂດທີ່ກວ້າງທີ່ສຸດເທົ່າທີ່ເປັນໄປໄດ້ຂອງການຝຶກອົບຮົມ "ສະເພາະພື້ນທີ່ເຮັດວຽກ" ທີ່ໂຄງການສົ່ງໃຫ້ຜູ້ຈັດຕັ້ງປະຕິບັດ.

ພະນັກງານອົງການ ຈີໄອແຊດ (GIZ) ຈໍາເປັນຕ້ອງໄດ້ລວມເອົາຫົວຂໍ້ທັງໝົດທີ່ລະບຸໄວ້ໃນຕາຕະລາງຂ້າງເທິງ (ເພດ, ຊົນເຜົ່າ, ກົນໄກແກ້ໄຂຄໍາຮ້ອງທຸກ, ຊີວະນາໆພັນ ແລະ ການຄຸ້ມຄອງເຄື່ອງປ່າຂອງດົງ) ເຂົ້າໃນການຝຶກອົບຮົມທີ່ກ່ຽວຂ້ອງ ກ່ອນການຈັດຕັ້ງປະຕິບັດວຽກງານຫຼັກໆ. ໃນນີ້ລວມມີການຝຶກອົບຮົມໃຫ້ແກ່ຜູ້ຈັດຕັ້ງປະຕິບັດຈາກຫ້ອງການຂອງລັດ ແລະອົງການອົງການຈັດຕັ້ງທາງສັງຄົມ ເຊັ່ນ: ສູກກາງແນວລາວສ້າງຊາດ (LNFD) ແລະ ສະຫະພັນແມ່ຍິງລາວ (LWU) ດັ່ງທີ່ໄດ້ກ່າວໄວ້ໃນຕາຕະລາງຂ້າງເທິງ.

ໂດຍສົມທົບກັບກິດຈະກໍາການສ້າງຄວາມອາດສາມາດທາງດ້ານກົດຫມາຍຂອງໂຄງການ, ໂຄງການຈະດໍາເນີນການທົດສອບຄວາມຮູ້ກ່ອນ ແລະ ຫລັງ ເພື່ອປະເມີນລະດັບ (ຕົວຢ່າງ) ຄວາມເຂົ້າໃຈທາງດ້ານກົດຫມາຍຂອງຜູ້ເຂົ້າຮ່ວມແຕ່ລະຄົນ. ການປະຕິບັດນີ້ມີຈຸດປະສົງເພື່ອຊ່ວຍໃຫ້ການອອກແບບ ແລະ ປັບປຸງອຸປະກອນການຝຶກອົບຮົມ ແລະ ວິທີການຝຶກອົບຮົມເພື່ອສະທ້ອນໃຫ້ເຫັນຄວາມຕ້ອງການການຝຶກອົບຮົມຕົວຈິງ ແລະ ຜົນໄດ້ຮັບທີ່ດີກວ່າ. ການທົດສອບຍັງຈະຖືກນໍາໃຊ້ເປັນຕົວຊີ້ວັດເພື່ອຕິດຕາມກວດກາ:

- ການປັບປຸງຄວາມຮູ້ທາງດ້ານກົດໝາຍໃນໄລຍະໂຄງການ;
- ຜົນປະໂຫຍດຂອງບຸກຄົນ ແລະ ຄວາມຕ້ອງການສໍາລັບການສ້າງຄວາມເຂັ້ມແຂງກ່ຽວກັບຄວາມຮູ້ດ້ານກົດໝາຍ;
- ສໍາຄັນທີ່ສຸດເພື່ອຮັບປະກັນໃຫ້ຜູ້ເຂົ້າຮ່ວມມີຄວາມເຂົ້າໃຈດີກ່ຽວກັບກອບກົດໝາຍ, ຫຼັກການ ແລະຂໍ້ກໍານົດ.

***ຄວາມສ່ຽງພາຍນອກ***

ຄວາມສ່ຽງຈໍານວນຫນຶ່ງທີ່ຖືກກໍານົດໃນລະຫວ່າງຂະບວນການປຶກສາຫາລື ການປະເມີນຜົນກະທົບທາງດ້ານສັງຄົມ ແລະສິ່ງແວດລ້ອມ (ESIA) ແລະ ແຜນການຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ໃນລະດັບເມືອງ ແລະ ແຂວງປະກອບມີ[2]:

- ການຮັບຮູ້ທີ່ຈໍາກັດກ່ຽວກັບນະໂຍບາຍການປົກປ້ອງ, ໃນບັນດາພະນັກງານຂອງລັດ (ເຖິງແມ່ນວ່າລະບົບການປົກປ້ອງຂອງປະເທດໄດ້ຮັບການແນະນໍາ ແລະປະຕິບັດໂດຍ ທະນະຄານໂລກ ແລະ ທະນະຄານພັດທະນາອາຊີ ໃນທົດສະວັດທີ່ຜ່ານມາ, ການປະເຊີນຫນ້າກັບບັນຫາເຫຼົ່ານີ້ແມ່ນບໍ່ສະເຫມີກັນ). ການຂາດພະນັກງານທີ່ໄດ້ຮັບການຝຶກອົບຮົມເພື່ອຈັດຕັ້ງປະຕິບັດກິດຈະກໍາແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ຈະຈໍາກັດຄວາມສາມາດຂອງຜູ້ປະຕິບັດຢ່າງຖືກຕ້ອງໃນການແກ້ໄຂສິດທິຂອງປະຊາຊົນຜູ້ດ້ອຍໂອກາດໃນການມີສ່ວນຮ່ວມຢ່າງເທົ່າທຽມກັນ.
- ການຂາດການເຂົ້າເຖິງອຸປະກອນ, ຂາດການສະໜັບສະໜູນຢ່າງຕໍ່ເນື່ອງ ລວມທັງການຝຶກອົບຮົມ ແລະ ການຕິດຕາມຫຼັງການຝຶກອົບຮົມ, ແລະ ການປ່ຽນແປງບຸກຄະລາກອນຢູ່ຂັ້ນແຂວງ ແລະ ເມືອງເລື້ອຍໆ ສົ່ງຜົນໃຫ້ຂາດຄວາມຮູ້.
- ການບັງຄັບໃຊ້ກົດໝາຍ ແລະ ຄວາມຮູ້ທາງດ້ານກົດໝາຍແມ່ນຂຶ້ນກັບຄວາມສາມາດຂອງອໍານາດການປົກຄອງທ້ອງຖິ່ນ, ເຮັດໃຫ້ເກີດຄວາມບໍ່ສອດຄ່ອງຂອງກົດໝາຍ.

[2] Note: In this version of the ESMP, consultation results refer to consultations in the framework of Project 1. The upcoming final version of this ESMP will consider Project 2 consultation results.

- ອຳນາດການປົກຄອງທ້ອງຖິ່ນ ແລະ ຊາວບ້ານສະແດງໃຫ້ເຫັນຄວາມເຊື່ອໝັ້ນໃນກົດໝາຍຂອງຕົນເອງຫຼາຍເກີນໄປ ແລະ ກ່ຽວຂ້ອງກັບການດຳເນີນຊີວິດຂອງເຂົາເຈົ້າແນວໃດ, ແນວໃດກໍ່ຕາມ, ຕົວຈິງແລ້ວເຂົາເຈົ້າບໍ່ສາມາດອະທິບາຍເຖິງກົດໝາຍພື້ນຖານ, ຫຼື ວິທີການເຫຼົ່ານີ້ຖືກຈັດຕັ້ງປະຕິບັດ, ແລະ ການກະທຳຂອງເຂົາເຈົ້າຊີ້ໃຫ້ເຫັນເຖິງລະດັບຄວາມເຂົ້າໃຈຜິດ.
- ການຂາດການສະໜັບສະໜູນໃນການປູກຈິດສຳນຶກຂອງລັດຂັ້ນທ້ອງຖິ່ນ ແລະ ການສ້າງຄວາມອາດສາມາດເປັນແຫຼ່ງຄວາມສ່ຽງຕໍ່ປ່າໄມ້, ສະນັ້ນ ການສະໜັບສະໜູນການເຜີຍແຜ່ ແລະ ແລກປ່ຽນຂໍ້ມູນຂ່າວສານຈຶ່ງເປັນພຽງຍຸດທະສາດການຫຼຸດຜ່ອນທີ່ເປັນໄປໄດ້.

**ຂະບວນການຄຸ້ມຄອງການປົກປ້ອງ**

ທີມງານປົກປ້ອງ ແລະ ທີ່ປຶກສາ ອົງການ ຈີໄອແຊດ (GIZ) ຮ່ວມມື ແລະ ພັດທະນາເຄື່ອງມື ແລະ ການຝຶກອົບຮົມຕໍ່ໄປນີ້ເພື່ອແກ້ໄຂແນວຄວາມຄິດ ແລະ ຄວາມສ່ຽງທີ່ລະບຸໄວ້ຂ້າງເທິງ.

**ຕາຕະລາງ 8: ການຝຶກອົບຮົມ**

| ຫົວຂໍ້ຝຶກອົບຮົມ | ຜູ້ທີ່ຕ້ອງໄດ້ຮັບການຝຶກອົບຮົມ | ການຝຶກອົບຮົມແມ່ນເຮັດໂດຍໃຜ/ວິທີໃດ? (ຜູ້ຮັບຜິດຊອບ) | ຄວນຝຶກເວລາໃດ (ກອບເວລາ) |
|---|---|---|---|
| *ການນຳໃຊ້ລະບົບໂດຍທົ່ວໄປທີ່ກ່ຽວຂ້ອງກັບການວາງແຜນ, ການເກັບກຳຂໍ້ມູນ ແລະ ລະບົບການລາຍງານ (ຖານຂໍ້ມູນອອນໄລນ໌, ການຂຽນບົດປະມານ)* | - ທີ່ປຶກສາແຫ່ງຊາດ<br>- ທີ່ປຶກສາແຂວງ<br>- ໜ່ວຍງານຄຸ້ມຄອງໂຄງການຂັ້ນແຂວງ<br>- ໜ່ວຍງານຄຸ້ມຄອງໂຄງການຂັ້ນເມືອງ<br>- ຜູ້ຈັດຕັ້ງປະຕິບັດທັງໝົດ | - ການຝຶກອົບຮົມພາກປະຕິບັດ ໂດຍທີມງານຕິດຕາມ ແລະ ປະເມີນຜົນ ແລະທີມງານປົກປ້ອງ.<br>- ການຝຶກອົບຮົມຢ່າງຕໍ່ເນື່ອງ ແລະການຮັບຮອງພະນັກງານໃໝ່. | - ຝຶກກ່ອນການຈັດຕັ້ງປະຕິບັດກິດຈະກຳໃດໜຶ່ງລວມທັງກ່ອນ FPIC1.<br>- ຝຶກຢ່າງຕໍ່ເນື່ອງ, ເນື່ອງຈາກທີມງານຕິດຕາມ ແລະ ປະເມີນຜົນ ຕິດຕໍ່ກັນຢ່າງຕໍ່ເນື່ອງກັບຜູ້ປະຕິບັດ ແລະທີ່ປຶກສາທັງໝົດ. |
| *"ການສ້າງຕັ້ງທີມງານ **FPIC** ເມືອງ ແລະ ການຝຶກອົບຮົມກ່ຽວກັບ **FPIC1** ແລະ ການຈັດຕັ້ງປະຕິບັດຢູ່ຂັ້ນບ້ານ". ສິ່ງນີ້ລວມມີບົດບາດຍິງຊາຍ ແລະ ສັງຄົມມີສ່ວນຮ່ວມ.* | - ແນວລາວສ້າງຊາດ<br>- ສະຫະພັນແມ່ຍິງ<br>- ບັນດາຫ້ອງການອ້ອມຂ້າງ (ພະແນກກະສິກຳ ແລະ ປ່າໄມ້/ຫ້ອງການກະສິກຳ ແລະ ປ່າໄມ້/ກົມປ່າໄມ້ ແລະ ອື່ນໆ) | - ທີ່ປຶກສາໂຄງການແຫ່ງຊາດ ອົງການ ຈີໄອແຊດ (GIZ) ຮັບຜິດຊອບ FPIC ແລະ ການປົກປ້ອງ.<br>- ພາບລວມໂດຍທີມປົກປ້ອງ. | ກ່ອນການຈັດຕັ້ງປະຕິບັດກິດຈະກຳອື່ນໝົດ |
| *ການຝຶກອົບຮົມກ່ຽວກັບການປູກຈິດສຳນຶກ **ESMP** ໂດຍລວມ (ກວມເອົາທຸກກິດຈະກຳທາງດ້ານວິຊາການ* | - ຜູ້ຈັດຕັ້ງປະຕິບັດວຽກງານຢູ່ຂັ້ນບ້ານ.<br>- ໜ່ວຍງານຄຸ້ມຄອງໂຄງການຂັ້ນສູນກາງ | - ທີ່ປຶກສາໂຄງການຂັ້ນສູນກາງ ຂອງ ອົງການ ຈີໄອແຊດ (GIZ).<br>- ພາບລວມໂດຍທີມງານ | ການຝຶກອົບຮົມການປູກຈິດສຳນຶກ ESMP ນີ້ຕ້ອງໄດ້ຮັບການປະສົມປະສານກັບການຝຶກອົບຮົມຂະໜາດ |

| | | | |
|---|---|---|---|
| ***ESMP 3-8)** ແລະປະກອບມີການຂູດຮີດທາງເພດ, ການລ່ວງລະເມີດ ແລະການຂົ່ມເຫັງ ແລະຫຼັກຈັນຍາບັນ* | | ປົກປ້ອງ | ໃຫຍ່ສໍາລັບໜ້າວຽກທີ່ສໍາຄັນຂອງໂຄງການໄວເທົ່າທີ່ເປັນໄປໄດ້ໃນປີທໍາອິດຂອງການປະຕິບັດ. |
| *ແນະນໍາແນວຄວາມຄິດ/ການປຶກສາຫາລື ແລະ ການປຸກຈິດສໍານຶກກ່ຽວກັບຊີວະນາໆພັນ ແລະ ການຄຸ້ມຄອງເຄື່ອງປ່າຂອງດົງ.* | - ແນວລາວສ້າງຊາດ<br>- ສະຫະພັນແມ່ຍິງ<br>- ຢ່າງໜ້ອຍຜູ້ຈັດຕັ້ງປະຕິບັດ ວຽກງສຍ PLUP ຂັ້ນບ້ານ ທັງໝົດທີ່ຈະນໍາສະເໜີ ກົນໄກແກ້ໄຂຄໍາຮ້ອງທຸກ (GRM) ໃຫ້ແກ່ຊາວບ້ານໃນລະຫວ່າງການຢ້ຽມຢາມ PLUP ຄັ້ງທໍາອິດ.<br>- ໂດຍຫລັກການແລ້ວ, ຜູ້ປະຕິບັດທັງຫມົດ. | - ທີ່ປຶກສາໂຄງການແຫ່ງຊາດ ຂອງ ອົງການ ຈີໄອແຊດ (GIZ) ຮັບຜິດຊອບ FPIC ແລະ ການປົກປ້ອງ. ແລະ/ຫຼື<br>- ທີ່ປຶກສາໂຄງການແຫ່ງຊາດ ຂອງ ອົງການ ຈີໄອແຊດ (GIZ) ຮັບຜິດຊອບ PLUP.<br>- ພາບລວມໂດຍທີມປ້ອງກັນ. | ເຊື່ອມໂຍງເຂົ້າໃນການຝຶກອົບຮົມ FPIC ແລະ PLUP ໃຫ້ແກ່ຜູ້ປະຕິບັດກ່ອນການປະຕິບັດວຽກງານຕົ້ນຕໍ. |
| *ການຝຶກອົບຮົມກ່ຽວກັບ ກົນໄກການແກ້ໄຂຂໍ້ຮ້ອງທຸກ (GRM), ການນໍາສະເຫນີໃຫ້ຜູ້ໄດ້ຮັບຜົນປະໂຫຍດ, ແລະ ການຈັດຕັ້ງປະຕິບັດຂອງເຂົາ.* | - ສະຫະພັນແມ່ຍິງຂັ້ນແຂວງ<br>- ແນວລາວສ້າງຊາດຂັ້ນແຂວງ<br>- ຢ່າງໜ້ອຍຜູ້ຈັດຕັ້ງປະຕິບັດວຽກງານ PLUP ຂັ້ນບ້ານ ທັງໝົດທີ່ຈະນໍາສະເໜີ ກົນໄກການແກ້ໄຂຂໍ້ຮ້ອງທຸກ (GRM) ໃຫ້ແກ່ຊາວບ້ານໃນລະຫວ່າງການຢ້ຽມຢາມ PLUP ຄັ້ງທໍາອິດ.<br>- ໂດຍຫລັກການແລ້ວ, ຜູ້ປະຕິບັດທັງຫມົດ. | - ທີ່ປຶກສາໂຄງການແຫ່ງຊາດ ຂອງອົງການ ຈີໄອແຊດ (GIZ) ຮັບຜິດຊອບ FPIC ແລະ ການປົກປ້ອງ. ແລະ/ຫຼື<br>- ທີ່ປຶກສາໂຄງການແຫ່ງຊາດ ຂອງອົງການ ຈີໄອແຊດ (GIZ) ຮັບຜິດຊອບ PLUP.<br>- ພາບລວມໂດຍທີມປ້ອງກັນ. | ກ່ອນເຫດການ PLUP ຄັ້ງທໍາອິດໃນບ້ານ. ເຊື່ອມໂຍງເຂົ້າໃນການຝຶກອົບຮົມ PLUP. |
| *ການຝຶກອົບຮົມກອບກົດໝາຍ<br>"ການຝຶກອົບຮົມ / ກອງປະຊຸມສໍາລັບການປະສານງານ* | - ຜູ້ຈັດຕັ້ງປະຕິບັດທຸກຂັ້ນ ເຊັ່ນວ່າ ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ຫ້ອງການກະສິ | - ທີ່ປຶກສາໂຄງການແຫ່ງຊາດ ຂອງອົງການ ຈີໄອແຊດ (GIZ) ຮັບຜິດຊອບ | ກ່ອນການຈັດຕັ້ງປະຕິບັດ ແລະ ການກວດສອບການປະຕິບັດຕາມທີ່ກ່ຽວຂ້ອງກັບ ການວາງແຜນນໍາໃຊ້ທີ່ |

| | | | |
|---|---|---|---|
| *ຂອງຂະແໜງການ (ບອກກັບເອກະສານ) ກ່ຽວກັບກົດໝາຍ / ລະບຽບການທີ່ສໍາຄັນ ແລະ ການນໍາໃຊ້ລະບຽບການທົ່ວໄປ (ທຸກຂັ້ນ).* | ກໍາ ແລະ ປ່າໄມ້ ແລະ ກົມປ່າໄມ້ | ວຽກງານປ່າໄມ້.<br>- ພາບລວມໂດຍທີມປ້ອງກັນ. | ດິນ ແລະ ການວາງແຜນຄຸ້ມຄອງປ່າໄມ້ບ້ານ. |
| *"ຝຶກອົບຮົມກ່ຽວກັບຂອບກົດໝາຍຂອງປ່າໄມ້ໃຫ້ແກ່ ກອງກວດກາປ່າໄມ້ (POFI) ແລະ ໜ່ວຍງານກວດກາປ່າໄມ້ (DFIU)"* | *- ກອງກວດກາປ່າໄມ້ (POFI) ແລະ ໜ່ວຍງານກວດກາປ່າໄມ້ (DFIU)"* | - ທີ່ປຶກສາໂຄງການແຫ່ງຊາດ ຂອງອົງການ ຈີໄອແຊດ (GIZ) ຮັບຜິດຊອບວຽກງານປ່າໄມ້.<br>- ພາບລວມໂດຍທີມປ້ອງກັນ. | ກ່ອນການຈັດຕັ້ງປະຕິບັດ ແລະ ການກວດສອບການປະຕິບັດຕາມທີ່ກ່ຽວຂ້ອງກັບ ການວາງແຜນນໍາໃຊ້ທີ່ດິນ ແລະ ການວາງແຜນຄຸ້ມຄອງປ່າໄມ້ບ້ານ. |
| *ການຝຶກອົບຮົມກ່ຽວກັບຄວາມສ່ຽງ ແລະ ຄວາມສ່ຽງດ້ານດິນຟ້າອາກາດ ແລະ ການກໍານົດ ແລະ ການຂະຫຍາຍການປະຕິບັດການຄຸ້ມຄອງທີ່ດິນແບບຍືນຍົງໂດຍບໍ່ທໍາລາຍປ່າ ແລະ ທົນທານຕໍ່ສະພາບດິນຟ້າອາກາດ (ລວມທັງຂໍ້ມູນກ່ຽວກັບການປັບຕົວ ແລະ ຄວາມສໍາຄັນຂອງການຕິດຕາມເປັນປົກກະຕິ)* | - ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ຫ້ອງການກະສິກໍາ ແລະ ປ່າໄມ້ | - ທີ່ປຶກສາໂຄງການແຫ່ງຊາດ ຂອງອົງການ ຈີໄອແຊດ (GIZ) ຮັບຜິດຊອບວຽກງານກະສິກໍາ<br>- ພາບລວມໂດຍທີມປ້ອງກັນ. | ເຊື່ອມໂຍງເຂົ້າໃນການຝຶກອົບຮົມອື່ນໆກ່ຽວກັບການສົ່ງເສີມກະສິກໍາ |

***ວິທີການຄຸ້ມຄອງການປົກປ້ອງເພີ່ມເຕີມ***

ນັບຕັ້ງແຕ່ທຸກລະດັບຂອງໂຄງການ, ຈາກພະນັກງານ ອົງການ ຈີໄອແຊດ (GIZ) ແຫ່ງຊາດ (ຍັງເອີ້ນວ່າທີ່ປຶກສາ ອົງການ ຈີໄອແຊດ (GIZ) ແຫ່ງຊາດ), ທີມງານ ຕິດຕາມ ແລະ ປະເມີນຜົນ ແລະທີມງານປົກປ້ອງ, ໜ່ວຍງານຄຸ້ມຄອງໂຄງການຂັ້ນສູນກາງເຖິງທີ່ປຶກສາແຂວງ, ໜ່ວຍງານຄຸ້ມຄອງໂຄງການຂັ້ນແຂວງ, ໜ່ວຍງານຄຸ້ມຄອງໂຄງການຂັ້ນເມືອງ ແລະຜູ້ຈັດຕັ້ງປະຕິບັດເມືອງສາມາດຕິດຕໍ່ໂດຍກົງໄດ້ທຸກເວລາ, ໂຄງການມີວິທີການສ້າງຂີດຄວາມສາມາດແບບການແນະນໍາ ແລະ ແບບມີສ່ວນຮ່ວມ ເພື່ອຮັບປະກັນຄວາມເຂົ້າໃຈ ແລະ ຜົນກະທົບຂອງ:

- ການກະເສດທີ່ບໍ່ມີການທໍາລາຍປ່າ ແລະ ທົນທານຕໍ່ສະພາບດິນຟ້າອາກາດ
- ການຄຸ້ມຄອງປ່າໄມ້ບ້ານແບບຍືນຍົງ ແລະ ປ່າສະຫງວນແຫ່ງຊາດ
- ການຄຸ້ມຄອງຊັບພະຍາກອນທໍາມະຊາດ
- ຫຼັກການຂອງສັງຄົມມີສ່ວນຮ່ວມ (ລວມທັງ ການປຶກສາຫາລືທີ່ມີຄວາມຫມາຍ, ເພດ ແລະ ຄົນຊົນເຜົ່າພື້ນເມືອງ)
- ກອບກົດໝາຍ

ໝາຍເຫດ: ຖານຂໍ້ມູນອອນໄລນ໌, ເຊິ່ງສາມາດເຂົ້າເຖິງໄດ້ກັບທຸກລະດັບຂອງໂຄງການທີ່ໄດ້ກ່າວມາຂ້າງເທິງ, ສະໜອງການເຂົ້າເຖິງການຕິດຕໍ່, ສະຖານທີ່, ຫ້ອງການ ແລະຄວາມຮັບຜິດຊອບຂອງຫຼາຍກ່ວາ 1600 ພາກສ່ວນກ່ຽວຂ້ອງ. ອັນນີ້ເຮັດໃຫ້ພວກເຂົາທັງໝົດສາມາດຊອກຫາເອກະສານອ້າງອີງໄດ້ຢ່າງງ່າຍດາຍເມື່ອຕ້ອງການໃຫ້ຄໍາແນະນໍາ ຫຼືຄໍາອະທິບາຍເພີ່ມເຕີມ.

### ໄລຍະເວລາ & ຄວາມຮັບຜິດຊອບ

ການສ້າງຂີດຄວາມສາມາດທີ່ກ່ຽວຂ້ອງກັບແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ແມ່ນຖືກນໍາໄປສູ່ການດໍາເນີນງານຂອງໂຄງການ ແລະ ດັ່ງນັ້ນຈຶ່ງໄດ້ດໍາເນີນໄປຄຽງຄູ່ກັບການຈັດຕັ້ງປະຕິບັດໂຄງການ.

ໂດຍລວມແລ້ວ, ການຈັດຕັ້ງປະຕິບັດກ່ຽວກັບການສ້າງຄວາມອາດສາມາດທາງດ້ານລະບົບການປົກປ້ອງ ແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງທີມງານປົກປ້ອງທີ່ເຮັດສັນຍາໄວ້, ແຕ່ມີສ່ວນຮ່ວມຈາກພາກສ່ວນກ່ຽວຂ້ອງຂອງໂຄງການອື່ນໆນໍາ. ຄວາມຮັບຜິດຊອບລະອຽດ ແລະກອບເວລາສໍາລັບຂອບເຂດວຽກງານສະເພາະດ້ານແມ່ນໄດ້ລະບຸໄວ້ໃນຕາຕະລາງຂ້າງເທິງ.

### ຕົວຊີ້ວັດ

- ຢ່າງໜ້ອຍ 90% ຂອງ ໜ່ວຍງານຄຸ້ມຄອງໂຄງການ (PMU) ເຂົ້າຮ່ວມກອງປະຊຸມຝຶກອົບຮົມທີ່ກ່ຽວຂ້ອງ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP).
- ການປະເມີນກ່ອນ ແລະຫຼັງກອງປະຊຸມກ່ຽວກັບແນວຄວາມຄິດພື້ນຖານສະແດງໃຫ້ເຫັນຢ່າງນ້ອຍ 70% ຂອງຜູ້ເຂົ້າຮ່ວມໄດ້ປັບປຸງຄວາມເຂົ້າໃຈກ່ຽວກັບຂະບວນການປົກປ້ອງ.
- ຜູ້ເຂົ້າຮ່ວມການຝຶກອົບຮົມ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ສໍາເລັດແບບສອບຖາມກ່ຽວກັບແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP), ຢ່າງຫນ້ອຍ 50% ສະແດງໃຫ້ເຫັນຄວາມເຂົ້າໃຈທີ່ມີຄວາມສາມາດຫຼັງຈາກປີທໍາອິດ, 85% ຄວາມເຂົ້າໃຈຫຼັງຈາກປີ 2.
- ແບບສອບຖາມຄໍາຄິດເຫັນສໍາລັບຜູ້ເຂົ້າຮ່ວມກອງປະຊຸມຊີ້ໃຫ້ເຫັນວ່າຢ່າງຫນ້ອຍ 60% ຂອງຜູ້ເຂົ້າຮ່ວມຮູ້ສຶກວ່າຂໍ້ມູນແມ່ນສະຫນັບສະຫນູນວຽກງານຂອງເຂົາເຈົ້າ.
- ຫຼັງຈາກສາມປີຂອງອາຍຸໂຄງການ, 60% ຂອງພະນັກງານໜ່ວຍງານຄຸ້ມຄອງໂຄງການຂັ້ນເມືອງສາມາດກໍານົດບຸກຄົນຜູ້ໃຫ້ການສະຫນັບສະຫນູນ ແລະການໃຫ້ຄໍາປຶກສາແກ່ເຂົາເຈົ້າ.
- ທີມງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ພັດທະນາ ແລະຈັດກອງປະຊຸມຝຶກອົບຮົມ.
- ບຸກຄະລາກອນທີ່ຖືກແຕ່ງຕັ້ງສໍາຄັນຢູ່ກັບໂຄງການຫຼາຍກວ່າ 2 ປີ.

**9.3. ແຜນການຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ກິດຈະກຳ 3: ຂະບວນການສ້າງຄວາມເຫັນດີເຫັນພ້ອມດ້ວຍຄວາມຕື່ນຕົວສະໝັກໃຈ ໂດຍໄດ້ຮັບຂໍ້ມູນລວງໜ້າ (FPIC).**

**ຈຸດປະສົງ**

| |
|---|
| **ຈຸດປະສົງຕົ້ນຕໍຂອງການປະຕິບັດນີ້ແມ່ນເພື່ອບັນລຸການຍິນຍອມເຫັນດີຂອງບ້ານຢ່າງກວ້າງຂວາງ ແລະສະໜັບສະໜູນ ໂດຍມີສ່ວນຮ່ວມຢ່າງຫ້າວຫັນຈາກຜູ້ເຂົ້າຮ່ວມໂຄງການທັງໝົດໃນລະຫວ່າງຂະບວນການ** FPIC. |

ກິດຈະກຳນີ້ປະກອບມີ:

- ການຍິນຍອມເຫັນດີຢ່າງກ້ວາງຂວາງຈາກທຸກບ້ານ ກ່ອນທີ່ຈະດຳເນີນກິດຈະກຳ.
- ຮັບປະກັນຄວາມເຂົ້າໃຈຢ່າງພຽງພໍກ່ຽວກັບໂຄງການໂດຍຜູ້ໄດ້ຮັບຜົນປະໂຫຍດໃນອະນາຄົດ.
- ຮັບປະກັນຄວາມດຸ່ນດ່ຽງລະຫວ່າງຍິງ-ຊາຍ ແລະຊົນເຜົ່າໃນຂະບວນການຕັດສິນໃຈ.
- ຮັບປະກັນໃຫ້ຜູ້ຈັດຕັ້ງປະຕິບັດເຂົ້າໃຈຂະບວນການ FPIC ຢ່າງສົມບູນ (ກິດຈະກຳ 2).

**ຄວາມເປັນມາຂອງແນວຄວາມຄິດ**

ແນວຄວາມຄິດໂດຍລວມ

ອົງປະກອບຫຼັກຂອງຂະບວນການ FPIC ໄດ້ຖືກສະໜອງໃຫ້ຢູ່ໃນບົດແນະນຳ FPIC ຈາກ FPIC ໃນວຽກງານເຣດ+: ຫຼັກການ ແລະ ແນວທາງການພັດທະນານະໂຍບາຍ ແລະໂຄງການ[3].

ການຈັດຕັ້ງປະຕິບັດຂະບວນການ FPIC ໄດ້ຖືກຮຽກຮ້ອງດ້ວຍວິທີການໂດຍຜ່ານການປຶກສາຫາລື ແລະ ການມີສ່ວນຮ່ວມຂອງບ້ານທ້ອງຖິ່ນທັງໝົດ.

ຂະບວນການ FPIC ແບ່ງອອກເປັນ 3 ຂັ້ນຕອນ. ຂັ້ນຕອນທີ່ສຳຄັນທີ່ສຸດ, ການປຶກສາຫາລື (ເອີ້ນວ່າ “FPIC 1”) ເກີດຂຶ້ນກ່ອນ ແລະ ບັນດາບ້ານຕ່າງໆໄດ້ຮັບເວລາໃນການຊຶມສັບຂໍ້ມູນເປັນເວລາ 2 ອາທິດ. ຫຼັງຈາກນັ້ນ, ຕົວແທນຂອງບ້ານຕິດຕໍ່ໃຫ້ໂຄງການກ່ຽວກັບການຕັດສິນໃຈ. ສິ່ງທີ່ເອີ້ນວ່າ FPIC 2 ແລະ FPIC 3 ຕາມລຳດັບແມ່ນ "ການຮັບຮູ້ ແລະ ການປຶກສາຫາລື" ແລະ "ພິທີລົງນາມຢ່າງເປັນທາງການ". ຄວາມຈິງແລ້ວ, ບັນດາບ້ານມີຄວາມເປັນໄປໄດ້ສະເໜີທີ່ຈະຖອນຕົວອອກຈາກໂຄງການ ຫຼື ຮ້ອງຂໍການປ່ຽນແປງເອກະສານສະເພາະທຸກຂັ້ນຕອນ.

**ຫຼັກການຕໍ່ໄປນີ້ສຳລັບ FPIC ແມ່ນນຳໃຊ້:**

- FPIC ແມ່ນເງື່ອນໄຂເບື້ອງຕົ້ນສຳລັບການເລີ່ມຕົ້ນກິດຈະກຳໃດໆ. ຖ້າບໍ່ມີການຍິນຍອມຈາກຜູ້ໄດ້ຮັບຜົນປະໂຫຍດ , ໂຄງການກໍ່ບໍ່ໄດ້ເລີ່ມຢູ່ໃນບ້ານທີ່ກ່ຽວຂ້ອງ.

[3] Information on FPIC in REDD+ contexts:
https://redd.unfccc.int/uploads/2_74_redd_20130710_recoftc_free_2C_prior_2C_and_informed_consent_in_red dplus.pdf
https://www.unredd.net/documents/un-redd-partner-countries-181/templates-forms-and-guidance-89/un-redd- fpic-guidelines-2648/8717-un-redd-fpic-guidelines-working-final-8717.html?path=un-redd-partner-countries- 181/templates-forms-and-guidance-89/un-redd-fpic-guidelines-2648

    - ຜູ້ໄດ້ຮັບຜົນປະໂຫຍດຕ້ອງໄດ້ຮັບຂໍ້ມູນຢ່າງພຽງພໍ, ໂປ່ງໃສ, ຊັດເຈນ ແລະ ຄົບຖ້ວນກ່ຽວກັບຄວາມສ່ຽງ ແລະ ຜົນປະໂຫຍດທີ່ອາດມີຈາກການເຂົ້າຮ່ວມໂຄງການ. ຂໍ້ມູນນີ້ຕ້ອງມີທັງຜົນປະໂຫຍດ ແລະຄວາມສ່ຽງຕໍ່ຜູ້ໄດ້ຮັບຜົນປະໂຫຍດໃນການເຂົ້າເຖິງທີ່ດິນ, ປ່າໄມ້, ເຄື່ອງປ່າຂອງດົງ, ແລະທາງເລືອກໃນການດຳລົງຊີວິດອື່ນໆ, ເຊັ່ນດຽວກັນກັບຄວາມເປັນໄປໄດ້ຂອງລາຍໄດ້.
    - ການສື່ສານຂອງໂຄງການຕ້ອງເປັນພາສາທີ່ຜູ້ເຂົ້າຮ່ວມເຂົ້າໃຈ. ລະດັບພາສາລາວຂອງບ້ານແມ່ນໄດ້ຖືກປະເມີນໃນລະຫວ່າງ FPIC ເຊັ່ນດຽວກັນກັບພາສາທີ່ໃຊ້ໃນກອງປະຊຸມບ້ານ. ຍິ່ງໄປກວ່ານັ້ນ, "ຄວາມເຂົ້າໃຈກ່ຽວກັບຫົວຂໍ້ທີ່ສົນທະນາກ່ຽວກັບການສຳຫຼວດຈຸລະພາກ" ໄດ້ຖືກຮັບຮູ້ຫຼັງຈາກກອງປະຊຸມທຸກໆຄັ້ງ.
- ບັນທຶກຂໍ້ມູນທັງໝົດຂອງຂະບວນການ ແລະ ຜົນໄດ້ຮັບຂອງ FPIC, ແລະເກັບຮັກສາໄວ້ໃນຖານຂໍ້ມູນເພື່ອສືບຕໍ່ຕິດຕາມຕະຫຼອດໄລຍະຂອງໂຄງການ. ຄວາມຍືດຫຍຸ່ນຂອງຂະບວນການຊ່ວຍສ້າງຄວາມໄວ້ວາງໃຈ ແລະຄວາມເຂົ້າໃຈເຊິ່ງກັນ ແລະກັນລະຫວ່າງບັນດາພາກສ່ວນທີ່ກ່ຽວຂ້ອງ. ຖານຂໍ້ມູນຂອງການບັນທຶກທີ່ສ້າງຂຶ້ນເພື່ອບັນທຶກ ແລະ ຕິດຕາມການຍິນຍອມເຫັນດີຢ່າງຕໍ່ເນື່ອງຂອງຜູ້ເຂົ້າຮ່ວມທັງໝົດໃນລະດັບບ້ານ, ດ້ວຍຄວາມເອົາໃຈໃສ່ເພື່ອຮັບປະກັນການມີສ່ວນຮ່ວມຂອງປະຊາຊົນບັນດາເຜົ່າ, ແມ່ຍິງ ແລະ ຜູ້ດ້ອຍໂອກາດໃນສັງຄົມອື່ນໆ (ກິດຈະກຳ 3). ການປຶກສາຫາລືໄດ້ເກີດຂຶ້ນໃນໄລຍະການອອກແບບ, ແນວໃດກໍ່ຕາມ, ຂະບວນການ FPIC ຕົວຈິງທີ່ໄດ້ຖືກບັນທຶກໄວ້ ເຊັ່ນວ່າ: ບ່ອນໃດທີ່ໄດ້ຮັບການຍິນຍອມເຫັນດີຢ່າງເປັນທາງການ, ໄດ້ດຳເນີນການຢູ່ໃນແຕ່ລະບ້ານ, ເມື່ອບັນດາບ້ານຕັດສິນໃຈເຂົ້າຮ່ວມໂຄງການຫຼືບໍ່.
- ບ້ານທີ່ປຶກສາຫາລືຕ້ອງໄດ້ມີເວລາພຽງພໍ[4] ເພື່ອຊຶມສັບເອົາຂໍ້ມູນ ແລະ ສົນທະນາລະຫວ່າງກັນໂດຍບໍ່ເສຍຄ່າຈາກກິດຈະກຳຈາກລັດ ແລະ/ຫຼື ພະນັກງານໂຄງການ, ແລະອະນຸຍາດໃຫ້ເຂົາເຈົ້າສາມາດຕັດສິນໃຈຂອງເຂົາເຈົ້າເອງວ່າຈະເຂົ້າຮ່ວມຫຼືບໍ່. ຊາວບ້ານໄດ້ຖືກຮ້ອງຂໍໃຫ້ມີຄວາມຄິດເຫັນທຳອິດໃນໄລຍະ "FPIC 1" ໃນບ້ານ, ແນວໃດກໍ່ຕາມ, ບໍ່ວ່າຈະເປັນຜົນຂອງ "ການລົງຄະແນນສຽງ" ນີ້, ການຕັດສິນໃຈທີ່ຈະເຂົ້າຮ່ວມຫຼືບໍ່ ຕົວແທນຂອງບ້ານແມ່ນໄດ້ຮັບການສື່ສານຜ່ານ (ຜ່ານໂທລະສັບ) ຫຼັງຈາກ2 ອາທິດ, ໂດຍບໍ່ມີການຢ້ຽມຢາມຄັ້ງທີສອງ.
- ຖ້າບ້ານມີຄວາມລັງເລ, ຫຼືຮູ້ສຶກວ່າຂໍ້ມູນບໍ່ພຽງພໍ, ໂຄງການສາມາດເປີດການເຈລະຈາ 'ແບບຈິງຈັງ' ເພື່ອສະໜອງເອກະສານເພີ່ມເຕີມເພື່ອໃຫ້ເຂົາເຈົ້າຕັດສິນໃຈຢ່າງຄົບຖ້ວນ.
- ກົນໄກການແກ້ໄຂຄຳຮ້ອງທຸກຖືກນຳສະເໜີເມື່ອເລີ່ມຕົ້ນຈັດຕັ້ງປະຕິບັດກິດຈະກຳຫຼັກ (ບໍ່ລວມ FPIC 1)
- ເຖິງແມ່ນວ່າໄດ້ຮັບການຍິນຍອມເຫັນດີພາຍຫຼັງຂະບວນການ FPIC ສຳເລັດແລ້ວ, ແຕ່ຊາວບ້ານກໍ່ຍັງສາມາດປະຕິເສດໂຄງການໄດ້ໄດ້ທຸກເວລາ.

***ຜົນກະທົບທາງລົບທີ່ບໍ່ໄດ້ຕັ້ງໃຈ***

ເພື່ອເຮັດໃຫ້ໂຄງການ ແລະ ການເຄື່ອນໄຫວຂອງຕົນມີຄວາມໜ້າເຊື່ອຖືຂອງທ້ອງຖິ່ນ, ການເຈລະຈາສັນຍາຍືນຍົງກ່ຽວກັບການນຳໃຊ້ຊັບພະຍາກອນ ຕ້ອງໄດ້ຮັບຮູ້ທັງສິດຂອງຊົນເຜົ່າ ແລະ ບ້ານທ້ອງຖິ່ນທີ່ຂຶ້ນກັບພື້ນທີ່ປ່າສະເພາະເພື່ອການດຳລົງຊີວິດຂອງເຂົາເຈົ້າ. ນີ້ແມ່ນເຮັດໄດ້ໂດຍຜ່ານການຍິນຍອມເຫັນດີໃນຂະບວນການ FPIC. ການບໍ່ເຮັດແນວນັ້ນອາດເຮັດໃຫ້ເກີດຄວາມຂັດແຍ້ງ ຫຼືຜົນໄດ້ຮັບທີ່ບໍ່ສະເໝີພາບ ເຊິ່ງການປະຕິບັດການດຳລົງຊີວິດ ແລະການເຂົ້າເຖິງຊັບພະຍາກອນໄດ້ຖືກປ່ຽນແປງ ຫຼືຖືກປະຕິເສດ.

ຂະບວນການ FPIC, ແລະ ກິດຈະກຳຂອງສັງຄົມມີສ່ວນຮ່ວມຕໍ່ໄປນີ້ (ກິດຈະກຳ 4), ຈະສະໜັບສະໜູນຊາວບ້ານໃຫ້

[4] This means not requesting an answer about consent on the same day that the information is provided to the community.

ເຂົ້າໃຈຢ່າງຊັດເຈນຕໍ່ຈຸດປະສົງຂອງໂຄງການ, ແລະຫຼຸດຜ່ອນຄວາມເປັນໄປໄດ້ຂອງຜົນກະທົບທາງລົບທີ່ບໍ່ໄດ້ຕັ້ງໃຈຍ້ອນວ່າ ຊາວບ້ານຈະໃຫ້ການຍິນຍອມຂອງເຂົາເຈົ້າ ແລະຄວາມສົນໃຈຢ່າງຕໍ່ເນື່ອງໃນກິດຈະກໍາໂຄງການ.

ໃນລະຫວ່າງການປຶກສາຫາລືຢູ່ບ້ານບ້ານກ່ຽວກັບແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP), ຊາວບ້ານໃນ 3 ບ້ານເປົ້າໝາຍໄດ້ຮັບຮູ້ວ່າເຂົາເຈົ້າຂາດຄວາມເຂົ້າໃຈກ່ຽວກັບເປົ້າໝາຍລວມຂອງໂຄງການໃນໄລຍະເລີ່ມຕົ້ນຂອງຂະບວນການໂຄງການ. ໃນກໍລະນີການວາງແຜນການນໍາໃຊ້ທີ່ດິນ, ຄວາມບໍ່ແນ່ນອນກ່ຽວກັບຜົນໄດ້ຮັບຂອງໂຄງການຈະສົ່ງຜົນໃຫ້ຊາວບ້ານຕັດສິນໃຈນໍາໃຊ້ທີ່ດິນໂດຍອີງໃສ່ຂໍ້ມູນທີ່ບໍ່ຖືກຕ້ອງ. ຕົວຢ່າງສະເພາະຈາກໂຄງການວາງແຜນນໍາໃຊ້ທີ່ດິນຢູ່ແຂວງຫົວພັນ ໃນເບື້ອງຕົ້ນ ຊາວບ້ານໄດ້ກໍານົດພື້ນທີ່ປ່າສະຫງວນຂອງບ້ານ ໂດຍອີງໃສ່ຄວາມຢ້ານກົວວ່າ ລັດຖະບານຈະນໍາໃຊ້ພື້ນທີ່ທີ່ຍັງບໍ່ທັນໄດ້ເລືອກເປັນປ່າອະນຸລັກ ເພື່ອເປັນດິນທີ່ມີທ່າແຮງໃຫ້ແກ່ນັກລົງທຶນຈາກພາຍນອກ. ອັນນີ້ເຮັດໃຫ້ບ້ານບໍ່ສາມາດກໍານົດພື້ນທີ່ທີ່ເໝາະສົມທີ່ສຸດໃນການອະນຸລັກເປັນປ່າອະນຸລັກ, ສະຖານະການທີ່ເຂົາເຈົ້າຕ້ອງການແກ້ໄຂຕາມເປົ້າໝາຍຂອງໂຄງການແມ່ນໄດ້ຮັບຄວາມເຂົ້າໃຈດີຂຶ້ນໃນປະຈຸບັນ.

**ຂະບວນການຄຸ້ມຄອງການປົກປ້ອງ**

*ກອບວຽກງານປົກປ້ອງຕົ້ນຕໍ*

| ດ້ານການປົກປ້ອງ | ການຫຼຸດຜ່ອນລ່ວງໜ້າ | ການຕິດຕາມ<br>*(+ ແຫຼ່ງຂໍ້ມູນ)* | ການຫຼຸດຜ່ອນ |
|---|---|---|---|
| **ການຍິນຍອມເຫັນດີຢ່າງກວ້າງຂວາງໂດຍຜູ້ໄດ້ຮັບຜົນປະໂຫຍດ** | FPIC ດ້ວຍຕົວມັນເອງແມ່ນການຫຼຸດຜ່ອນການລ່ວງລະເມີດຍ້ອນວ່າບໍ່ມີຫຍັງຈະສາມາດດໍາເນີນການໄດ້ໂດຍບໍ່ມີຂະບວນການນີ້. | ການປຶກສາຫາລື FPIC ໄດ້ສໍາເລັດ ແລະບັນທຶກຜົນໄດ້ຮັບ.<br>ຢ່າງໜ້ອຍມີຊາວບ້ານ 50 ຄົນເຂົ້າຮ່ວມ (ລາຍຊື່ຜູ້ເຂົ້າຮ່ວມ) | ບໍ່ມີກິດຈະກໍາໃດໆສາມາດກະຕຸ້ນກ່ອນທີ່ FPIC ຈະມີຜົນບັງຄັບໃຊ້. ການປຶກສາຫາລື, ການມີສ່ວນຮ່ວມ ແລະການລົງຄະແນນສຽງຕ້ອງໄດ້ຮັບການບັນທຶກໄວ້. |
| **ຄວາມເຂົ້າໃຈກ່ຽວກັບໂຄງການໂດຍຜູ້ໄດ້ຮັບຜົນປະໂຫຍດ** | ການປະເມີນຄວາມສາມາດດ້ານພາສາຂອງແຕ່ລະບ້ານຕ້ອງເຮັດໃນຂັ້ນຕົ້ນ (FPIC 1). ພາສາທ້ອງຖິ່ນຈະນໍາໃຊ້ເຂົ້າໃນກອງປະຊຸມບ້ານຕາມຄວາມຈໍາເປັນຕາມຜົນການປະເມີນຄວາມສາມາດທາງດ້ານພາສາ. | ສໍາລັບທຸກໆກິດຈະກໍາໂຄງການທີ່ສໍາຄັນ, ແບບສອບຖາມຄວາມເຂົ້າໃຈການປະເມີນຕົນເອງຕ້ອງໄດ້ຮັບການສ້າງຕັ້ງຂຶ້ນ. | ຖ້າຄວາມເຂົ້າໃຈກ່ຽວກັບໂຄງການບໍ່ພຽງພໍ ຫຼື ຖ້າຄວາມດຸ່ນດ່ຽງລະຫວ່າງຍິງ-ຊາຍ ແລະ ຊົນເຜົ່າບໍ່ໄດ້ຮັບການເຄົາລົບ, ບັນຫາແມ່ນຖືກຍົກຂຶ້ນມາຫາໂຄງການ (ແຕ່ລະກໍລະນີ). |
| **ດຸ່ນດ່ຽງບົດບາດຍິງ-ຊາຍ ແລະ ຊົນເຜົ່າ** | ໃນຂະບວນການ FPIC ແລະ ໃນທຸກກິດຈະກໍາທີ່ກ່ຽວຂ້ອງໂດຍທົ່ວໄປ, ຄວາມດຸ່ນດ່ຽງລະຫວ່າງຍິງຊາຍຕ້ອງໄດ້ຮັບການເຄົາລົບ ແລະ ບັນດາກຸ່ມຊົນເຜົ່າເປັນຕົວແທນຕາມສັດສ່ວນ. | ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມຂັ້ນບ້ານຕ້ອງປະກອບຂໍ້ມູນກ່ຽວກັບເພດ ແລະຊົນເຜົ່າຂອງຜູ້ເຂົ້າຮ່ວມ. | |
| **ຄວາມເຂົ້າໃຈກ່ຽວກັບ *FPIC* ໂດຍຜູ້ຈັດຕັ້ງປະຕິບັດ** | ການຝຶກອົບຮົມສໍາລັບ FPIC | ກວດເບິ່ງຄວາມເຂົ້າໃຈໂດຍລວມກ່ຽວກັບຂະບວນການ FPIC ດ້ວຍແບບສອບຖາມຄວາມເຂົ້າໃຈກ່ອນ ຫຼື | ຖ້າຄວາມເຂົ້າໃຈກ່ຽວກັບ FPIC ບໍ່ເປັນທີ່ພໍໃຈ, ການຝຶກອົບຮົມອື່ນຈະຖືກຈັດໃສ່. |

| | | | |
|---|---|---|---|
| | | ຫຼັງການປະເມີນເພື່ອບັນທຶກໄວ້ໂດຍຜູ້ປະຕິບັດ. | |

*ວິທີການຄຸ້ມຄອງການປົກປ້ອງເພີ່ມເຕີມ*

ເຖິງແມ່ນວ່າ FPIC ໄດ້ຮັບການເຫັນດີຈາກຜູ້ໄດ້ຮັບຜົນປະໂຫຍດ, ຖ້າມັນປະຕິບັດບໍ່ດີ, ມາດຕະການຫຼຸດຜ່ອນອາດຈະມີຄວາມຈຳເປັນຕໍ່ກັບກິດຈະກຳຫຼາຍຢ່າງທີ່ສາມາດສົ່ງຜົນກະທົບທາງລົບໂດຍບໍ່ໄດ້ຕັ້ງໃຈ, ເຊັ່ນ:

- ກິດຈະກຳການຄຸ້ມຄອງປ່າໄມ້ບ້ານ ແລະ ການຄຸ້ມຄອງປ່າສະຫງວນແຫ່ງຊາດ ແລະ ການບັງຄັບໃຊ້ກົດໝາຍທີ່ມີຜົນກະທົບຕໍ່ການເຂົ້າເຖິງສະຖານທີ່ທີ່ມີຄວາມໝາຍທາງດ້ານມໍລະດົກວັດທະນະທຳ;
- ຂະບວນການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ເຮັດໃຫ້ການຈັດສັນທີ່ດິນປູກຝັງບໍ່ພຽງພໍ;
- ຈຳກັດການເຂົ້າເຖິງການນຳໃຊ້ທີ່ດິນຕາມປະເພນີສຳລັບການເກັບເຄື່ອງປ່າຂອງດົງ ຫຼືກິດຈະກຳການຄໍ້າປະກັນສະບຽງອາຫານ ແລະ ການສ້າງລາຍຮັບອື່ນໆ.

**ໄລຍະເວລາ**

- ຂະບວນການ **FPIC** ແມ່ນດຳເນີນໃນຕອນເລີ່ມຕົ້ນຂອງໄລຍະຂອງໂຄງການ. ຕ້ອງໄດ້ຮັບການຈັດຕັ້ງປະຕິບັດໃນແຕ່ລະບ້ານ ກ່ອນທີ່ຈະເລີ່ມກິດຈະກຳຂອງໂຄງການໃນພື້ນທີ່ນັ້ນ.
- ຖານຂໍ້ມູນຂອງໂຄງການ, ເຊິ່ງເກັບກຳຂໍ້ມູນການຕິດຕາມທັງໝົດລວມທັງ **FPIC**, ແມ່ນຈະສ້າງຕັ້ງຂຶ້ນໃນປີທຳອິດ, ໂດຍມີການປຶກສາຫາລືກ່ຽວກັບບ້ານທີ່ມີຄວາມໝາຍຢ່າງຕໍ່ເນື່ອງ[5] ແລະ ກິດຈະກຳການມີສ່ວນຮ່ວມຂອງສັງຄົມລວມທັງການຕິດຕາມ ແລະ ບຳລຸງຮັກສາຕະຫຼອດໄລຍະຂອງໂຄງການ.
- ແຜນດຳເນີນງານປະຈຳປີແມ່ນໄດ້ການຂຽນ ແລະ ໄດ້ຖືກຮັບຮອງກ່ອນການຈັດຕັ້ງປະຕິບັດທຸກໆປີ; ການບໍ່ຮັບຮອງແຜນການຈະໝາຍເຖິງການຖອນຕົວອອກຈາກການຈັດຕັ້ງປະຕິບັດໂຄງການທີ່ແນໃສ່ການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ທຶນທານຕໍ່ສະພາບດິນຟ້າອາກາດ ແລະ ການຜະລິດກະສິກຳແບບຍືນຍົງ ແລະ ຕ່ອງໂສ້ມູນຄ່າທີ່ກ່ຽວຂ້ອງ.

**ຄວາມຮັບຜິດຊອບ**

- ໜ່ວຍງານຄຸ້ມຄອງໂຄງການຂັ້ນສູນກາງ (NPMU) ມີຄວາມຮັບຜິດຊອບລວມໃນການຄຸ້ມຄອງຂະບວນການ FPIC ດ້ວຍການສະໜັບສະໜູນຈາກ ອົງການ ຈີໄອແຊດ (GIZ).
- ສະຫະພັນແມ່ຍິງລາວ ແລະ ແນວລາວສ້າງຊາດ ຈະປະຕິບັດຂະບວນການ FPIC ໃນລະດັບບ້ານຫຼັງຈາກການຝຶກອົບຮົມຈາກທີ່ປຶກສາ FPIC.

**ຂໍ້ມູນຄູ່ຮ່ວມງານ**

- ສະຫະພັນແມ່ຍິງລາວ ແລະ ແນວລາວສ້າງຊາດໃນລະດັບຊາດ, ແຂວງ ແລະເມືອງເຂົ້າຮ່ວມກອງປະຊຸມ, ສະໜັບສະໜູນການເກັບກຳຂໍ້ມູນໂດຍການສະໜັບສະໜູນຈາກທີມງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ

[5] Corporate Social Responsibility in Lao PDR: Baseline Assessment of Social and Environmental Regulations & Standards: https://www.giz.de/en/downloads/giz2015-en-corporate-social-responsibility-laos.pdf and from WB and/or ADB

ແລະ ທີ່ປຶກສາ.

- ອີງການຈັດຕັ້ງມະຫາຊົນສະໜັບສະໜູນການຈັດຕັ້ງປະຕິບັດຂະບວນການ FPIC (ດັ່ງທີ່ເຮັດຢູ່ແຂວງຫົວພັນ)

*ຂໍ້ມູນແຜນງານ*

- ທີມງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ເພື່ອສະໜັບສະໜູນທີ່ປຶກສາ
- ສະໜັບສະໜູນການຝຶກອົບຮົມສຳລັບ ສະຫະພັນແມ່ຍິງ ແລະ ແນວລາວສ້າງຊາດ
- ກອງປະຊຸມຖອດຖອນບົດຮຽນຂັ້ນແຂວງກ່ອນການທົບທວນກາງໄລຍະ ແລະ ກ່ອນການປະເມີນຜົນປິດໂຄງການ
- ຄ່າໃຊ້ຈ່າຍພະນັກງານໂຄງການຢ່າງຕໍ່ເນື່ອງ

**ຕົວຊີ້ວັດ (ລວມທັງເປົ້າໝາຍ ແລະວິທີການເກັບກຳຂໍ້ມູນ)**

- ບ້ານເປົ້າໝາຍໄດ້ຮັບຂໍ້ມູນ, ແລະ ກຳລັງຕັດສິນໃຈຢ່າງຈະແຈ້ງກ່ຽວກັບການມີສ່ວນຮ່ວມ, ດັ່ງທີ່ໄດ້ສະແດງຜ່ານເວັບໄຊທ໌ຖານຂໍ້ມູນ ການຕິດຕາມ ແລະ ປະເມີນຜົນ, ເຊິ່ງໄດ້ສ້າງຕັ້ງຂຶ້ນ ແລະ ຮັກສາໄວ້: ຂໍ້ມູນ FPIC ຂອງແຕ່ລະບ້ານສາມາດເບິ່ງໄດ້ຢູ່ໃນຖານຂໍ້ມູນເວັບໄຊທ໌ຂອງໂຄງການ.
- 100% ຂອງບ້ານໂດຍກິດຈະກຳທີ່ໄດ້ຮັບການຈັດຕັ້ງປະຕິບັດຂອງໂຄງການສາມາດສະແດງໃຫ້ເຫັນເຖິງການມີສ່ວນຮ່ວມໃນຂະບວນການ FPIC ໂດຍໄດ້ຮັບການເຫັນດີຈາກບ້ານຢ່າງກວ້າງຂວາງ.
- ໂຄງການສາມາດກຳນົດບ້ານທີ່ບໍ່ໄດ້ຮັບການຍິນຍອມສຳລັບກິດຈະກຳທີ່ຂຶ້ນກັບບ້ານ
- ກອງປະຊຸມຖອດຖອນບົດຮຽນຂັ້ນແຂວງກ່ອນການທົບທວນກາງສະໄໝ ແລະ ກ່ອນປິດໂຄງການ.
- ຢ່າງໜ້ອຍ 90% ຂອງຜູ້ເຂົ້າຮ່ວມໂຄງການ FPIC 1 ໃນບ້ານ, ທີ່ເຂົ້າຮ່ວມໂຄງການ ເຫັນດີກັບການເຂົ້າຮ່ວມໂຄງການ.

## 9.4. ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ກິດຈະກຳ 4: ການມີສ່ວນຮ່ວມຂອງສັງຄົມ

**ຈຸດປະສົງ**

| |
|---|
| **ຈຸດປະສົງຕົ້ນຕໍຂອງກິດຈະກຳນີ້ແມ່ນເພື່ອເຮັດໃຫ້ແນ່ໃຈວ່າທຸກກຸ່ມຄົນຂອງສັງຄົມໄດ້ຖືກລວມເຂົ້າໃນການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກິດຈະກຳຂອງໂຄງການ ໃນວິທີການມີສ່ວນຮ່ວມ ແລະ ທົດທາງລວມ.** |

ກິດຈະກຳນີ້ປະກອບມີ:

- ການເປັນຕົວແທນທີ່ເປັນທຳຂອງຊົນເຜົ່າສ່ວນໜ້ອຍໃນການຕັດສິນໃຈ.
- ການສົ່ງເສີມ ແລະ ການບັງຄັບໃຊ້ຄວາມດຸ່ນດ່ຽງລະຫວ່າງຍິງ-ຊາຍ ໃນທຸກກິດຈະກຳ.
- ການລວມກຸ່ມສັງຄົມທັງໝົດ.
- ການຫຼີກລ່ຽງປະເພດຄວາມຮຸນແຮງທາງເພດ, ລວມທັງການຂູດຮີດທາງເພດ, ການຂົ່ມເຫັງທາງເພດ ແລະ ການລ່ວງລະເມີດທາງເພດ (SEAH).
- ການເຂົ້າເຖິງຕະຫຼາດຂອງທຸກກຸ່ມແບບຍຸຕິທຳ ແລະ ເທົ່າທຽມກັນ (ແມ່ຍິງ, ຊົນເຜົ່າ, ຄົນທຸກຍາກ).
- ຄວາມເຂົ້າໃຈກ່ຽວກັບໂຄງການໂດຍກຸ່ມຊົນເຜົ່າທີ່ບໍ່ເວົ້າພາສາລາວ.
- ເຄົາລົບປະເພນີ ແລະ ຄຸນຄ່າຂອງຊົນເຜົ່າ.

- ສະຖານທີ່ມໍລະດົກວັດທະນະທຳບໍ່ໄດ້ຮັບຜົນກະທົບຈາກກິດຈະກຳຂອງໂຄງການ.

**ຄວາມເປັນມາຂອງແນວຄວາມຄິດ**

**ແນວຄວາມຄິດໂດຍລວມ**

ການສ້າງກິດຈະກຳຂອງສັງຄົມມີສ່ວນຮ່ວມມີຈຸດປະສົງເພື່ອໃຫ້ແນ່ໃຈວ່າທຸກກຸ່ມສັງຄົມມີສ່ວນຮ່ວມໃນກິດຈະກຳຂອງໂຄງການ I-GFLL ຢ່າງມີສ່ວນຮ່ວມ ແລະ ຄວບຄຸມ ແລະ ດັ່ງນັ້ນຈຶ່ງຫຼີກເວັ້ນການຍົກເວັ້ນບາງກຸ່ມສັງຄົມ, ໂດຍສະເພາະແມ່ນກຸ່ມທີ່ດ້ອຍໂອກາດ. ກຸ່ມເຫຼົ່ານີ້ສາມາດເປັນ: ຊົນເຜົ່າ[6], ແມ່ຍິງ ແລະ ຜູ້ຊາຍ (ລວມທັງແມ່ຍິງເປັນຫົວໜ້າ), ຄອບຄົວທຸກຍາກ.

ການມີສ່ວນຮ່ວມທາງສັງຄົມໃນລະດັບບ້ານແມ່ນວິທີດຽວທີ່ມີປະສິດທິພາບໃນການມີສ່ວນຮ່ວມຢ່າງພຽງພໍກັບບ້ານ ແລະ ຮັບປະກັນການມີສ່ວນຮ່ວມແບບຍືນຍົງ. ມັນເປັນຂະບວນການທີ່ປະຕິບັດຕໍ່ໄປ ແລະສືບຕໍ່ຕະຫຼອດໄລຍະຮອບວຽນໂຄງການທັງຫມົດ, ໂດຍເລີ່ມຕົ້ນທີ່ FPIC ແລະສິ້ນສຸດລົງດ້ວຍການປະເມີນຜົນສຸດທ້າຍ.

ຫຼັກການຕໍ່ໄປນີ້ແມ່ນຖືກນຳໃຊ້ໃນໂຄງການສຳລັບສັງຄົມມີສ່ວນຮ່ວມ:

- ສະໜອງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງ ແລະພຽງພໍໃຫ້ທັນເວລາ ທີ່ສາມາດເຂົ້າໃຈໄດ້ ແລະສາມາດເຂົ້າເຖິງຜູ້ໄດ້ຮັບຜົນກະທົບ;
- ແມ່ນດຳເນີນຢູ່ໃນບັນຍາກາດທີ່ບໍ່ມີການຂົ່ມຂູ່ ຫຼື ການບີບບັງຄັບ;
- ລວມເອົາບົດບາດຍິງຊາຍ ແລະ ຕອບສະໜອງ ແລະ ເໝາະສົມກັບຄວາມຕ້ອງການຂອງກຸ່ມຄົນດ້ອຍໂອກາດ ແລະ ມີຄວາມສ່ຽງ;
- ລວມເອົາທັດສະນະທີ່ກ່ຽວຂ້ອງທັງໝົດ ແລະ ຄວາມຮູ້ (ແບບດັ້ງເດີມ) ຂອງຜູ້ໄດ້ຮັບຜົນກະທົບ ແລະ ພາກສ່ວນກ່ຽວຂ້ອງອື່ນໆເຂົ້າໃນການຕັດສິນໃຈ, ເຊັ່ນ: ການອອກແບບໂຄງການ, ມາດຕະການຫຼຸດຜ່ອນ, ການແບ່ງປັນຜົນປະໂຫຍດ ແລະ ໂອກາດຂອງການພັດທະນາ, ແລະ ບັນຫາການຈັດຕັ້ງປະຕິບັດ[7];
- ເຄົາລົບ ແລະ ເສີມຂະຫຍາຍສິດຂອງຊົນເຜົ່າຕໍ່ດິນແດນ, ຂອບເຂດ ແລະ ຊັບພະຍາກອນ ແລະ ສິດທີ່ກ່ຽວຂ້ອງກັບມໍລະດົກທາງວັດທະນະທຳ ແລະ ຈິດໃຈ, ຄວາມຮູ້ພື້ນເມືອງ, ລະບົບການຄຸ້ມຄອງຊັບພະຍາກອນ ແລະ ການປະຕິບັດ , ອາຊີບ ແລະ ການດຳລົງຊີວິດ, ສະຖາບັນຮີດຄອງປະເພນີ ແລະ ສະຫວັດດີການລວມ;
- ຮັບຮູ້ສິດທິ ແລະ ຫຼັກການສາກົນທີ່ສຳຄັນ, ລວມທັງຫຼັກການທີ່ໄດ້ກຳນົດໄວ້ໃນ ຖະແຫຼງການສະຫະປະຊາຊາດກ່ຽວກັບສິດທິຂອງຄົນພື້ນເມືອງ (UNDRIP) ແລະ ເຄື່ອງມືສາກົນ ແລະ ພາກພື້ນອື່ນໆທີ່ກ່ຽວຂ້ອງເຖິງສິດທິຂອງຊົນເຜົ່າພື້ນເມືອງ ແລະ ບຸກຄົນ ລວມທັງ, ບ່ອນທີ່ນຳໃຊ້ແຕ່ບໍ່ຈຳກັດ, ສົນທິສັນຍາອົງການແຮງງານສາກົນ (ILO) ສະບັບເລກທີ 169, ສົນທິສັນຍາສາກົນວ່າດ້ວຍສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ ແລະ ສົນທິສັນຍາສາກົນວ່າດ້ວຍການລົບລ້າງທຸກຮູບການຈຳແນກເຊື້ອຊາດ ທີ່ ສປປ ລາວ ເປັນພາຄີ; ພິຈາລະນາປັດໄຈ

[6] According to the EGDP, p. 15, ethnic groups are defined as follows: These ethnic groups meet the eligibility criteria of World Bank's and GCF's indigenous peoples, which can be identified by the following characteristics:
• Self-identification as members of a distinct indigenous social and cultural group and recognition of this identity by others.
• Collective attachment to geographically distinct habitats, ancestral territories, or areas of seasonal use or occupation as well as to the natural resources in these habitats and territories.
• Customary cultural, economic, social, or political systems that are distinct or separate from those of the mainstream society or culture; and
• A distinct language or dialect, often different from the official language or languages of the country or region in which they reside. This includes a language or dialect that has existed but does not exist now due to impacts that have made it difficult for a community or group to maintain a distinct language or dialect.

[7] https://www.adb.org/sites/default/files/institutional-document/32056/safeguard-policy-statement-june2009.pdf

ທາງດ້ານເພດ, ຊົນເຜົ່າ ແລະ ເສດຖະກິດ-ສັງຄົມ ທີ່ສາມາດຈຳກັດຄວາມສາມາດໃນການມີສ່ວນຮ່ວມໃນລະດັບທ້ອງຖິ່ນໃນທຸກກິດຈະກຳໂຄງການ; ແລະ

- ປະນາມຄວາມຮຸນແຮງທາງເພດ (SEAH) ທີ່ເກີດຂຶ້ນໃນສະພາບການ ຫຼືຍ້ອນໂຄງການ.

ດັ່ງນັ້ນ, ກິດຈະກຳກ່ຽວກັບສັງຄົມມີສ່ວນຮ່ວມກວມເອົາຂໍ້ກຳນົດໂດຍເອກະສານທີ່ກ່ຽວຂ້ອງຈຳນວນໜຶ່ງຄື:

- ບົດແນະນຳກ່ຽວກັບຄົນພື້ນເມືອງ ຂອງກອງທຶນດິນຟ້າອາກາດສີຂຽວ (GCF)
- ແຜນພັດທະນາກຸ່ມຊົນເຜົ່າ ຂອງໂຄງການ I-GFLL
- ແຜນປະຕິບັດງານບົດບາດຍິງຊາຍ
- ນະໂຍບາຍ ກອງທຶນດິນຟ້າອາກາດສີຂຽວ (**GCF**) ກ່ຽວກັບການປ້ອງກັນ ແລະປົກປ້ອງຈາກການຂູດຮີດທາງເພດ, ການລ່ວງລະເມີດທາງເພດ, ແລະການຂົ່ມເຫັງທາງເພດ (SEAH). (ເບິ່ງກິດຈະກຳ 2, ເຊື່ອມໂຍງເຂົ້າໃນກອບການຝຶກອົບຮົມ ແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP)

*ຜົນກະທົບທາງລົບທີ່ບໍ່ໄດ້ຕັ້ງໃຈ*

ກິດຈະກຳຂອງສັງຄົມມີສ່ວນຮ່ວມນີ້ມີຈຸດປະສົງເພື່ອຮັບປະກັນວ່າ ເປັນຜົນມາຈາກກິດຈະກຳຂອງໂຄງການ, ຄວາມຂັດແຍ້ງລະຫວ່າງກຸ່ມສັງຄົມໄດ້ຖືກຫລີກລ້ຽງ, ທັດສະນະ ແລະປະສົບການຂອງປະຊາກອນທັງໝົດບ້ານຖືກພິຈາລະນາ ແລະຮັບປະກັນວ່າກຸ່ມທີ່ຖືກຍົກເວັ້ນເຂົ້າຮ່ວມໃນກິດຈະກຳຂອງໂຄງການ. ຄວາມແຕກຕ່າງຂອງພາສາ ແລະວັດທະນະທຳສາມາດສ້າງຄວາມເຂົ້າໃຈຜິດ ແລະຫຼຸດຜ່ອນການຮ່ວມມື ແລະການມີສ່ວນຮ່ວມໃນໂຄງການ.

ໂຄງການດັ່ງກ່າວຍັງຕ້ອງຫຍໍ້ລົງ, ຫຼຸດຜ່ອນ ແລະ ຊົດເຊີຍໃຫ້ເໝາະສົມ ເມື່ອກິດຈະກຳໂຄງການສົ່ງຜົນກະທົບຕໍ່ສິດຂອງປະຊາຊົນບັນດາເຜົ່າ, ບໍ່ວ່າຈະເປັນການຮັບຮູ້ໃບຕາດິນ, ຊັບພະຍາກອນ ແລະ ດິນແດນຕາມກົດໝາຍ. ນີ້ສາມາດກ່ຽວຂ້ອງກັບສະຖານທີ່ມໍລະດົກທາງວັດທະນະທຳຫຼືການປະຕິບັດທີ່ກ່ຽວຂ້ອງກັບການນຳໃຊ້ທີ່ດິນບາງຢ່າງທີ່ໄດ້ຮັບຜົນກະທົບຈາກການວາງແຜນການນຳໃຊ້ທີ່ດິນ[8]. ຖ້າໂຄງການສະໜັບສະໜູນກິດຈະກຳທີ່ອາດສາມາດຈຳກັດການນຳໃຊ້ພູມໄມ້ຂອງປະຊາຊົນພື້ນເມືອງເພື່ອປູກຝັງໃນເຂດເນີນສູງໃນອະນາຄົດ, ຈະຕ້ອງມີການປຶກສາຫາລືເພື່ອຮັບປະກັນວ່າໄດ້ດຳເນີນວຽກງານ FPIC ແລ້ວ. ບັນຫາເຫຼົ່ານີ້ອາດຈະເກີດຂຶ້ນອັນເປັນຜົນມາຈາກຄວາມລົ້ມເຫລວໃນການຮັບຮູ້ພື້ນທີ່ທີ່ມີຄຸນຄ່າທາງດ້ານວັດທະນະທຳ.

ນອກຈາກນີ້ຍັງມີຄວາມສ່ຽງຕໍ່ການມີສ່ວນຮ່ວມ ແລະຜົນປະໂຫຍດທີ່ບໍ່ເທົ່າທຽມກັນ, ຕົວຢ່າງ, "ການຈັບຕົວຜູ້ສູງອາຍຸ" ຕາມທີ່ເຫັນໃນເອກະສານແຜນງານການຫຼຸດຜ່ອນທາດອາຍເຮືອນແກ້ວ (ERPD). ອັນນີ້ຕ້ອງໄດ້ຮັບການແກ້ໄຂໃນສະພາບການທີ່ຄົນທຸກຍາກເປັນກຸ່ມທີ່ມີຄວາມສ່ຽງຫຼາຍທີ່ສຸດ, ມີຂອບເຂດໜ້ອຍສຳລັບການທົດລອງກິດຈະກຳໃໝ່, ດ້ອຍໂອກາດໃນການເຂົ້າເຖິງລັດ ຫຼືການບໍລິການໂຄງການອັນເນື່ອງມາຈາກ ຕົວຢ່າງ: ໄລຍະທາງ, ຄວາມທຸກຍາກ, ພາສາ, ລະດັບການສຶກສາ, ແລະອື່ນໆ.

[8] Another of the GCF Policy objectives in relation to land states: To promote and respect indigenous peoples' rights to own, use, develop and control the lands, territories, and resources that they possess by reason of traditional ownership or other traditional occupation or use, as well as those that they have otherwise acquired. This, of course, relates to respect for ethnic peoples' management of lands and resources, including their traditional knowledge in this management.

**ບັນດາແຜນພັດທະນາກຸ່ມຊົນເຜົ່າ ແລະ ບົດບາດຍິງຊາຍ**[9] ເຖິງແມ່ນວ່າມີຄວາມຈໍາເປັນສໍາລັບການຊີ້ໃຫ້ເຫັນຄວາມສ່ຽງ ແລະ ຍຸດທະສາດການຫຼຸດຜ່ອນສາມາດສະແດງຜົນໃນການເຊື່ອມໂຍງບັນດາກິດຈະກໍາເຫຼົ່ານີ້ໜ້ອຍພາຍໃນໂຄງສ້າງໂດຍລວມຂອງໂຄງການຍ້ອນບັນດາເອກະສານເຫຼົ່ານີ້ໄດ້ຖືກພິຈາລະນາໃນເອກະສານທີ່ແຍກອອກຕ່າງຫາກ.

ຄວາມກົດດັນທັງເວລາ, ຈາກການວາງແຜນ ແລະການປຶກສາຫາລືກັບການຈັດຕັ້ງປະຕິບັດ, ບໍ່ສາມາດເຮັດໃຫ້ຜູ້ເຂົ້າຮ່ວມສາມາດຊຶມຊັບ, ພິຈາລະນາ, ຕັ້ງຄໍາຖາມ ແລະຕອບສະໜອງ ຕໍ່ຂໍ້ມູນທີ່ໄດ້ສະໜອງໃຫ້ເທົ່າທີ່ຄວນ.

"ເຣດ+ ສົ່ງເສີມການປົກປັກຮັກສາ ແລະ ຄຸ້ມຄອງປ່າໄມ້ອາດຈະເພີ່ມຄວາມກົດດັນຕໍ່ກຸ່ມຊົນເຜົ່າ, ໂດຍສະເພາະໃນເລື່ອງການເຂົ້າເຖິງ ແລະ ນໍາໃຊ້ທີ່ດິນ ພ້ອມຜະລິດຕະພັນໄມ້ຂອງເຂົາເຈົ້າ. ດັ່ງນັ້ນ ແຜນພັດທະນາກຸ່ມຊົນເຜົ່າ (EGDP) ນີ້ຈຶ່ງຢືນຢັນວ່າ ເພື່ອຄຸ້ມຄອງຄວາມສ່ຽງທີ່ກ່າວມາຂ້າງເທິງນັ້ນ, ມາດຕະການພິເສດກ່ຽວກັບການນໍາໃຊ້ທີ່ດິນ ແລະ ປ່າໄມ້ຕາມຮີດຄອງປະເພນີ ໄດ້ຖືກລວມເຂົ້າໃນຂະບວນການການສ້າງຄວາມເຫັນດີເຫັນພ້ອມດ້ວຍຄວາມຕື່ນຕົວສະໝັກໃຈໂດຍໄດ້ຮັບຂໍ້ມູນລ່ວງໜ້າ (FPIC), ການວາງແຜນນໍາໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP), ຍຸດທະສາດຂອງສັງຄົມມີສ່ວນຮ່ວມ, ການວາງແຜນຄຸ້ມຄອງປ່າໄມ້ບ້ານ (VFMP) ແລະ ມາດຕະການປ້ອງກັນອື່ນໆທີ່ລະບຸໄວ້ໃນແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP). ໂຄງການຈະຮັບປະກັນໃຫ້ບັນດາຊົນເຜົ່າບໍ່ຫ່າງເຫີນອອກຈາກປ່າເດີມຂອງຕົນ ແລະ ສາມາດເຂົ້າຮ່ວມ ແລະ ເປັນສ່ວນໜຶ່ງໃນການອອກແບບ, ການປະຕິບັດ ແລະ ການຕິດຕາມກວດກາການເຄື່ອນໄຫວຂອງໂຄງການ." (EGDP, ໜ້າ 20)

ບັນທຶກກ່ຽວກັບຄວາມສ່ຽງເພີ່ມເຕີມທີ່ໄດ້ກ່າວມາໃນແຜນພັດທະນາກຸ່ມຊົນເຜົ່າ (EGDP): ບັນຫາກ່ຽວກັບການຍົກຍ້າຍທີ່ອາດຈະຖືກຄຸ້ມຄອງພາຍໃຕ້ກິດຈະກໍາ 5. ບັນຫາກ່ຽວກັບການນໍາໃຊ້ສານເຄມີແມ່ນກວມຢູ່ກິດຈະກໍາ 6 ແລະ 7.

*ຄວາມສ່ຽງພາຍນອກ*
ດ້ານສັງຄົມມີສ່ວນຮ່ວມແມ່ນຄວາມສ່ຽງພາຍໃນໂຄງການຢ່າງດ່ຽວ ແລະບໍ່ລວມເອົາຄວາມສ່ຽງພາຍນອກໃດໆ
ເບິ່ງພາກ 5.3.1, 5.3.2 ແລະ 5.3.3 ຂອງ ເອກະສານປະເມີນຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ (ESIA)

**ຂະບວນການຄຸ້ມຄອງການປົກປ້ອງ**
**ກອບການປົກປ້ອງຕົ້ນຕໍ**

| *ດ້ານການປົກປ້ອງ* | *ການຫຼຸດຜ່ອນລ່ວງໜ້າ* | *ການຕິດຕາມ (+ ແຫຼ່ງຂໍ້ມູນ)* | *ການຫຼຸດຜ່ອນ* |
|---|---|---|---|
| **ການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ** | ໃນທຸກກິດຈະກໍາທີ່ກ່ຽວຂ້ອງຂອງໂຄງການ, ຜູ້ຊາຍ ແລະ ແມ່ຍິງຈາກທຸກຊົນເຜົ່າຕ້ອງໄດ້ຮັບເຊີນເຂົ້າຮ່ວມຢ່າງຊັດເຈນ. ສິ່ງນີ້ຈໍາເປັນຕ້ອງໄດ້ກ່າວເຖິງໃນບົດແນະນໍາທີ່ກ່ຽວຂ້ອງທັງຫມົດ (ເຊັ່ນ: PFIC, PLUP, | ລາຍຊື່ຜູ້ເຂົ້າຮ່ວມຂອງກອງປະຊຸມບ້ານຈໍາເປັນຕ້ອງປະກອບຂໍ້ມູນກ່ຽວກັບຊົນເຜົ່າໃນກອງປະຊຸມ. | ຂະບວນການຄັດເລືອກບ້ານຕ້ອງເລືອກບ້ານທີ່ບໍ່ແມ່ນລາວລຸ່ມເພື່ອເປັນຕົວແທນຂອງອັດຕາສ່ວນຂັ້ນທ້ອງຖິ່ນຂອງຈໍານວນປະຊາກອນຊົນເຜົ່າ. ຖ້າບໍ່ໄດ້ຮັບຄວາມດຸ່ນດ່ຽງດ້ານຊົນເຜົ່າ, ບັນຫາຈະຖືກຍົກຂຶ້ນມາໃຫ້ |

[9] The Ethnic Group Development Plan (EGDP) is the equivalent to the Indigenous People's Development Plan (IPP). In Lao PDR, the term "ethnic groups" is generally used to refer to what in other contexts is called "indigenous people".

| | | | |
|---|---|---|---|
| | VFMP) | | ໂຄງການ (ຕາມແຕ່ລະກໍລະນີ) |
| **ຄວາມດຸ່ນດ່ຽງທາງເພດ** | ໃນທຸກກິດຈະກຳທີ່ກ່ຽວຂ້ອງໂດຍໂຄງການ, ຄວາມດຸ່ນດ່ຽງລະຫວ່າງຍິງຊາຍຕ້ອງໄດ້ຮັບການສົ່ງເສີມ ແລະ ບັງຄັບໃຊ້. | ລາຍຊື່ຜູ້ເຂົ້າຮ່ວມຂອງກອງປະຊຸມບ້ານຈຳເປັນຕ້ອງມີຂໍ້ມູນກ່ຽວກັບເພດໃນກອງປະຊຸມ. ຂໍ້ມູນເພດແມ່ນຈະໄດ້ຮັບການວິເຄາະສຳລັບບັນດາຊົນເຜົ່າທີ່ສຳຄັນເພື່ອໃຫ້ແນ່ໃຈວ່າມີຄວາມສົມດູນທາງເພດຂອງທຸກຊົນເຜົ່າທີ່ສຳຄັນ. | ຖ້າຄວາມດຸ່ນດ່ຽງລະຫວ່າງຍິງຊາຍບໍ່ຖືກເຄົາລົບ, ບັນຫາຈະຖືກຍົກຂຶ້ນມາໃຫ້ໂຄງການ (ຕາມແຕ່ລະກໍລະນີ) |
| **ສັງຄົມມີສ່ວນຮ່ວມ** | ໃນທຸກໆກິດຈະກຳທີ່ກ່ຽວຂ້ອງໂດຍໂຄງການ, ການລວມເອົາທຸກກຸ່ມສັງຄົມຕ້ອງໄດ້ຮັບການສົ່ງເສີມ. | ບັນຊີລາຍການກວດແຜນຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ (ESMP) ມອບໃຫ້ຜູ້ຈັດຕັ້ງປະຕິບັດ ແລະຖືກທົບທວນຄືນເປັນ "ການເຕືອນໃຈ" ກ່ອນການປະຕິບັດຂອງບ້ານທັງໝົດໄດ້ກ່າວເຖິງຄວາມຕ້ອງການທີ່ພະຍາຍາມ ແລະລວມເອົາ "60% ຂອງຄົວເຮືອນທີ່ທຸກຍາກທີ່ສຸດ" ໃນກອງປະຊຸມ (ຕົວເລກຈາກເອກະສານ ESIA). | ຖ້າຫາກມີຫຼັກຖານສະແດງໃຫ້ເຫັນວ່າການລວມຄອບຄົວທຸກຍາກທີ່ສຸດແມ່ນບໍ່ໄດ້ຮັບການເຄົາລົບ, ບັນຫາດັ່ງກ່າວຈະຖືກຍົກຂຶ້ນມາໃຫ້ໂຄງການ (ຕາມແຕ່ລະກໍລະນີ) |
| **ການຂູດຮີດທາງເພດ, ການໃຊ້ຄວາມຮຸນແຮງທາງເພດ, ການລ່ວງລະເມີດທາງເພດ** | ຫຼັກຈັນຍາບັນສາມາດແກ້ໄຂໄດ້ພາຍໃນແຕ່ລະສັນຍາທີ່ກ່ຽວຂ້ອງກັບໂຄງການສຳລັບຜູ້ຈັດຕັ້ງປະຕິບັດໂຄງການ, ຊາວບ້ານ (ໃນຖານະຜູ້ອອກແຮງງານ) ແລະ ຄູ່ຮ່ວມທຸລະກິດ. | ກົນໄກແກ້ໄຂຄຳຮ້ອງທຸກ (GRM) ສາມາດໃຊ້ສຳລັບການຮ້ອງທຸກແບບນີ້. ເງື່ອນໄຂສຳລັບຄຳຮ້ອງທຸກທີ່ມີສິດ ແລະການຍົກເວັ້ນບໍ່ລວມເອົາການຮ້ອງທຸກທີ່ກ່ຽວຂ້ອງກັບການຂູດຮີດທາງເພດ, ການໃຊ້ຄວາມຮຸນແຮງທາງເພດ, ການລ່ວງລະເມີດທາງເພດ (SEAH). | ເປັນເລື່ອງທີ່ລະອຽດອ່ອນຫຼາຍ, ທຸກການຮ້ອງທຸກກ່ຽວກັບການຂູດຮີດທາງເພດ, ການໃຊ້ຄວາມຮຸນແຮງທາງເພດ, ການລ່ວງລະເມີດທາງເພດ (*SEAH)* ຈະຖືກປະເມີນເປັນແຕ່ລະກໍລະນີ ແລະ ຄວາມຍຸຕິທຳຂອງລາວສາມາດນຳມາພິຈາລະນາໄດ້ຫາກມີຄວາມຈຳເປັນ |
| | ແຜນການຂອງຄວາມຮູ້ສຶກ / ການປູກຈິດສຳນຶກກ່ຽວກັບການຂູດຮີດທາງເພດ, ການໃຊ້ຄວາມຮຸນແຮງທາງເພດ, ການລ່ວງລະເມີດທາງເພດ (SEAH) ສາມາດຈັດຂຶ້ນຢູ່ໃນບ້ານ ແລະ ເມືອງ. | | |

| | | | |
|---|---|---|---|
